ຂ້ທີ ສ, ແມ່ນການລົບລ້າງຄວາມແຕກຕ່າງກັນຢູ່ໃນ ປະລິ ມານ ແລະ ຄຸນນະພາບຂອງວຽກງານຂອງຊາວຜູ້ອອກແຮງ-ງານ. ກ.ມາກ ແລະ ອ.ອິ.ເລນິນ ຂຽນໄວ້ວ່າ ຢູ່ໃນ ລະ ບອບສັງຄົມນິຍົມ ການນຳໃຊ້ຫລັກການສັງຄົມນິຍົມ ໃນການ ຈ່າຍເງິນເດືອນຕາມປະລິມານຂອງແຮງງານນັ້ນມັນໝາຍ - ເຖິງການຮັກສາ ຄວາມບໍ່ສະເໝີພາບທາງດ້ານວັດຖຸ ລະ ຫວ່າງຄົນເຮົາດ້ວຍກັນຢ່າງຫລີກລ່ຽງບໍ່ໄດ້. ຄວາມບໍ່ສະເໝີ ພາບດັ່ງກ່າວນີ້ ຈະລົບລ້າງໃຫ້ສູນຫາຍໄປໄດ້ ພຽງແຕ່ຢູ່ ໃນ ເງື່ອນໄຂຂອງລະບອບກອມມູນິດທີ່ສົມບູນແລ້ວເທົ່ານັ້ນ ຫລັງຈາກ ແຮງງານໃຫ້ກາຍເປັນຄວາມຮຽກຮ້ອງຕ້ອງການອັນດັບ ໜຶ່ງ ປະຈຳຊີວິດ ແລະ ຫລັງຈາກການລົບລ້າງຊົນຊັ້ນຕ່າງໆ.

ສະນັ້ນ ພວກເຮົາຈະເຫັນວ່າ ຈາກສາຍຕາ ການເບິ່ງ ຂອງຊົນຊັ້ນກຳມະກອນຂອງບັນດາປະເທດສັງຄົມນິຍົມນັ້ນ ບັນ ຫາການລົບລ້າງຊົນຊັ້ນຕ່າງໆແມ່ນເປັນໃຈກາງຂອງບັນຫາທັງ ໝົດເພື່ອບັນລຸເຖິງຄວາມສະເໝີພາບໂດຍສົມບູນ ທາງດ້ານ ສັງຄົມ. ແຕ່ວ່າຄຽງຄູ່ກັບປັດໄຈຕົ້ນຕໍເຫລົ່ານັ້ນມັນຍັງມີລະດັບ ຂອງຄວາມບໍ່ສະເໝີພາບທາງດ້ານສັງຄົມນາໆປະເພດ ນຳ ອີກ. ມີແຕ່ທຳການລົບລ້າງໝົດທຸກລະດັບດັ່ງກ່າວໃຫ້ສົມເຊິ່ງ ລົງເທົ່ານັ້ນ ຈຶ່ງຈະສາມາດນຳເອົາມວນມະນຸດໄປສູ່ຄວາມສະ

ເໜີພາບທາງດ້ານສັງຄົມໄດ້ຢ່າງສົມບູນ.

ແຕ່ວ່າ ເພື່ອຈະບັນລຸເຖິງສິ່ງດັ່ງກ່າວນັ້ ນັ້ນຕ້ອງໃຊ້ໄລ ຍະເວລາອັນສັບສົນຍືດເຍື້ອຍາວນານທີ່ເຕັມໄປດ້ວຍຂໍ້ຂັດແຍ່ງ ກັນ. ຄວາມຝັນຂອງພວກນັກປະຕິວັດຫລາຍໆຄົນ ທີ່ວ່າ ຫລັງ ຈາກໄຊຊະນະຂອງການປະຕິວັດສັງຄົມນິຍົມແລ້ວ ບັນຫາຕ່າງ ຕ່າງຂອງຄວາມສະເໜີພາບ ແລະ ຄວາມບໍ່ສະເໜີພາບຈະ ໄດ້ຖືກແກ້ໄຂຢ່າງອັດຕະໂນມັດໃນທັນທີທັນໃດໂລດ ນັ້ນແມ່ນ ຄວາມຝັນທີ່ໄຮ້ເຫດຜົນ. ພາລະບົດບາດອັນໃຫຍ່ຫລວງ ຂອງ ໄຊຊະນະດັ່ງກ່າວນັ້ນ ມີຢູ່ບ່ອນວ່າ ຖ້າບໍ່ມີໄຊຊະນະ ກໍບໍ່ມີ ຄວາມຫວັງຫຍັງເລີຍ ທີ່ຈະຕັ້ງບັນຫານັ້ນຂຶ້ນໄດ້. ພ້ອມດຽວ-ກັນນັ້ ການປະຕິວັດເອງກໍເປັນພຽງບາດກ້າວທຳອິດທີ່ເດີນໄປ ສູ່ເສັ້ນທາງແຫ່ງຄວາມສະເໜີພາບຂອງຄົນເຮົາ ຍ້ອນວ່ານັ້ນ ທຳລາຍລົບລ້າງພື້ນຖານອັນສຳຄັນຂອງຄວາມບໍ່ສະເໜີ ພາບ ເຊັ່ນ: ລົບລ້າງກຳມະສິດສ່ວນຕົວຕໍ່ພາຫະນະການຜະລິດ, ລົບ ລ້າງການກົດຂີ່ຂູດຮີດຄົນຕໍ່ຄົນ.

ຈາກນັ້ນ ກໍຈະເລີ່ມເສັ້ນທາງເດີ່ນທີ່ຍາວໄກ, ຫຍຸ້ງຍາກ ສັບສົນໃນການລົບລ້າງໝົດທຸກຮ່ອງຮອຍຄວາມບໍ່ສະເໜີພາບ ທາງດ້ານສັງຄົມໄປເທື່ອລະກ້າວ. ຢູ່ໃນ ສສສຊ ເປັນເວລາ ກວ ປີຜ່ານມາແລ້ວ ທີ່ພວກເຮົາໄດ້ ພາກັນກ້າວເດີນໄປຕາມ ເສັ້ນທາງດັ່ງກ່າວນັ້ ສາມາດເວົ້າໄດ້ວ່າ ມີຫລາຍດ້ານ ທີ່ ພວກເຮົາໄດ້ແກ້ໄຂບັນຫາການບັນລຸເຖິງໜາກຜົນແຫ່ງຄວາມ ສະເໜີພາບໂດຍສົມບູນທາງດ້ານສັງຄົມ ແຕ່ໃນເວລາ ດຽວ ກັນພວກເຮົາຍັງມີຫລາຍບັນຫາທີ່ຄ້າງແກ້ບໍ່ຕົກໃນປະຈຸບັນ.

ພວກເຮົາເຊື່ອໝັ້ນວ່າ ເພື່ອນນັກອ່ານຄົນລາວ ຄົງຈະມີ
ຄວາມສົນໃຈຢາກຮູ້ຈັກກັບບົດຮຽນຂອງ ສສສຊ ກໍຄື ຂອງບັນ
ດາປະເທດສັງຄົມນິຍົມອື່ນໆ ໃນການແກ້ໄຂ ບັນຫາການລົບ
ລ້າງຄວາມບໍ່ສະເໝີພາບທາງດ້ານສັງຄົມ ເປັນລ້ຳດັບມາ.
ກ່ອນຈະເລົ່າເຖິງບັນຫາດັ່ງກ່າວນີ້ ຕ້ອງໄດ້ເລີ່ມຈາກສະໄໝ
ຂ້າມຜ່ານຈາກລະບອບທຶນນິຍົມ ໄປສູ່ລະບອບສັງຄົມນິຍົມ ຜຸ້ນ
ມາ.

ພາກສອງ

ສະໄໝອານຜານແລະ
ຄວາມສະເໝີພາບທາງດ້ານສັງຄົມ

ການປະຕິວັດສັງຄົມນິຍົມ ແມ່ນການເລີ່ມຕົ້ນ ຂອງການ ຂ້າມຜ່ານໄປສູ່ຄວາມສະເໝີພາບອັນແທ້ຈິງ. ຢູ່ໃນແຕ່ລະປະ ເທດ ປະຊາຊົນຊົນຊັ້ນກຳມະກອນ ຮ່ວມກັບຊາວໄຮ່ນາ ຜູ້ ອອກແຮງງານ, ພວກນາຍຊ່າງຫັດຖະກຳ, ພວກປັນຍາ ຊົນ ເປັນຜູ້ເຮັດການປະຕິວັດ.

ເປັນຫຍັງຊາວກຳມາຊີບຈຶ່ງເປັນຜູ້ນຳຂອງການປະຕິວັດ, ເປັນຫຍັງຈຶ່ງແມ່ນເຂົາເປັນຜູ້ນຳພາກຸ່ມຂອງຊາວຜູ້ອອກແຮງ-ງານທັງໝົດອື່ນໆ ? ກໍເພາະວ່າ ເຂົາເອງບໍ່ມີຫຍັງ ຈະສູນ ເສຍ ນອກຈາກເຂົາຈະຖືກປົດປ່ອຍອອກຈາກໂສ້ລ່າມເທົ່ານັ້ນ. ເຂົາບໍ່ມີພາຫະນະການຜະລິດໃດໆທັງສິ້ນ ເຊັ່ນໂຮງຈັກ, ໂຮງ ງານ, ໂຮງຂຸຍມ, ພາຫະນະຂົນສົ່ງ, ທົ່ດນ ແລະ ອື່ນໆ , ສະຫລຸບໄດ້ວ່າ ເຂົາບໍ່ຫອນຈະສູນເສຍທັງສິ້ງເຫລົ່ານັ້ນໄດ້ . ນອກຈາກນັ້ ການໂຄ່ນລົ້ມລະບອບທຶນນິຍົມນັ້ນ ແມ່ນ ທຶນທາງ ດຽວທີ່ຈະປົດປ່ອຍອອກຈາກການກົດຂີ່ຂູດຮີດ, ອອກຈາກການ ເຮັດວຽກໃຫ້ຜູ້ອື່ນກິນ, ເພື່ອປັບປຸງສະພາບການເປັນຢູ່ ທາງ

ດ້ານວັດຖຸໃຫ້ດີຂຶ້ນ. ແມ່ນອນຄາວຢູ່ໃນລະບອບສັງຄົມເກົ່າຄັ້ງ ກ່ອນ ການຕໍ່ສູ້ແບບຮູບການນັດຢຸດງານອາດສາມາດນຳໄປ ສູ່ ການຍົກລັດຕາຄ່າຈ້າງຂຶ້ນຕື່ມ, ປັບປຸງເງື່ອນໄຂແຮງງານ , ຫລຸດຜ່ອນວັນທຳງານ ໃນຊ່ວໄລຍະເວລາໃດໜຶ່ງເທົ່ານັ້ນ . ແຕ່ວ່າ ຂໍ້ທີໜຶ່ງ, ຜົນຮັບທີ່ໄດ້ມາເຫລົ່ານັ້ນ ລ້ວນແຕ່ມີ ລັກ ສະນະຊົ່ວຄາວ, ພວກນາຍທຶນມີຄວາມສະຫລາດພຽງພໍ ທີ່ຈະ ກຳຈັດຜົນຮັບເຫລົ່ານັ້ນໄດ້ຢ່າງໄວທີ່ສຸດ ດ້ວຍວິທີການຂຶ້ນ - ເພີ່ມທະວີການຕີດຂູດຮີດ, ດ້ວຍວິທີການຂຶ້ນລົ້ນນຳເໜືອ ນຳ ແຮງຂອງກຳມະກອນໃຫ້ຫລາຍຍິ່ງກວ່າເກົ່າ. ຂໍ້ທີສອງ, ນັ້ນ ແມ່ນພຽງແຕ່ການຕໍ່ສູ້ເພື່ອປັບປຸງເງື່ອນໄຂການຂາຍແຮງງານ ຂອງຕົນໃຫ້ດີຂຶ້ນຊົ່ວເທົ່ານັ້ນ ແຕ່ຫາກບໍ່ແມ່ນເພື່ອປົດປ່ອຍ ຕົນ ອອກຈາກການເປັນທາດຮັບໃຊ້ລະບອບທຶນນິຍົມແຕ່ຢ່າງໃດ . ເພາະສະນັ້ນ ຊາວກຳມາຊີບຈຶ່ງສົມໃຈ ຢ່າງເລິກເຊິ່ງ ຕໍ່ຜົນ ສຳເລັດຂອງການປະຕິວັດສັງຄົມນິຍົມ ແລະ ນຳພາການປະຕິ ວັດກ້າວໄປສູ່ໄຊຊະນະ. ນິຄຶມຊຶ້ນອັນໜຶ່ງອັນດຽວທີ່ລັກສະ ນະປະຕິວັດຢ່າງສະເໝີຕົ້ນສະເໝີປາຍໃນຍຸກສະໄໝ ປະຈຸ ບັນ.

ທ້າມກາງການດຳເນີນວຽກງານລະຫວ່າງມິດສະຫາຍ - ດ້ວຍກັນ ຢູ່ໂຮງຈັກໂຮງງານ ຢູ່ລວມໝູ່ນັ້ນເອງທີ່ສ້າງຄວາມ ຮັດແໜ້ນຢ່າງໃຫຍ່ຫລວງ ຂອງບັນດາຊາວຜູ້ອອກແຮງງານ ດ້ວຍກັນ. ການອອກແຮງງານຢູ່ໃນໂຮງຈັກໂຮງງານ ຂອງ ພວກນາຍທຶນ ໄດ້ເຮັດໃຫ້ພວກກຳມະກອນມີຄວາມຊຸ່ມເຢັຍ ຕໍ່ ລະບຽບແບບແຜນກໍ່ຕໍ່ການຈັດຕັ້ງ. ດ້ວຍເໜດນັ້ນ ເມື່ອໃດ

ແຮງງານຫາກເຮັດໃຫ້ຄວາມອຶດກັ້ນ ຂອງຊຸມຊຸ້ນກຳມະກອນ ຂາດສະບັ້ນລົງ ເມື່ອນັ້ນມັນຈະກາຍເປັນກຳລັງຮ້າຍແຮງທີ່ສຸດ ຕໍ່ພວກນາຍທຶນ. ລັກສະນະພິເສດຂອງແຮງງານຂອງ ກຳມະກອນຢູ່ໂຮງຈັກໂຮງງານແມ່ນມີຄວາມສັບສົນຫລາຍກວ່າ ແຮງງານຂອງຊາວໄຮ່ນາ. ເພາະສະນັ້ນ ກຳມະກອນຈຶ່ງມີ ທັງ ການສຶກສາ ແລະ ທັງການຮັບຮູ້ສູງກວ່າ; ຊຶ່ງຢູ່ພາຍໃນຕົວ ເມືອງທີ່ເຕັມໄປດ້ວຍເຫດການຫລາຍຮູບຫລາຍແບບອ້ອມຮອບ ຕົວກຳມະກອນນັ້ນ ກໍສຸດທີ່ກ້ວາງຂວາງກວ່າຊາວຊຸມນະບົດ . ເພາະສະນັ້ນ ຊາວຜູ້ອອກແຮງງານພາຍໃນຕົວເມືອງ ຈຶ່ງຮັບ ຮູ້ຊຸດົມການທາງດ້ານທິດສະດີ ມາກ-ເລນິນ ໄດ້ຢ່າງງ່າຍ - ດາຍທີ່ສຸດ ຊຶ່ງເປັນຊຸດົມການທີ່ພວກປັນຍາຊົນທີ່ກ້າວໜ້າ ຄົ້ນ ຄົ້ວສຶກສາ ແລະ ນຳເຂົ້າສູ່ຊຸມຊຸ້ນກຳມະກອນ.

ບໍ່ຄວນເຂົ້າໃຈວ່າກຳມະກອນບໍ່ມີສົມບັດຫຍັງທັ້ງນັ້ນ.ທີ່ຈິງ ແລ້ວ ເຂົາມີເຮືອນຢູ່, ມີເຄື່ອງນຸ່ງຂອງຖຸ, ຍັງໄປກ່ວານັ້ນຢູ່ ຕາມບັນດາປະເທດທຶນນິຍົມຂະຫຍາຍຕົວຕ່າງໆ ພວກ ກຳມະ ກອນຫລາຍໆຄົນ ມີເຮືອນຢູ່ເປັນຂອງຕົນເອງ, ມີລົດ, ມີໂທ ລະພາບ. ສິ່ງເຫລົ່ານີ້ ລວມແຕ່ແມ່ນຊັບສົມບັດສ່ວນຕົວ ທີ່ໃຊ້ ພາຍໃນຄອບຄົວ ຊຶ່ງເປັນຊັບສົມບັດທີ່ບ່ສ້າງລາຍຮັບ ແຕສ້າງ ລາຍຈ່າຍຢ່າງເປັນປະຈຳເທົ່ານັ້ນ. ນິຄຊັບສົມບັດແຕ່ ບ່ແມ່ນ ພາຫະນະການຜະລິດ. ກຳມະກອນພັດບ່ມີພາຫະນະການ ຜະ ລິດນ້ອຍ. ເພື່ອຫາລ້ຽງຊີບຕົນ ຊາວກຳມາຊີບຈຳຕ້ອງ ໄປ ອອກແຮງງານຮັບຈ້າງໃຫ້ນາຍທຶນ, ຈຳຕ້ອງອອກແຮງງານຢູ່ ໂຮງງານຂອງນາຍທຶນ ເພື່ອຄວາມຢູ່ລອດຂອງຊີວິດ ແລະຈຳ

ເປັນຕ້ອງສ້າງພົນກຳໄລໃຫ້ແກ່ຜູ້ເປັນນາຍ. ຖ້າບໍ່ດັ່ງນັ້ນນາຍ
ທຶນບໍ່ມີພົນປະໂຫຍດເລີຍ ທີ່ຈະເປັນເຈົ້າຂອງໂຮງງານ ໄດ້.
ນາຍທຶນມີຊີວິດຢູ່ດ້ວຍການກົດຂີ່ຂູດຮີດ, ດ້ວຍການ ກອບໂກຍ
ໜາກພົນແຮງງານຂອງຄົນອື່ນ. ກຳມະກອນຈຳໃຈຕ້ອງກາຍ
ເປັນຜູ້ທີ່ຖືກກົດຂີ່ຂູດຮີດ. ຕາບໃດທີ່ສະພາບການເຊັ່ນນັ້ນຍັງມີຢູ່
ຕາບນັ້ນ ເຂົາກໍຈະເປັນຜູ້ທີ່ລຳບາກຍາກຈົນເລື້ອຍໄປ. ວິທີ
ການດຽວທີ່ຈະຊ່ວຍໃຫ້ເຂົາສາມາດປັບປຸງສະພາບການເປັນຢູ່
ຂອງຕົນໃຫ້ດີຂຶ້ນຢ່າງເດັດຂາດນັ້ນຄື ໂດ່ນລົ້ມຜູ້ທີ່ກົດຂີ່ ຂູດຮີດ
ຕົນນັ້ນລົງ, ຍຶດເອົາພາຫະນະການຜະລິດຂອງມັນມາຮັບ ໃຊ້
ປະຊາຊົນ. ນີ້ລະແມ່ນສິ່ງທີ່ກຳນົດລັກສະນະປະຕິວັດຂອງຊາວ
ກຳມາຊີບ.

ອີກສິ່ງໜຶ່ງທີ່ສຳຄັນນັ້ນຄື ພັນທະມິດຂອງຊາວກຳມາຊີບ.
ສັກດິນາ ໄດ້ທຳການກົດຂີ່ຂູດຮີດຊາວໄຮ່ນາພ້ອມດ້ວຍດິ້ນຕອນ
ນ້ອຍໆ ແລະ ລວມຫົວຝູງສັດລາກແກ່ຈຳນວນໜ້ອຍຂອງເຂົາ,
ພໍ້ຄ້ານີ້ກໍທຳການກັກຕຸນຜະລິດຕະພັນທີ່ຊຸຈາກຊາວໄຮ່ນາ ແລະ
ລວມຫົວພວກເຈົ້ານາຍກໍປຸ້ນຈີ້ບຮັດເອົາການເກັບເກນ ຄ່າ
ຈ້າງລ້ຽງວັນນຳເຂົາຕື່ມອີກ. ນອກຈາກນັ້ນ ຍັງມີ ຫົວພວກ
ນາຍທຶນ ໃນຕົວເມືອງກໍໄດ້ປຸ້ນຈີ້ຊາວໄຮ່ນາມຳອີກໃນ ລະດັບ
ໃດໜຶ່ງ (ເຊັ່ນຕົວຢ່າງ, ວາງລາຄາສູງຂົ່ມສຳລັບສິນຄ້າ ທີ
ຈຳເປັນສຳລັບຊາວໄຮ່ນາ). ແຕ່ວ່າຊາວໄຮ່ນາໃນ ຖານະ
ເປັນເຈົ້າກຳມະສິດຜູ້ນ້ອຍຕ່ຳພາຫະນະການຜະລິດ (ທີ່ດິນ ,
ສັດລາກແກ່, ບາງເທື່ອກໍມີພາຫະນະກົນຈັກ) ມີສອງວິທີ ທີ
ຈະປັບປຸງຊີວິດການເປັນຢູ່ ແລະ ເພີ່ມທະວີລາຍໄດ້ ຂອງຕົນ

ໃຫ້ສູງຂຶ້ນ. ອັນທີໜຶ່ງແມ່ນຕ້ອງຄຽງບ່າຄຽງໄຫລ່ກັບຊາວກຳ
ມາຊີບທຳການຕໍ່ສູ້ ໂດ່ນລົ້ມລະບອບທຶນນິຍົມ ເພື່ອເຮັດໃຫ້
ພວກພໍ່ຄ້າ ແລະ ພວກເຈົ້າຂອງໂຮງຈັກໂຮງງານທີ່ປຸ້ນຈີ ບີບ
ຄັ້ນຕົ້ນຕົ້ນທາຍສາບສູນໄປ, ເພື່ອເຮັດໃຫ້ອຳນາດ ປະຊາຊົນ
ຈະໄດ້ຍຶດເອົາທີ່ດິນຄືນຈາກສັກດິນາ ແລະ ເພື່ອຈະໄດ້ ຂະ
ຫຍາຍຕາດິນຂອງຕົນອອກໃຫ້ໄດ້ຢ່າງກ້ວາງຂວາງ.

ອີກອັນໜຶ່ງ ແມ່ນການໂຍນເອົາທຸກຄວາມເປັນທຳ ທັງ
ໝົດ ແລະ ຄວາມບໍ່ເປັນທຳ (ສ່ວນໃຫຍ່-ແມ່ນຄວາມບໍ່ເປັນ
ທຳ) ອອກຈາກຖົ່ມແຖວຂອງພວກທີ່ຖືກຂູດຮີດໄປສູ່ ຖົ່ມແຖວ
ຂອງພວກຂູດຮີດຢ່າງບໍ່ຮູ້ສຶກຕົວ. ອາດມີໜຶ່ງຊາວໄຮ່ນາ ຜູ້
ທຸກຍາກໃນສູ່ມ ເກັບກ່ອຜົນລະປູກໄດ້ຫລາຍກວ່າ ເພື່ອນ
ບ້ານໃກ້ຄຽງຂອງເຂົາໂດຍບັງເອີນ ແລະ ໃນເວລານັ້ນເຂົາ
ຈະເກີດມີເງິນສ່ວນເກີນຂຶ້ນ. ເຂົາຈະນຳໃຊ້ເງິນນັ້ນ ໄປຊື້
ເຂົ້າເປືອກ ຫລືສັດລາກແກ່ນຳເພື່ອນບ້ານໃກ້ຄຽງເຫລົ່ານັ້ນ
ແລ້ວນຳໄປຂາຍຢູ່ໃນຕົວເມືອງ ແລະ ຈາກນັ້ນເຂົາຈະມີເງິນ
ເພີ່ມເຕີມຂຶ້ນອີກ. ເຂົາຈະກາຍເປັນພໍ່ຄ້ານ້ອຍຫລືໃຫ້ ຊາວ
ບ້ານດຽວກັນ ຫລືພົ້ນອງຂອງຕົນກູ້ຢືມເງິນເພື່ອເກັບເອົາຄອກ
ເບ້ຍສູງ, ໝາຍຄວາມວ່າເຂົາເລີ່ມໃຊ້ຊົນຢູ່ກົ້ນດ້ວຍອຳໄສ
ແຮງງານຂອງຄົນເຫລົ່ານັ້ນ ແລະ ເຂົາກໍຈະກາຍເປັນຜູ້ທີ່ຂູດ
ຮີດໄປ. ແນ່ນອນມີຄົນຈຳນວນໜ້ອຍທີ່ຈະປະສົບກັບ ຜົນສຳ
ເລັດດັ່ງກ່າວນີ້, ແຕ່ຍອມວ່າອາດມີຄົນໃດຄົນໜຶ່ງປະສົບ ກັບ
ຄວາມສົມຫວັງໄດ້, ຫັ້ງຊາວໄຮ່ນາ ກໍຄືມາຍທຶ່ມ້ອຍ ຕ່າງກໍ
ໝັ້ນໃຈໄວ້ວ່າ ຕົນອາດຈະຕ້ອງປະສົບກັບຜົນສຳເລັດໃດໜຶ່ງ

ໄດ້. ສິ່ງດ່ຳກ່າວນີ້ ກໍໄດ້ເຮັດໃຫ້ພວກຊາວໄຮ່ນາເຫລົ່ານັ້ນສະ ຫນັບສະຫນູນການປະຕິວັດຢ່າງບໍ່ສຸດກົກສຸດປາຍ. ຊາວໄຮ່ນາ ມີແນວຄິດລັ່ງເລເຄິ່ງໆກາງໆ. ພາກສ່ວນໜຶ່ງຂອງຊາວ ໄຮ່ ນາກໍໄດ້ກ້າວເດີນໄປນຳຊຸ້ມຊຸ້ນກຳມະກອນຢ່າງຕາຍໃຈ; ບໍ່ ແມ່ນເຫດບັງເອີນແຕ່ຢ່າງໃດ ທີ່ມີຜູ້ນຳສຳຄັນຫລາຍໆຄົນຂອງ ຂະບວນການກອມມູນິດໄດ້ອອກມາຈາກຖັນແຖວຊາວໄຮ່ ຊາວ ນາ.

ອີກພາກສ່ວນໜຶ່ງໄດ້ເດີນຕາມຫລັງພວກປະຕິການ ພວກ ນາຍທຶ່ນຢ່າງຕິມາວາຍທີ່ສຸດ. ສຸດທ້າຍແມ່ນພາກສ່ວນ ທີ່ສາມ ບາງຜ່ອງກໍປັບໃຕ້ແລ່ນເໜີອຈາກຄ້າຍສັງຄົມນິ ໄປຄ້າຍ ສັງ ຄົມອື່ນ ບໍ່ມີບ່ອນຈົ່ງ, ບາງຜ່ອງກໍນັ່ງລໍຖ້າເບິ່ງວ່າແມ່ນໃຜຈະ ໄຊຊະນະ. ຢູ່ໃນສະພາບເງື່ອນໄຂເຫລົ່ານີ້ ມີແຕ່ຊາວກຳມາ ຊີບເທົ່ານັ້ນ ທີ່ຈະສາມາດນຳພາການຕໍ່ສູ້ຂອງຊາວຜູ້ອອກແຮງ ງານທັງໝົດຕາມກັບລະບອບທຶນນິຍົມໄດ້ ແມ່ນອນທີ່ສຸດສິ່ງດ່ຳ ກ່າວນີ້ ບໍ່ໄດ້ໝາຍຄວາມວ່າ ກຳມະກອນໝົດທຸກຄົນ ແມ່ນ ພວກນັກປະຕິວັດທີ່ເຂັ້ມແຂງຫ້າວຫັນເລີຍ. ຍິ່ງໄປກ່ວານັ້ນຍັງ ມີພວກກຳມະກອນທີ່ທຳການສູ້ ຢັ້ນກັບອຳນາດປະຊາຊົນອີກ . ແຕ່ວ່າ ກຳມະກອນປະເພດນີ້ມີຈຳນວນສ່ວນໜ້ອຍ, ເວົ້າ ລວມແລ້ວ ຊາວກຳມາຊີບແມ່ນຊຸ້ມຊຸ້ມປະຕິວັດທັ່ງນັ້ນ.

ການປະຕິວັດກຳມາຊີບສັງຄົມນິຍົມ, ການຍຶດເອົາອຳນາດ ໂດຍຊາວກຳມາຊີບຮ່ວມກັບໝົດທຸກກຸ່ມຂອງຊາວຜູ້ອອກແຮງ- ງານທັງມວນ ແລະ ພາຍໃຕ້ການນຳພາຂອງກອງລະວັງໜ້າ ຂອງຕົນ ຄືພັກມາກຊິດນັ້ນ ແມ່ນເປັນພຽງແຕ່ການ ເລີ່ມຕົ້ນ

ຂອງການປະຕິວັດການາຊິບສັງຄົມນິຍົມ. ບັນຫາມີຢູ່ວ່າ ບໍ່ມີຢູ່ ໃນປະເທດໃດເລີຍ ທີ່ການສ້າງຕັ້ງລະບອບສັງຄົມນິຍົມຈະສາ ມາດເກີດຂຶ້ນໄດ້ ພາຍໃນຂັ້ນຫນຶ່ງຫລືຫນຶ່ງ. ປະການ ປະ ເທດອຸດົມເປັນສັງຄົມນິຍົມ ສາມາດເຮັດໄດ້ພາຍໃນນາທີດຽວ ແຕ່ວ່າເພື່ອຈະເຮັດໃຫ້ປະເທດເປັນສັງຄົມນິຍົມໃນຕົວຈິງໄດ້ຄົ ດ່ັງ ກ່າວມີແມ່ນຕ້ອງໃຊ້ເວລາ.

ຍ້ອນຫຍັງ ? ກໍ ຍ້ອນວ່ານັ້ນແມ່ນການຫັນປ່ຽນຢ່າງ ຂັ້ນ ຖານພາຍໃນຊີວິດຂອງປະຊາຊົນ, ແມ່ນການລົບລ້າງ ຫຼຸກ ຄວາມຊຸ່ມເຊຍ-ເຖິງແມ່ນຄວາມຊຸ່ມເຊຍທີ່ຫລ້າສະໄຫມ ແລ ວ ນັ້ນກໍຕາມ. ຍັງມີຫລາຍໆຄົນທີ່ບໍ່ເຫັນດີເຫັນພ້ອມກັບການ ຫັນ ປ່ຽນດ່ັງ ກ່າວນ. ພວກນາຍທຶນ ແລະ ພວກເຈົ້າທີ່ດິນ ທີ່ຖືກ ໂຄ່ນລົ້ມລົງແລ້ວນັ້ນ ທໍາການສູ້ຢັ້ນຢັ ດ ຂວາງຕໍ່ການຫັນປ່ຽນ ນ ັ ້ ທັ ງ ດ ້ ວ ຍ ກ ໍ ລ ັ ງ ອ າ ວ ຸ ດ , ດ ວ ຍ ກ ານ ສ ້ າ ງ ຄ ວ າ ມ ປ ັ ່ ນ ປ ່ ວ ນ , ກ ານ ວ ິ ນ າ ດ ສ ะ ກ ໍ , ກ ັ ກ ຕ ຸ ນ , ແ ລ ะ ດ ວ ย ก า ม โ ค ส ะ ม า .

ເຈົ້າທີ່ດິນຜູ້ໃດແດ ່ ທ ີ ່ ຈ ະ ສ ะ ຫ ມ ັ ກ ໃ ຈ ເ ຫ ັ ນ ດ ີ ໃ ຫ ້ ຜ ູ ້ ອ ື ່ ນ ຍ ึ ດ ເ ອ ົ ້ າ ທ ี ่ ด ิ น ข อ ง เ ข ົ ้ า ไ ป , น า ย ท ุ น ผ ู ้ ใ ด แ ด ่ ท ี ่ จ ะ เ ห ็ น ด ี ด ้ ว ย ก ั บ ก า ร ย ึ ด ท ร ั พ ย ์ ส ิ น ท ี ่ ด ิ น แ ล ะ โ ร ง ง า ม ข อ ง ต ๋ ม ? ส ำ ล ั บ พ ว ก ข ะ เ จ ้ า แ ล ้ ว น ั ้ น แ ม ่ น ค ว า ม พ ิ ม า ด อ ั น ใ ห ญ ่ ห ล ว ง ก ็ ย ้ อ ม ว ่ า พ ว ก ข ะ เ จ ้ า จ ะ ต ้ อ ง ไ ด ้ ข ั บ ไ ล ่ ก ร ง ง า ม ด ้ ว ย ต ๋ ม เ อ ง พ า ย ห ล ั ง ท ี ่ ส ู ม เ ส ี ย ท ี ่ ด ิ น แ ล ะ โ ร ง ง า ม ไ ป แ ล ้ ว . ส ่ ว น ล า ย ไ ด ้ ข อ ง ก ำ ม ะ ก อ น ห ล ื อ ช า ว ไ ร ่ ช า ว น า ผ ู ้ ข ั บ ไ ล ่ ก ร ง ง า ม บ ่ เ ค ย ม ี ห ล ว ง ห ล า ย เ ห ม ื อ น ด ่ ั ง พ ว ก น า ย ท ุ น ท ี ่ ถ ู ก เ จ ้ า ท ี ่ ด ิ น ม ั น เ ล ย . ด ่ ั ง น ั ้ น ค ำ ว ่ า " อ ั น ห อ ม ห ว ม " น ั ้ น จ ะ ส ู ญ ห า ย ไ ป จ า ก แ ล ้ ว , ห ม า ย ค ว า ม ว ่ า พ ว ก ร ็ ว ม ม ี บ ่ ม ี ค ว า ม

ສາມາດຢູ່ກິນໄດ້ຢ່າງສະໜຸກສຸກສະບາຍຢູ່ຕະຫລອດ ເວລາ ເລີຍ ໃນຂະນະທີ່ຍັງມີຄົນອຶດຫິວເປັນຈຳນວນຫລວງຫລາຍຢູ່, ບໍ່ມີຄວາມສາມາດນຸ່ງຫົ່ມດ້ວຍແພ່ນແພໄໝອັນຈົບງາມ, ໃນຂະ ນະທີ່ຊາວຜູ້ອອກແຮງງານນຸ່ງຫົ່ມເສື້ອຂາດໜ້າຜ້າຂາດຫລັງ, ບໍ່ສາມາດສ້າງຫໍໂຮງອັນສວຍງາມໃຫ້ແກ່ຕົນໃນຂະນະທີ່ ພວກ ທຸກຍາກອະນາຖາບໍ່ມີເງິນເພື່ອຈະຊຸເຊຸ່ມວ່າແກ້ວແວ່ນ ອັດຝາ ເຮືອນຮ້າງຂອງຕົນ...ເປັນທີ່ຈະແຈ້ງແລ້ວວ່າ ບຸກຄົນເຫລົ່ານັ້ນ ທຳການຕ້ານຢັ້ນຢ່າງເອົາເປັນເອົາຕາຍ ພະຍາຍາມ - ເອົາຊະນະ "ອັນຫວານມັນ" ນັ້ນກັບຄືນມາສູ່ຕົນອີກຄັ້ງໃໝ່ .

ແຕ່ວ່າບໍ່ມີພຽງແຕ່ພວກຂະເຈົ້າເທົ່ານັ້ນ ທີ່ສູ້ຕ້ານຢັ້ນຄົນ ພວກນາຍທຶນ ແລະ ພວກເຈົ້າທີ່ດິນໄດ້ເອົາພວກລູກແຫ້ລ້ຽງຕົນ ມີ ແລະ ພວກເກາະກິນຂອງຕົນ ພວກເຈົ້ານາຍທີ່ເຄີຍໄດ້ຮັບ ໃຊ້ພວກຂະເຈົ້າຄ້ອຍສົ້ງຈ້າງລ້ຽງອັນໃນເມື່ອກ່ອນ ແລະລວມ ຫ້ວພວກຊາວຜູ້ອອກແຮງງານ ບໍ່ຮູ້ແຈ້ງເຫັນຈິງ ແລະ ທຸກ ຕໍ່ອະຍ໊ອະຕ່າງໆນັ້ນເຂົ້າຮ່ວມການຕ້ານຢັ້ນການປະຕິວັດ. ຍ້ວ ກ່ວານັ້ນ ເຈົ້າທີ່ດິນຍັງໄດ້ຊັກຊ່ວນໃຫ້ພວກຊາວໄຮ່ນາຈຳນວນ ໜຶ່ງເຫັນວ່າການເອົາທີ່ດິນ ຊ່ວຍລັດຖະບານປະຊາຊົນໄດ້ ຍຶດ ເອົາຈາກພວກຮ້ວມີແລ້ວ ມອບໃຫ້ນັ້ນດາຊາວຜູ້ອອກແຮງງານ ມີ ບາບກຳ.

ຢູ່ບ່ອນນີ້ນັ້ນມີບາບຄືແນວໃດ ? ປະຫວັດສາດໄດ້ສະແດງ ໃຫ້ເຫັນແລ້ວວ່າ ໃນໄລຍະທຳອິດແຫ່ງການຂະຫຍາຍຕົວຂອງ ສັງຄົມມະນຸດນັ້ນ ບໍ່ເຄີຍມີກຳມະສິດສ່ວນຕົວຕໍ່ສິ່ງໃດເລີຍແລະ ລວມຫ້ວຕໍ່ທີ່ດິນ. ມີແຕ່ໃນຂັ້ນຕ່ຳພວກຮ້ວມີຫ້ວຫລາຍ ຈ່ວຍຶດ

ເອົາທົດມາເປັນກຳມະສິດສ່ວນຕົວດ້ວຍການທລອກລວງ ຫລື ດ້ວຍກຳລັງ.

ທົດປາສະຈາກແຮງງານມະນຸດນັ້ນ ແມ່ນຫຍັງ ? ແມ່ນ ທ່ຽງຫຍ້າແຝກທຳມະຊາດຫລືປ່າໄມ້ທີ່ໃຫ້ສິ່ງໃດໜຶ່ງແກ່ມະນຸດ-ໄດ້ໜ້ອຍທີ່ສຸດ. ທົດນຈະກາຍເປັນປະໂຫຍດ ແລະ ນຳເອົາ ໜາກຜົນຂອງມັນມາໄດ້ກໍໃນເມື່ອວ່າມັນບໍ່ພຽງແຕ່ຖືກຫົດດ້ວຍ ນ້ຳໃຫ້ປຽກຊຸ່ມເທົ່ານັ້ນ ແຕ່ມັນຫາກຍັງຖືກຫົດດ້ວຍນ້ຳເຫື່ອນ້ຳ ແຮງຂອງມະນຸດນຳອີກ. ມັນແມ່ນນ້ຳເຫື່ອນ້ຳແຮງຂອງໃຜ ທີ່ ຫົດໃສ່ທ່ຽງໄຮ່ທ່ຽງນາຂອງເຈົ້າທົດນ ? ເປັນທີ່ຮູ້ແຈ້ງແລ້ວວ່າບໍ່ ແມ່ນນ້ຳເຫື່ອນ້ຳແຮງຂອງເຈົ້າທົດນເອງ. ຄົນຜູ້ໃດທີ່ບໍ່ໄດ້ຫຸ້ມ ເຫແຮງງານຂອງຕົນເຂົ້າສູ່ທົດນແລ້ວ ຜູ້ນັ້ນຈະບໍ່ມີສິດ ເປັນ ເຈົ້າຂອງທົດນໄດ້ແມ່ນແຕ່ທາງດ້ານຈິດໃຈກໍດີ.

ຍົກຕົວຢ່າງໂຮງງານແຫ່ງໜຶ່ງ ອາຄານຂອງໂຮງ ງານ ແມ່ນກຳມະກອນເປັນຜູ້ສ້າງມັນຂຶ້ນ. ຊາວກຳມະກອນອີກສ່ວນ ໜຶ່ງເປັນຜູ້ຜະລິດໂຮງຈັກຊຸ່ຽນໃຫ້ແກ່ໂຮງງານ ສ່ວນພວກທີ່ ສາມ ປຸງແຕ່ງວັດຖຸດິບ, ພາກສ່ວນທີ່ສີ່ ດຳເນີນການຜະລິດ. ເປັນທີ່ຈະແຈ້ງແລ້ວວ່າ ທັງບັນດານັກປາດທົດນຄົນນຳໃຊ້ເຕັກ ໂນໂລຊີ ທັງພວກນັກວິສະວະກອນທີ່ຜະລິດສ້າງໂຮງຈັກ ຊຸ່ຽນ ຕ່າງໆ ທັງຜູ້ອຳນວຍການທີ່ຮັບໂຮມເອົາກຳລັງແຮງຂອງ ພະ ນັກງານກຳມະກອນທັງໝົດໄດ້ພ້ອມກັນສຸມໃສ່ຖອກເທແຮງ - ງານຂອງຕົນເຂົ້າສູ່ຜົນຜະລິດຂອງໂຮງງານ. ສ່ວນຜູ້ ເປັນ ເຈົ້າຂອງໂຮງງານເດ ? ແຮງງານຂອງເຂົາຢູ່ໃສ ? ອາດ ຢູ່ໃນການເອົາພຽງແຕ່ຜົນກຳໄລ ແລະ ຟຸມເຟືອຍຜົນ ກຳໄລ

ຂອງພວກຂະເຈົ້າ ເພື່ອຄວາມເພິ່ງພໍໃຈ ຂອງຕົນເທົ່ານັ້ນ.

ທາດແທ້ຂອງການປະຕິວັດສັງຄົມນິຍົມ ແມ່ນຢູ່ບ່ອນ ວ່າ ຕ້ອງລົບລ້າງຊົນຊັ້ນນາຍທຶນທັງໝົດ ເພື່ອ ເຮັດໃຫ້ໝູ່ກຸ່ມຄົນກາຍເປັນຊາວຜູ້ອອກແຮງງານທີ່ເຕົ້າໂຮມກັນ ເຂົ້າດ້ວຍການອອກແຮງງານບົນພາທະນະການຜະລິດ ສ່ວນ ລວມ. ກ່ອນອື່ນໝົດເພື່ອຈະເຮັດໄດ້ໃນສິ່ງດັ່ງກ່າວນີ້ຈະຕ້ອງ ເອົາໂຮງຈັກໂຮງງານຂອງພວກນາຍທຶນໄດ້ມາເສຍກ່ອນແລ້ວ ມອບໂຮງຈັກໂຮງງານເຫລົ່ານັ້ນໃຫ້ແກ່ປວງຊົນທັງໝົດ ເປັນ ເຈົ້າຂອງ. ອັນນີ້ກໍບໍ່ໄດ້ໝາຍຄວາມວ່າຈະຍຶດເອົາໂຮງ ຈັກ ໂຮງງານຂອງພວກຂະເຈົ້າແຕ່ທາດຮອດທ່ານັ້ນ. ຢູ່ໃນຫລາຍ ປະເທດສັງຄົມນິຍົມປະຈຸບັນນີ້ ໃນເບື້ອງຕົ້ນແຫ່ງການດັດສ້າງ ທາງດ້ານສັງຄົມນັ້ນ ເພິ່ນໄດ້ສ້າງຕັ້ງບັນດາບໍລິສັດວິສາຫະກິດ ລັດຜະສົມທຶນນິຍົມຕ່າງໆຂຶ້ນ. ອະດີດຜູ້ເປັນເຈົ້າຂອງກໍໄດ້ຖືກ ມອບໝາຍໃຫ້ເປັນຜູ້ນຳພາທຸລະກິດຂອງບໍລິສັດເຫລົ່ານັ້ນໂດຍ ໄດ້ຮັບການແບ່ງປັນຜົນກຳໄລສ່ວນໃດສ່ວນໜຶ່ງ. ຢູ່ໃນປະເທດ ສັງຄົມນິຍົມອື່ນໆ ເພິ່ນໄດ້ຍຸບລິສັດໂຮງຈັກໂຮງງານຕ່າງໆ ທີ່ ບໍ່ໃຫຍ່ໂຕປານໃດນັ້ນນຳພວກນາຍທຶນ. ການກະທຳຊຸ່ນນີ້ ກໍ ເພື່ອຫລຸດຜ່ອນການຕ້ານຢັນຄືນຂອງພວກນາຍທຶນທີ່ມີຕໍ່ການຫັນ ປ່ຽນແບບປະຕິວັດ. ສ່ວນຢູ່ບ່ອນໃດທີ່ພວກນາຍທຶນທຳການ - ຕ້ານຢັນຄືນຢ່າງເອົາເປັນເອົາຕາຍ ຈົນກ້າວໄປເຖິງການໃຊ້ ກຳລັງອາວຸດນັ້ນ ຢູ່ບ່ອນນັ້ນຕາມທຳມະດາແລ້ວຈະຕ້ອງ ຈຳ ເປັນຍຶດເອົາຊັບສົມບັດຂອງພວກທີ່ທຳການຕໍ່ສູ້ຕ້ານຢັນອຳນາດ ປະຊາຊົນ.

ໃນສະໄໝອ້ານຜ່ານຈາກລະບອບທຶນນິຍົມ ໄປສູ່ລະບອບ
ສັງຄົມນິຍົມນັ້ນ (ຢູ່ໃນບາງປະເທດສະໄໝອ້ານຜ່ານຈະແກ
ຍາວນັບເປັນຫລາຍໆສິບປີ) ເພິ່ນຈະຕ້ອງໄດ້ແກ້ໄຂບັນ ຫາ
ຂອງຊົນນະບົດສອງປະການສຸດທ້າຍສຳຄັນ. ປະການທີໜຶ່ງ ຍຶດ
ເອົາທຶດນຈາກເຈົ້າທຶດນ ແລ້ວມອບໃຫ້ແກ່ພວກຊາວໄຮ່ນາ .
ເວົ້າຕາມຄວາມຈິງແລ້ວ ອັນນີ້ແມ່ນບັນຫາໜ້າທີ່ຂອງສັງຄົມ
ນິຍົມແຕ່ນັ້ນຫາກແມ່ນບັນຫາຂອງການປະຕິວັດປະຊາທິປະໄຕ-
ຊົງຕາມທຳມະດາແລ້ວ ມັນຈະຕ້ອງກ້າວເຂົ້າກ່ອນການເລີ່ມ-
ຕົ້ນຂອງສະໄໝອ້ານຜ່ານ ໄປສູ່ລະບອບສັງຄົມນິຍົມ. ຢູ່ໃນກໍ
ລະນີດັ່ງກ່າວນີ້ ມັນເປັນພຽງແຕ່ຈະເຮັດໃຫ້ກຳມະສິດສ່ວນຕົວ
ຂະໜາດໃຫຍ່ຕ້ອງທຶດນ (ກຳມະສິດຂອງພວກທີ່ຮູດຮີດ) ປ່ຽນ
ເປັນກຳມະສິດສ່ວນຕົວຂະໜາດນ້ອຍຂອງພວກຊາວໄຮ່ນາ
ເທົ່ານັ້ນ. ຢູ່ໃນທີ່ ບ່ມີຫຍັງທີ່ລັກສະນະສັງຄົມນິຍົມແບບ ພິ
ເສດເລີຍ.

ຢູ່ບອນນີ້ເພິ່ນບໍ່ໄດ້ກ່າວເຖິງການຍຶດເອົາທຶດນ ຂອງພວກ
ເຈົ້າທຶດນ, ເຖິງການໂອນທຶດນມາເປັນຂອງລັດໂດຍສະເໝີ
ໄປ ແຕ່ຢ່າງໃດ. ເຊັ່ນຕົວຢ່າງ, ຢູ່ປະເທດຫວຽດນາມ ລັດ
ໄດ້ຊຸເອົາທຶດນມາຈຳພວກເຈົ້າທຶດນ ທີ່ໄດ້ທຳການຕໍ່ສູ້ຮຽງ ບ່າ
ຮຽງໄຫລ່ກັບປະຊາຊົນຕ້ານພວກຈັກກະພັດ ແຕ່ໃນເວລາດຽວ
ກັນ ລັດໄດ້ທຳການຍຶດເອົາທຶດນມາຈຳພວກທີ່ທຳການຕໍ່ສູ້ຮ່ວມກັບ
ພວກຈັກກະພັດຕ້ານປະຊາຊົນ. ທຸກສິ່ງທຸກຢ່າງມັນຂຶ້ນກັບ ລັກ
ສະນະພິເສດຂອງການຂະຫຍາຍຕົວຂອງປະເທດໃດໜຶ່ງ.

ດັ່ງນັ້ນ ໃນເມື່ອພວກຊາວໄຮ່ນາໄດ້ຮັບທຶດນແລ້ວ ພວກ

ຂະເຈົ້າກໍເລີ່ມທຳມາຫາກິນຢູ່ບ້ານຜົ່ມແຜ່ມດິນຕອນນັ້ນ. ເມື່ອເວ
ລາຜ່ານໄປ ๕-๑๐ ປີແລ້ວ ກໍເລີ່ມເຫັນຢ່າງຈະແຈ້ງວ່າ ໃນ
ຊ່ວໄລຍະເວລາດັ່ງກ່າວນີ້ ຊາວໄຮ່ມາຜູ້ໜຶ່ງຈະຖືກ ຫລົ່ມຈົມ
ລົງ (ແຕ່ບໍ່ເປັນຍ້ອນວ່າເຂົ້າເປັນຄົນຂີ້ຄ້ານມັກງ່າຍ ແຕ່ຢ່າງ
ໃດ), ສ່ວນອີກຜູ້ໜຶ່ງ ມີຄວາມຮັ່ງມີດີໄດ້ຂົ້ນ ແລະຜູ້ທີ່ສອງ
ນັ້ນເອງ ຈະເລີ່ມຊຸຫລເຊ່ຳທີ່ດິນມຳພວກທີ່ໜຶ່ງ ແລະ ຈາກນັ້ນ
ພວກທີ່ໜຶ່ງ ກໍຈະກາຍເປັນບ່າວມາຮັບໃຊ້ພວກທີ່ສອງໄປ ໃນ
ທັນໃດ. ແລະ ໃນທີ່ສຸດ ແຮງງານທີ່ບໍ່ຮັບໃຊ້ຕົນເອງ ແຕ່ຮັບ
ໃຊ້ເພື່ອນບ້ານໃກ້ເຮືອນຄຽງ, ການກົດຂູດຮີດຄົ້ນຕໍ່ຄົ້ນກໍຈະ
ເລີ່ມຄົ້ນມີໃໝ່ອີກ. "ນອງຊາຍຂອງຕົນ" ຄືຊາວສະສົມທຸນ
ຈະຮັບໜ້າທີ່ແທນເຈົ້າທີ່ດິນທີ່ສູນຫາຍໄປແລ້ວນັ້ນ. ສ່ວນດ່ວງກ່າວ
ນີ້ແມ່ນຫລີກລຽງບໍ່ໄດ້. ການຜະລິດສິນຄ້າຂະໜາດນ້ອຍຂອງ
ຊາວໄຮ່ມາ, ຂອງນາຍຊ່າງຫັດຖະກຳ, ຂອງພໍ່ຄ້າໄດ ເຮັດ
ໃຫ້ເກີດມີນາຍທຶນແບບໃໝ່ (ໃນເບື້ອງຕົ້ນ) ແມ່ນຂະໜາດ
ນ້ອຍຢູ່ຊຸ່ມນະບົດຂົ້ນ. ຄົນຈຳນວນໜຶ່ງກໍອາດຈະປະສົບຜົນສຳ
ເລັດໄດ້ສ່ວນມວນຊຸ່ມຈຳນວນຫລວງຫລາຍກໍສິ້ນຕໍ່ອົດຫ້ວແລະ-
ທຸກຍາກເຂັນໃຈຄົນອີກຄັ້ງໃໝ່.

ວ.ອິ.ເລນິນ ຂຽນໄວ້ວ່າທຶນົດທາດແທ້ຂອງການວິວັດທຶນ
ນິຍົມໃນການກະສິກຳຂະໜາດນ້ອຍນັ້ນແມ່ນຢູ່ໃນການປະກອບ
ສ່ວນແລະການເພີ່ມທະວີຄວາມບໍ່ສະເໜີພາບທາງດ້ານຊັບສົມ
ບັດພາຍໃນສະຫະຊຸ່ມ,ຈາກນັ້ນຄວາມບໍ່ສະເໜີພາບ ແບບທຳ
ມະດາສາມັນກໍຈະກາຍມາເປັນການພິວພັນແບບທຶນນິຍົມ"๑).
ສ່ວນດ່ວງກ່າວນີ້ ມັນມີຄວາມໝາຍສຸດທ້າຍສຳຄັນຄື: ໃນເບື້ອງຕົ້ນມີ

ພຽງແຕ່ຊາວໄຮ່ນາຜູ້ດຽວເທົ່ານັ້ນ ທີ່ເລີ່ມມີຊີວິດການເປັນ ຢູ່ ລົ້ມກາຍດີກວ່າຜູ້ອື່ນໆ (ບາງທີ ໃນບາງກໍລະນີ ຍ້ອນ ການ ອອກແຮງງານດ້ວຍຄວາມຊື່ສັດສຸດຈະລິດຫລາຍກວ່າ) ແລະ ຈາກນັ້ນຊາວໄຮ່ນາຜູ້ນັ້ນກໍຈະເລີ່ມທຳການກົດຂູດຮີດຜູ້ອື່ນ . ແລະ ອັນນັ້ນບໍ່ພົ້ນພັນກັບວ່າ ລະຫວ່າງບຸກຄົນທັງສອງນັ້ນ - ແມ່ນໃຜອອກແຮງງານດີກວ່າ ຫລືຊົ່ວຮ້າຍກວ່າກັນ...

ດ້ວຍເຫດນີ້ເອງ ໃນສະໄໝຂ້ອມຜ່ານຈາກລະບອບທຳມະ ຍົມ ໄປສູ່ລະບອບສັງຄົມນິຍົມນັ້ນ ຢູ່ໃນຊຸມນະບົດຈຳເປັນຕ້ອງ ໄດ້ແກ້ໄຂທັງບັນຫາທີ່ສອງ ຊຶ່ງເປັນບັນຫາສຳຄັນອີກຄື: ເຕົ້າ ໂຮມເອົາພວກຊາວໄຮ່ນາເຂົ້າສູ່ສະຫະກອນລວມໝູ່. ອັນນີ້ ແມ່ນສິ່ງທີ່ຈຳເປັນທີ່ສຸດກໍເພາະວ່າ ກຳມະສິດສ່ວນຕົວ ຂະ ໜາດນ້ອຍຂອງພວກຊາວໄຮ່ນາ, ຂອງບັນດາຍຸງ ຫັດ ຖະກຳ, ຂອງພວກເຈົ້າຂອງຮ້ານຄ້າເຄື່ອງຍ່ອຍນັ້ນ ແມ່ນກົດ ກັນການຂະຫຍາຍຕົວຂອງການຜະລິດ. ການກະສິກຳຈະ ຂະ ຫຍາຍຕົວຢ່າງແທ້ຈິງ ແລະ ຢ່າງທັນຍຸກສະໄໝໄດ້ກໍຕໍ່ ເມື່ອ ວ່າໄດ້ນຳໃຊ້ລົດໄຖນາ, ລົດກ່ຽວເຂົ້າ, ຝຸ່ນວິທະຍາສາດ , ຢາປາບສັດຕູພືດປະເພດຕ່າງໆ, ແມວພັນເຂົ້າທີ່ມຸນນະພາບ ສູງ, ແມວພັນສັດປະເພດດີໆ, ຊຸມລະປະທານລະບາຍ ນ້ຳ ແບບວິທະຍາສາດ. ມີແຕ່ໃນເງື່ອນໄຂເຫລົ່ານີ້ເທົ່ານັ້ນ ເພື່ນ ຈຶ່ງຈະສາມາດເກັບກ່ຽວຜົນລະປູກໄດ້ດີ ຊຸມ ແລະ ນ້ຳນົມກໍຢູ່ ໃນລະດັບສູງ. ຕ້ອງມີເຂົ້າຈ, ຊຸມ, ນ້ຳນົມ, ຜັກ ແລະ ໝາກໄມ້ກິນຢ່າງພຽງພໍແລ້ວນັ້ນບໍ່ພຽງແຕ່ເພື່ອຕອບສະໜອງ

---

1) ວ.ອ.ເລນິນ ນິພົນຄົບຊຸດ, ເຫລັ້ມທີ ໑໗ໜ້າ ๗๘-๗๙.

ແກ່ປະຊາຊົນຂອງຕົວເມືອງກໍ່ຄືຂອງຊົນນະບົດເທົ່ານັ້ນ ແຕ່ນັ້ນ ຍັງເພື່ອເຮັດໃຫ້ຊາວ ຜູ້ອອກແຮງງານໝົດທຸກຍາກຄົນ ມີຄວາມ ອົ່ມໜໍ່າສໍ່າລານ ແລະ ຍິ່ງໄປກວ່ານັ້ນ ຜົນຜະລິດເຫລົ່ານ ັ້ ນ ຕ້ອງມີລາຄາຖືກຢ່າງເໝາະສົມແກ່ພວກຜູ້ຊົນທັ້ງໝົດ ອົ່ ນໍ. ການກະສິກໍາຂະໜາດໃຫຍ່ທີ່ໃຊ້ກົນຈັກທັນສະໄໝ ໄດ້ ອໍ່ານວຍຄວາມສະດວກທໍ່ານາມຜະລິດຜົນຜະລິດທີ່ມີລາຄາ ຖືກ ຢູ່ແລ້ວນັ້ນ ໄດ້ຫລາຍກວ່າ ເພາະສະນັ້ນ ລະດັບລາຍໄດ້ຂອງ ພວກທີ່ນໍ່າໃຊ້ກົນຈັກເຂົ້ານໃນການຜະລິດນ້ ຈະສູງກວ່າ ລາຍໄດ ຂອງພວກຊາວໄຮ່ນາທີ່ມີຕອນດິນຂະໜາດນ້ອຍ ແລະ ເຮັດ ວຽກດ້ວຍມືນັ້ນນັບເປັນຫລາຍໆເທ່ ຢູ່ໃນທີ່ດິນຕອນນ້ອຍໆນັ້ນ ການນໍ່າໃຊ້ລົດໄຖນາກໍ່ເໜັ ່ ຍ ບ ່ ເປັນຜົນດີແຕ ່ ຢ ່ າງໃດ ຍ ້ ອນ ' ' '

ການກະສິກຳຂອງຊາວໄຮ່ນາຂະໜາດນ້ອຍຈະປະສົບ ກັບ ຄວາມຫາຍະນະຫລົ້ມຈົມຢ່າງແນ່ນອນ. ຢູ່ໃນຫລາຍໆປະເທດ ທຶນນິຍົມຂະຫຍາຍຕົວ (ສະຫະລັດອາເມລິກາ, ອັງກິດ, ຝະ ລັ່ງ, ສະຫະພັນເຢຍລະມັນ, ຍີ່ປຸ່ນ ແລະ ອື່ນໆ) ຈຳນວນ ພວກກະສິກອນຂະໜາດນ້ອຍແລະກາງ ໄດ້ຖືກຫລຸດນ້ອຍຖອຍ ລົງເປັນລຳດັບ. ການກະສິກຳຂອງພວກຊາວໄຮ່ນາ ໄດ້ຖືກ ຫລົ້ມຈົມລົງຍ້ອນບໍ່ສາມາດຊ່ວງເສັ້ງກັບສະຖານທີ່ລ່ຽງສັດ ຂະ ໜາດໃຫຍ່ທຶນນິຍົມ ທີ່ນຳໃຊ້ກົນຈັກທັນສະໄໝເຫລົ່ານັ້ນໄດ້. ພວກຊາວໄຮ່ນາຈຳເປັນຕ້ອງຂາຍເລຫລັງ ຫົດນ້ອງຕົ້ນ ໃຫ້ ພວກນາຍທຶນ, ໄປຮັບຈ້າງເປັນຂ້າວນາໃຫ້ພວກຂະເຈົ້າ ຫລື ບໍ່ດັ່ງນັ້ນ ກໍເຂົ້າໄປໃຊ້ຊີວິດຢູ່ໃນຕົວເມືອງ. ບໍ່ມີຢູ່ແຫ່ງ ໃດ (ທັງຢູ່ໃນບັນດາປະເທດທຶນນິຍົມ ກໍຄືທັງຢູ່ໃນບັນດາປະເທດ-ສັງຄົມນິຍົມເອງ) ການທຳມາຫາກິນຂອງຊາວໄຮ່ນາ ຫລື ຂອງນາຍຊ່າງຫັດຖະກຳຂະໜາດນ້ອຍຈະມີອະນາຄົດ. ລວມ ທັງພໍ້ຄ້າຂະໜາດນ້ອຍ ກໍບໍ່ມີອະນາຄົດເຊັ່ນດຽວກັນ: ກໍເພາະ ວ່າຢູ່ໃນລະບອບທຶນນິຍົມ ພໍ້ຄ້ານ້ອຍຈະຖືກບັນດາຮ້ານ ສັບພະ ສິນຄ້າຂະໜາດໃຫຍ່ກຳຈັດ ແລະ ທຳລາຍໃຫ້ຫລົ້ມຈົມລົງ. ຢູ່ ໃນທີ່ ການໃຊ້ແຮງງານຂອງຜູ້ຂາຍໄດ້ຖືກເຮັດເປັນ ລະບົບ ກົນຈັກ ແລະ ສິນຄ້າກໍຈະມີລາຄາຖືກກວ່າສິນຄ້າຢູ່ຕາມ ຮ້ານ ຄ້າຂາຍເຄື່ອງຫຍ່ອຍຢ່າງບໍ່ຕ້ອງສົງໄສ.

ລະບອບທຶນນິຍົມ ກໍຄືລະບອບສັງຄົມນິຍົມໄດ້ລົບລ້າງການ ກະສິກຳຂະໜາດນ້ອຍ. ແຕ່ວ່າການແກ້ໄຂບັນຫາດັ່ງກ່າວນີ້ ລ້ວນແຕກຕ່າງກັນທີ່ສຸດ. ລະບອບທຶນນິຍົມ ຈະບັນລຸເຖິງຈຸດປະ

ສ່ວນໃຫ້ກໍ່ຄ້ວຍວິທີການທຳລາຍພວກມ່ວຍທົ່ມນ້ອຍໃຫ້ໜ້ຽມ ລະ
ລາຍລົງ. ມັນຈະດຶງແກ່ເອົາຊາວໄຮ່ນາອອກຈາກທົ່ດິນ ຂອງ
ເຂົາ, ນາຍຊ່າງຫັດຖະກຳອອກຈາກໂຮງຊ່າງ, ພໍ່ຄ້າ ຂະ
ໜາດນ້ອຍ ອອກຈາກຮ້ານຄ້າເຄື່ອງຍ່ອຍເທົ່ານັ້ນ. ລະບອບ
ທົ່ມນິຍົມຮູ້ແກ້ໄຂບັນຫາສູ່ກວ່ມໄດ້ພຽງແຕ່ດ້ວຍຮູບການແນວ
ເທົ່ານັ້ນ.ຄວ່ມໂຫດຮ້າຍທາລຸນແມ່ນລັກສະນະສະເພາະຂອງ
ມັນກໍເພາະວ່າຈຸດມຸ່ງໝ່ມາຍຂອງນາຍທົ່ມແມ່ນຜົນກຳໄລ ຢ່າງ
ດຽວ.ຢູ່ໃນເງື່ອນໄຂນີ້ສະພ່ບການເປັນຢູ່ຂອງມວນມະນຸດຈະ
ເປັນຄືແນວໃດນັ້ນລະບອບທົ່ມນິຍົມບໍ່ໄດ້ວ່າໄລໃຍດິ່ນຳເລີຍ.

ໃນສູ່ມ້ນີ້ຢູ່ປະເທດລ່າວ ເພ່ນໄດ້ສ່າງຕັ້ງສະຫະກອນລວ່ມ
ໝູ່ຈຳນວນ ८८८ ແຫ່ງ ຊຶ່ງກວ່ມເອົາປະມານເຄິ່ງໜ້ຶ່ງຂອງ
ຈຳນວນຄອບຄົວຊາວໄຮ່ນາ ທ້ັງໝົ່ດ. ຢູ່ໃນຈຳນ້ວນ ७ ແ
ຂວ້ງນັ້ນມີ ७ ແຂວ້ງທີ່ສຳເລັດການຫັ່ມກະສິກຳໃຫ້ເປັນລວ່ມ
ໝູ່ແລ້ວ.

ຢູ່ໃນລະບອບສ້ງຄົ່ມນິຍົ່ມ ເພ່ນມີ້ທ້ັດສະນະແບບອ່ົ່ມ ເພ່ື
ແກ້ໄຂບັນຫາດ່ັ່ງກ່າວ. ອຳນ່ດປະຊາຊົ່ນໄດ້ມີຄວ່ມ ອ່ົ່ດທົ່ນ
ທຸ່ມທ່ຽງອົ່ມຂວ່ຍຊາວໄຮ່ນາໃຫ້ເຫັ່ນເຖ່ງຜົ່ນເສ່ຍຫ່ຍ ຂອ
ກ່ດຈະການເອກະເຫດ ໃຫ້ແກ່ຕ່ົວເອ, ຊ່ໃຫ້ເຫັ່ນ ເຖ່ງ
ຄວ່ມຈຳເປັນໃນການເຕ່ົ້າໂຮ່ມກັ່ນເຂ້ົ້າເປັນສະຫະກອນລວ່ມ
ໝູ່. ຢູ່ທ່ ສສສຊ ການປະຕ່ວັດໄດ້ເກ່ດ່ົ່ມແຕ່ປ່ ७ ພ ७ ແລະ
ໃນຕອນຕ້ົ່ນຂອ ງ ປ ७ ຈ ສຳເລັດການຫັ່ມກະສິກຳເປັນລວ່ມ
ໝູ່ ໄ ດ້. ເຫັ່ນ ໄ ດ້ ວ່ າ ເ ພ່ ນ ໃ ຊ້ ເ ວ ລ າ ດ່ົ ນ ມ ານ ເ ທ ່ ໍ າ ໃ ດ ເ ພ ່ ື ອ ເ ຮ ັ ດ
ໃຫ້ຊາວໄຮ່ນາສະໝ່ັກໃຈເຂ້ົ້າເປັນສະຫະກອນກະເສດ ລວ່ມ

ໝູ່. ແມ່ນອນ, ໃນເວລານັ້ນກໍຕ້ອງໄດ້ສ້າງໂຮງຈັກ ໂຮງ
ງານໄປພ້ອມໆກັນ ເພື່ອຜະລິດລິດໄຖນາ ແລະ ລິດກ່ຽວເຂົ້າ
ແຕ່ສິ່ງສຳຄັນຕ້ອງໄດ້ຊຸກຊອນຊາວໄຮ່ມາເສຍກ່ອນ.

ຊົນຊາວໄຮ່ມາພາຍຫລັງທີ່ເຂົ້າເຂົ້າເປັນສະຫະ -
ກອນກະເສດຜະລິດແບບສັງຄົມນິຍົມແລ້ວ ມີອັນປ່ຽນແປງ ຄື
ແນວໃດແທ້ ? ທີ່ດິນ, ສັດລາກແກ່, ພາຫະນະກົນຈັກ, ສະ
ຖານທີ່ຜະລິດ, ລະບົບຊົນລະປະທານ ແລະ ອົນໆບໍ່ແມ່ນເປັນ
ຊັບສົມບັດຂອງບຸກຄົນຈຳນວນໃດໜຶ່ງ ແຕ່ຫາກເປັນຂອງໝົດ
ທ່ວໂສະຫະກອນ, ເຊັ່ນຕົວຢ່າງ, ທີ່ເຕົ້າໂຮມເອົາປະຊາ ຊົນ
ຂອງບ້ານໜຶ່ງ. ຜູ້ທີ່ຮັບຜິດຊອບ ນຳພາສະຫະກອນນັ້ນຈະຖືກ
ຄັດເລືອກເອົາໂດຍກອງປະຊຸມເປີດກວ້າງຂອງສະມາຊິກທຸກໆ
ຄົນ ແລະ ຈະຕ້ອງຮັບຜິດຊອບໝົດທຸກວຽກງານທີ່ຖືກ ມອບ
ໝາຍ. ດ້ວຍເຫດນີ້ເອງ ແຕ່ລະຄົນທີ່ຢູ່ສະຫະກອນລວມ ໝູ່
ສາມາດມີສິດກວດກາວຽກງານຂອງບັນດາຜູ້ນຳພາທີ່ຕົນເລືອກ
ຕັ້ງຂຶ້ນມານັ້ນ. ແຕ່ລະຄົນທີ່ເຂົ້າຢູ່ໃນສະຫະກອນ ຈະໄດ້ ຮັບ
ໜ້າວຽກໃດໜຶ່ງ ແລະ ອັດຕາຄ່າແຮງງານທີ່ກຳນົດໄວ້ແລ້ວ
ນັ້ນ ສຳລັບວຽກງານທີ່ຕົນຮັບຜິດຊອບ. ສະຫະກອນ ກະເສດ
ລວມໝູ່ ມີສິດໃຊ້ເງິນສ່ວນລວມເພື່ອກໍ່ສ້າງຄອກລ້ຽງສັດ ,
ເຮືອນຢູ່, ສະໂມສອນ, ໂຮງຮຽນ, ໂຮງໝໍ, ທໍ່ນ້ຳປະປາ,
ຖະໜົນຫົນທາງ-ໝາຍຄວາມວ່າໝົດທຸກສິ່ງທຸກຢ່າງ ທີ່ຖືວ່າ
ຈຳເປັນແກ່ບັນດາສະມາຊິກຂອງສະຫະກອນ, ມີສິດຊື້ ລິດໄຖ
ນາ, ລິດກ່ຽວເຂົ້າ, ລິດບັນທຸກ ແລະ ລິດເກັ່ງ, ຝູງສັດ -
ລາກແກ່ພັນດີ, ຝຸ່ນວິທະຍາສາດ ແລະ ອົນໆ, ສາມາດ ໃຊ້
ຈ່າຍໃຫ້ບັນດານັກວິຊາການ-ການກະເສດ, ນັກວິຊາການ -

ເຕັກນິກກ່ຽວກັບສັດ, ນັກວິຊາການດ້ານສັດຕະວະແພດ, ນັກ
ວິສະວະກອນ, ນັກວິຊາການດ້ານປັບປຸງດິນ, ນາຍແພດແລະ
ອື່ນໆ. ຕາມທຳມະດາແລ້ວ, ສະມາຊິກຂອງສະຫະກອນ ກະ
ເສດ ຈະໄດ້ຕອນດິນນ້ອຍໜຶ່ງເປັນກຳມະສິດສ່ວນຕົວ ເພື່ອ
ເຂົ້າຈະສາມາດເຮັດເສດຖະກິດສຳຮອງສ່ວນຕົວປູກຝັງພືດພັນ
ຕາງໆ ທີ່ເປັນປະໂຫຍດແກ່ເຂົາເອງແລະນອກນັ້ນເຂົ້າກໍຍັງມີ
ສັດປະເພດລ້ຽງແກ່ອີກຈຳນວນໜ້ອຍໜຶ່ງ. ສິ່ງທັງໝົດເຫລົ່ານີ້
ລ້ວນແຕ່ເພື່ອການຊົມໃຊ້ສ່ວນຕົວແລະຄອບຄົວເທົ່ານັ້ນ ເຂົ້າຈະ
ໄດ້ຮັບຄ່າຕາຄາແຮງງານກໍຕໍ່ເມື່ອຈະການສ່ວນລວມນຳອີກ.

ແນ່ນອນ, ຢູ່ໃນແຕ່ລະປະເທດສັງຄົມນິຍົມນັ້ນ ກໍມີລັກສະ
ນະພິເສດຂອງໃຜລາວໃນສະຫະກອນກະເສດລວມໝູ່. ເຊັ່ນ
ຕົວຢ່າງ ມີຄວາມແຕກຕ່າງກັນທາງດ້ານລະບຽບ ຫລັກການ
ຈ່າຍຄ່າແຮງງານ, ການຈັດຕັ້ງຂອງສະຫະກອນ, ຮູບການ
ເຂົ້າປະກອບສ່ວນໃນວຽກງານລວມຂອງ, ບໍລິມາດ ແລະ ຂົດ
ຂາດຂອງການເຮັດສ່ວນຄົວຢູ່ພາຍໃນຊີວິດຂອງສະຫະກອນກະ
ເສດ ແລະ ຄວາມແຕກຕ່າງອື່ນໆອີກ. ຄວາມແຕກຕ່າງ ທັງ
ໝົດເຫລົ່ານີ້ແມ່ນມາຈາກເງື່ອນໄຂຕົວຈິງຂອງແຕ່ລະປະເທດ.
ແຕ່ວ່າພື້ນຖານຂອງຮູບການຈັດຕັ້ງ ແມ່ນແບບດຽວກັນໝົດ.

ພວກເຮົາເຫັນວ່າ ການເຮັດສະຫະກອນກະເສດລວມໝູ່
ໄດ້ເຮັດໃຫ້ການດຳລົງຊີວິດຂອງຊາວໄຮ່ນາມີການ ຫັນປ່ຽນ
ຢ່າງເຖິງຖ້ວງ. ຈາກການເປັນເຈົ້າກຳມະສິດສ່ວນຕົວ ຂະ
ໜາດນ້ອຍ ເຂົ້າໄດ້ກາຍເປັນຜູ້ໜຶ່ງທີ່ເປັນເຈົ້າຂອງ ຂອງ
ກຳມະສິດສ່ວນລວມຕ່ຳພາຫະນະການຜະລິດ ຫລືຈະເວົ້າແບບວິ

ທະຍາສາດແລ້ວ ແມ່ນຈາກການເປັນນາຍຫົມນ້ອຍ ເຂົ້າ ໄດ້ກາຍເປັນນັກອອກແຮງງ່ານສັງຄົມນິຍົມ. ເຂົ້າໄດ້ເລີ່ມ ປະກອບສ່ວນເຂົ້າໃນການຈັດຕັ້ງອອກແຮງງານສ່ວນລວມ ຄຽງບ່າຄຽງໄຫລ່ກັບເພື່ອນສະຫາຍຕ່າງໆຂອງຕົນ ພາຍໃຕ້ການຊຸ້ນຳຂອງບັນດາຫົວໜ້າທີ່ຕົນຄັດເລືອກຂຶ້ນມາເອງນັ້ນ. ແຕ່ສິ່ງດັ່ງກ່າວນີ້ ມັນຮຽກຮ້ອງໃຫ້ມີລະບຽບວິໄນແຮງງານຢ່າງເຄັ່ງຄັດ ກໍ້ຍ້ອນວ່າມັນແມ່ນການອອກແຮງງານລວມໝູ່ນັ້ນເອງ . ຖ້າຢູ່ໃນການທຳມາຫາກິນແບບສ່ວນຕົວແລ້ວ ຜູ້ທີ່ຂີ້ຄ້ານ ມັກງ່າຍຄົນໃດຈະຕື່ນນອນຫລ້າສາຍກໍໄດ້ຕາມໃຈມັກ: ເພາະຄວາມອັບປະໂຫຍດຈະເກີດມີໃສ່ແຕ່ຕົວເຂົ້າເອງຜູ້ດຽວ ເທົ່ານັ້ນ. ແຕ່ວ່າບັດນີ້ ຖ້າຫົວໜ້າງານ ຫລືປະທານສະຫະກອນ ກະເສດຫາກໃຫ້ຄຳສັ່ງໜຸກໆຄົນຕ້ອງເລີ່ມລົງມືເຮັດວຽກແຕ່ຟ້າໂມງເຊົ້າຕາມສະຖານທີ່ ທີ່ຖືກມອບໝາຍໃຫ້ແລ້ວ ເມື່ອນັ້ນ ຢາກຫລົ່ບຢາກກໍຕາມ ຈຳເປັນຕ້ອງໄດ້ລຸກເດີກຕື່ນເຊົ້າ ... ແມ່ນແລ້ວ, ຈະຕ້ອງສ້າງຄວາມຊຸ່ມເຄີຍຕໍ່ການອອກແຮງງານລວມໝູ່, ຈະຕ້ອງເອົາຕົວຂ້າມຜ່ານຈາກຄຳທີ່ວ່າ "ຂອງຂ້ອຍ" ໄປສູ່ "ຂອງພວກເຮົາ", ຈະຕ້ອງ ຝຶກຝົນຫລໍ່ຫລອມຕົນເອງໃຫ້ເກີດມີແນວຄິດສູ້ຊຸ່ນ ສ້າງຄວາມອຸດົມພູນສຸກບໍ່ພຽງແຕ່ເພື່ອຕົນເອງເທົ່ານັ້ນ ແຕ່ລວມທັງໝົດທົ່ວສະຫະກອນນັ້ນນຳອີກ . ແມ່ນອນ ສິ່ງທັງໝົດເຫລົ່ານີ້ ຈະບໍ່ບັງເກີດຂຶ້ນໄດ້ໃນທັນທີທັນໃດ. ຄວາມຊຸ່ມເຄີຍແບບຫລ້າຫລັງຕ່າງໆຈະສິ່ງຜົນສະທ້ອນບໍ່ດີອອກເປັນເວລາດົນນານສົມຄວນ. ມັນແມ່ນການຫັນປ່ຽນຢ່າງຮອບດ້ານຢູ່ໃນຊີວິດ ແລະ ມັນມີຄວາມຈຳເປັນທີ່ສຸດ. ຜົນຮັບ

ຈາກການຫັນປ່ຽນດັ່ງກ່າວຄືການປັບປຸງຊີວິດການເປັນຢູ່ ທັງ
ໝົດຂອງຊາວໄຮ່ນາໃຫ້ດີສູງຂຶ້ນຢ່າງຫລວງຫລາຍ. ເຊັ່ນວ່າ
ປີ ສສສຊ ໃນປີ ໑ພຊນ ລາຍໄດ້ຂອງພວກສະຫະກອນ ກະ
ເສດລວມໝູ ໄດ້ເພີ່ມຂຶ້ນ ກ,ກ ເທື່ອທຽບໃສ່ປີ ໑ພ໔໐ ຊຶ່ງ
ໃນເວລານັ້ນເພີ່ນຫາກໍ່ສຳເລັດຢ່າງສົມບູນໃນການຫັນເປັນສະ
ຫະກອນກະເສດ. ນຄສ ທີ່ລະບອບສັງຄົມນິຍົມນຳມາສູ່ ຊາວ
ໄຮ່ນາໂຊວຽດ !

ອີກບັນຫາໜຶ່ງທີ່ສຳຄັນຂອງສະໄໝຂ້າມຜ່ານ ແມ່ນດຶງ
ເອົາພວກປັນຍາຊົນສ່ວນໃຫຍ່ໃຫ້ເປັນໃຈກັບການປະຕິວັດ ແມ່ນ
ແຕ່ຊາວປັນຍາຊົນຊຶ່ງໃນເບື້ອງຕົ້ນຈະທຳການຕໍ່ສູ້ຕ້ານຢັນ ກັບ
ອຳນາດປະຊາຊົນ), ແລະ ກໍ່ສ້າງປັນຍາຊົນຂອງປະຊາຊົນ
ແບບໃໝ່ຂຶ້ນ. ພວກນາຍຄູ, ນາຍໝໍ, ນັກວິສະວະກອນ ,
ນັກປາດ, ນັກກະເສດ ສ່ວນຫລວງຫລາຍກໍໄດ້ພອມພຽງ ກັນ
ເດີນຄຽງບ່າຄຽງໄຫລ່ຮ່ວມກັບພວກກຳມະກອນ ແລະຊາວໄຮ່
ນາ. ແຕ່ວ່າໃນບາງຄັ້ງ ພວກຂຶ້ນເທິງຂອງກຸ່ມສັງຄົມ ອັນມີ
ໂດຍສະເພາະຢ່າງຍິ່ງແມ່ນພວກທີ່ກຳເນີດມາຈາກຄອບຄົວຮັ່ງ
ມີໄດ້ພາກັນຈັດຕັ້ງເຂົ້າມາໃຫ້ວ່າງເພ້ຕາມອຳນາດປະຊາຊົນ.
ສະນັ້ນ ຈຳເປັນຕ້ອງຕໍ່ສູ້ຕ້ານຄຶ້ນກັບຄົນເຫລົ່ານີ້ ແຕ່ສຳລັບ
ພວກທີ່ຍົ້ມຍອວຍໄດ້ນັ້ນ ກໍຈະຕ້ອງນຳພາພວກຂະເຈົ້າ ສ້າງ
ສາສັງຄົມແບບໃໝ່ຮ່ວມກັນ. ລະບອບສັງຄົມນິຍົມບໍ່ຫອມ ຈະ
ສ້າງຂຶ້ນໄດ້ຖ້າຂາດຄົນທີ່ມີຄວາມຮູ້ຄວາມສາມາດ ຂາດນັກ ວິ
ຊາການຕ່າງໆ. ເພື່ອຈະດຶງເອົາພວກຂະເຈົ້າມາໄດ້ນັ້ນມີແຕ່
ປະຕິບັດນະໂຍບາຍອັດຕາຄ່າແຮງງານຂອງພວກຂະເຈົ້າໃຫ້ດີ

(ຈັ່ງໃດກໍດີ ຈະບໍ່ໃຫ້ຕຳ່ກວ່າກ່ອນການປະຕິວັດ), ເອົາໃຈ ໃສ່ຕໍ່ພວກຂະເຈົ້າ, ເພາະວ່າອີງໃສ່ແຕ່ແນວຄິດແລ້ວພວກຂະ ເຈົ້າຈະບໍ່ເປັນພັກຝ່າຍກັບລະບອບສັງຄົມນິຍົມໄດ້. ແມ່ນວ່າ ຈະຕ້ອງໄດ້ກໍ່ສ້າງນັກຮົບຮູ້ແບບໃໝ່ທີ່ເປັນຂອງປະຊາ-ຊົນ ແລະ ກ່ອນອື່ນໝົດເພິ່ນຕ້ອງຮັບເອົາລູກເຕົ້າ ຂອງພວກ ກຳມະກອນ ແລະ ຂອງຊາວໄຮ່ນາເຂົ້າຮຳຮຽນຢູ່ໃນມະຫາວິ ທະຍາໄລ, ສະຖາບັນການສຶກສາ ແລະ ໂຮງຮຽນ ຊັ້ນການ ຕ່າງໆ.

ອີກບັນຫາໜຶ່ງທີ່ສຳຄັນກ່ວາໝູ່ໝົດ ຂອງສະໄໝ ຂ້າມ ຜ່ານນັ້ນ ແມ່ນການແກ້ໄຂບັນຫາຊົນຊາດ. ຕົວຈິງແລ້ວ ຢູ່ໃນ ສະໄໝອຳນາດການປົກຄອງເກົ່ານັ້ນ ແມ່ນຊົນຊາດໃດ ໜຶ່ງ ເທົ່ານັ້ນ ທີ່ເປັນຜູ້ປົກຄອງ (ຖ້າວ່າຢູ່ໃນລັດນັ້ນມີຫລາຍ ຊົນ ຊາດຫລືຊົນເຜົ່າ), ສ່ວນຊົນຊາດອື່ນໆແມ່ນຖືກກົດຂີ່ມເຫັງ. ໃນເບື້ອງຕົ້ນອຳນາດປະຊາຊົນຈະຕ້ອງກຳນົດຄວາມ ສະເໝີ ພາບຂອງທຸກໆຊົນຊາດຕໍ່ໜ້າກົດໝາຍ, ຈາກນັ້ນຈົ່ງຄ່ອຍ ໆ ລົບລ້າງຄວາມແຕກຕ່າງກັນຢູ່ໃນເງື່ອນໄຂດຳລົງຊີວິດເປັນຂັ້ນ ຂັ້ນໄປ (ເພາະວ່າກ່ອນການປະຕິວັດຊົນຊາດຫລືຊົນເຜົ່າ ຈຳ ນວນໜຶ່ງໆມີສະພາບຢູ່ກົ້ນຢ່າງອຸດົມສົມບູນ ສ່ວນອີກຈຳນວນ-ໜຶ່ງ ພັດທຸກຍາກລຳບາກໃຈ) ແຕ່ບໍ່ແມ່ນດ້ວຍວິທີການເຣັດ ໃຫ້ການດຳລົງຊີວິດຂອງພວກທີ່ເຄີຍຮັ່ງມີນັ້ນຫລຸດໜ້ອຍ ຖອຍ ລົງແຕ່ຢ່າງໃດ ແຕ່ຫາກດ້ວຍວິທີການຍົກສູງລະດັບການເປັນຢູ່ ຂອງພວກທີ່ທຸກຍາກຄາວເມື່ອກ່ອນນັ້ນ ໃຫ້ສູງຂຶ້ນເທົ່າທຽມກັນ ກັບພວກທີ່ເຄີຍຮັ່ງມີ. ບົນພື້ນຖານດັ່ງກ່າວນີ້ ຄວາມຂັດ ແຍ້ງ

ກັນລະຫວ່າງຊຸມຊາດ ແລະ ຊຸມເຜົ່າຕ່າງໆຈະຖືກລົບລ້າງໄປ ເປັນເທື່ອລະກ້າວ, ຄວາມອາຄາດຍາດໝາງກັນ ໃນເມື່ອ ກ່ອນກໍຈະສູນຫາຍໄປແລ້ວຄ່ອຍໆເກີດມີມິດຕະພາບ ລະຫວ່າງ ປະຊາຊາດທັ່ງໝົດຂຶ້ນ. ເປັນທີ່ເຂົ້າໃຈກັນວ່າ ສົງທັ່ງໝົດນີ້ ມັນຕ້ອງໄດ້ໃຊ້ເວລາບໍ່ໜ້ອຍເລີຍ.

ອີກບັນຫາໜຶ່ງທີ່ສຳຄັນຂອງສະໄໝຂ້າມຜ່ານ ແມ່ນການ ເຮັດການປະຕິວັດວັດທະນະທຳ. ມີແຕ່ຊາວກຳມະກອນ, ຊາວ ໄຮ່ນາ, ພວກປັນຍາຊົນທີ່ມີລະດັບການສຶກສາສູງເທົ່ານັ້ນ ທີ່ ຈະສາມາດສ້າງລະບອບສັງຄົມນິຍົມໃຫ້ບັງເກີດຜົນໄດ້. ຄົນບໍ່ ມີລະດັບຈະບໍ່ສາມາດຂັບລົດໄຖນາ, ເຮັດວຽກກັບເຄື່ອງ ຈັກ ຊຸຍນທີ່ມີຄວາມສັບສົນໄດ້ເລີຍ ແລະ ຍິ່ງໄປກ່ວານັ້ນເວລາໄປ ຊ້ ເຄື່ອງຢູ່ຮ້ານຄ້າ ເຂົ້າຈະບໍ່ຄິດອອກເລີຍວ່າຕົນຖືກເຂົ້າ ໄລ່ ເງິນຜິດໃຫ້ແລ້ວ, ເຂົ້າບໍ່ສາມາດຈະຊຸມຄອງປະເທດຊາດໄດ້. ການປະຕິວັດວັດທະນະທຳ ຈະຕ້ອງລົບລ້າງການສຶກສາທີ່ມີລະ ດັບຕ່ຳ, ໄພ້ກົກໜັ່ງສື ແລະ ການບໍ່ມີລະດັບວັດທະນະທຳ - ຂອງປະຊາຊົນ.

ແຕ່ວ່າສິ່ງດັ່ງກ່າວນີ້ ມັນຍັງບໍ່ພຽງພໍເທື່ອ. ຊາວ ຜູ້ອອກ ແຮງງານແຕ່ລະຄົນຈະຕ້ອງມີຄວາມສາມາດໃນການ ຊຸ້ມໃຊ້ ໜາກຜົນຂອງວັດທະນະທຳທັ່ງຂອງຊຸມຊາດຕົນເອງ ກໍຄືຂອງ ໜົດທົ່ວສັງຄົມມະນຸດ. ສິ່ງດັ່ງກ່າວ ແມ່ນໝາຍເຖິງ ການ ເສີມຂະຫຍາຍວັນນະຄະດີ, ໂຮງລະຄອນ, ໜ້ພິດທະພັນ , ໂທລະພາບ, ໜັ່ງສືພິມ, ຮູບເງົາ ຊຸ່ງທັ່ງໝົດເຫລົ່ານີ້ ຈະ ຕ້ອງແຜ່ຂະຫຍາຍໄປຮອດແຕ່ລະໜ່ວຍງານ.

ຂ້ທີ່ສອງ ນັ້ນໝາຍເຖິງການອົບຮົມແນວຄິດແບບໃໝ່ . ຄົນເຮົາບໍ່ແມ່ນເຄື່ອງຈັກອັດຕະໂນມັດ, ແນວຄິດຂອງຄົນ ຈະ ບໍ່ປ່ຽນໄປຕາມເງື່ອນໄຂຄຳລິງຊຶ່ວິດປະຈຳວັນໄດ້ໃນທັນທີ ທັນ ໃດ. ຖ້າວ່າເຂົ້າຫາກເຕີບໃຫຍ່ຢູ່ໃນລະບອບທຶນນິຍົມ ແລ້ວ ເມື່ອນັ້ນ ແນວຄິດ ແລະ ຄວາມຊຸ່ມເຄີຍຕ່າງໆທີ່ລະບອບທຶນນິ ຍົມໄດ້ ບີ່ມຍ້ອມໄວ້ພາຍໃນຕົວຂອງເຂົ້າ ຊຶ່ງບໍ່ສອດຄ່ອງກັບຊີ ວິດໃໝ່ຫຍັງເລີຍນັ້ນ ມັນຍັງຈະເກາະຫ້ອຍຢູ່ໃນຫົວຂອງເຂົ້າ ຢູ່. ສະນັ້ນ ຈະຕ້ອງໄດ້ສ້າງຄວາມຊຸ່ມເຄີຍຕໍ່ແຮງງານ ສ່ວນ ລວມ ເພື່ອສຶດຜົນປະໂຫຍດຂອງປະຊາຊົນ, ຈະຕ້ອງເຂົ້າໃຈ ວ່າ ສົມບັດຂອງສ່ວນລວມນັ້ນມັນບໍ່ແມ່ນຂອງຜູ້ອື່ນ,ຕ້ອງຮັກສາ ມັນເໝືອນດັ່ງສິ່ງຂອງຂອງຕົນເອງ.ພ້ອມດຽວກັນກໍຈະ ຕ້ອງ ແອບໃຫ້ມີຄວາມຊຸ່ມເຄີຍທີ່ບ່ລວມໝ່ອມມອບ ແລະ ລຶດກຽດ - ຂອງຕົນໃຫ້ແກ່ "ຫົວໜ້າ" ຍ້ອນວ່າໃນສູ່ມ ຫົວໜ້າ ແມ່ນ ເພື່ອນສະຫາຍທີ່ເຈົ້າເອງເປັນຜູ້ມອບໝາຍພາລະໜ້າທີ່ລວມ ໃຫ້ເຂົ້າເປັນຜູ້ນຳພາ. ຈະຕ້ອງລວມແອບເຄົາລົບນັບຖື ຄົນ ອື່ນໆທີ່ເປັນຊົນຊາດອື່ນ, ຊົນເຜົ່າອື່ນ, ຜູ້ທີ່ມີຄວາມເຊື່ອຖືສາ ສະໜາອື່ນອີກ. ຈະຕ້ອງແອບໃຫ້ຕົນເອງເຂົ້າໃຈວ່າ ຈຸດ ໝາຍປາຍທາງຂອງຊີວິດມະນຸດຈະບໍ່ແມ່ນສຶດຜົນປະໂຫຍດ , ກຳໄລ, ຊອກຫາແຕ່ວັດຖຸສິ່ງຂອງເລີຍ ແຕ່ມັນຫາກແມ່ນການ ເສີມຂະຫຍາຍຄວາມສາມາດຂອງສ່ວນບຸກຄົນ. ຫລ້ະ ເວົ້າ ອີກຢ່າງໜຶ່ງແລ້ວ ແມ່ນຕ້ອງທຳການດັດແກ້ແນວຄິດທັງ ໝົດ ຂອງຄົນ, ສ້າງການພົວພັນແບບມິດຕະພາບ, ຊ່ວຍເຫລືອຊຶ່ງ ກັນແລະກັນ ແລະ ການຮ່ວມມືລະຫ່ວ່າງມະນຸດດ້ວຍກັນ.ເຮັດ

ໃຫ້ທັດສະນະທີ່ສະແດງອອກດ້ວຍຄຳເວົ້າວ່າ "ລະຫວ່າງ ມະນຸດກັບມະນຸດ-ແມ່ນຄືໝາໄນ" ນັ້ນຈົບສິ້ນລົງແລ້ວ ເຮັດໃຫ້ເກີດມີ ແນວຄິດໃໝ່ທີ່ວ່າ ລະຫວ່າງມະນຸດ ກັບມະນຸດ ແມ່ນຄືອ້າຍນ້ອງດຽວກັນ.

ເປັນທີ່ເຂົ້າໃຈແລ້ວວ່າ ການຫັນປ່ຽນແນວຄິດນີ້ ມັນຮຽກຮ້ອງຕ້ອງໃຊ້ເວລາຢ່າງຍາວນານທີ່ສຸດ. ລະບອບສັງຄົມນິຍົມ ຖືກຳເນີດເກີດມາຈາກລະບອບທຶນນິຍົມ ທີ່ລົ້ມຕາຍໄປແລ້ວນັ້ນ ແລະ "ຊາກສົບ" ເໜົ່າເໜັນດົ່ງກ່າວ ຂອງລະບອບທຶນນິຍົມ ບໍ່ໄດ້ແກ່ໄປຖິ້ມທາງໃດ, ພວກເຮົາເຫັນມັນຢູ່ເປັນປະຈຳແລະໃນຊ່ວງໄລຍະການເໜົ່າເປື່ອຍຂອງມັນນັ້ນມັນໄດ້ເຮັດໃຫ້ພະຍາດແນວຄິດນາຍທຶນນ້ອຍ "ລະບາດ" ໄປສູ່ຊຸ້ມຄົນ ແລະກຸ່ມຕ່າງໆຂອງຊາວຜູ້ອອກແຮງງານ.

ການພັງທະລາຍຂອງລະບອບທຶນນິຍົມ ແລະການຫັນປ່ຽນຂອງກຳມະສິດທຶນນິຍົມ ໄປເປັນກຳມະສິດສັງຄົມນິຍົມ, ການດັດສ້າງເສດຖະກິດຊາວໄຮ່ນານ້ອຍໃຫ້ເປັນເສດຖະກິດສັງຄົມນິຍົມ (ໃນຮູບການສະຫະກອນລວມໝູ່), ການແກ້ໄຂ ບັນຫາຊຸ້ມຊາດ, ການປະຕິວັດດ້ານວັດທະນະທຳ ທັງໝົດເຫລົ່ານີ້ ບໍ່ສາມາດເຮັດຈົ້ນໄດ້ໃນຊົ່ວພິບຕາດຽວ. ສະນັ້ນ ເພື່ອ ກ້າວສ້າງລະບອບສັງຄົມນິຍົມ ຈຶ່ງຈຳເປັນມີໄລຍະປະຫວັດສາດອັນໜຶ່ງຄື ສະໄໝຂ້າມຜ່ານຈາກລະບອບທຶນນິຍົມ ໄປສູ່ລະບອບສັງຄົມນິຍົມ.

ຕະຫລອດສະໄໝຂ້າມຜ່ານ ຈະເຕັມໄປດ້ວຍການຕໍ່ສູ້ຊຸ້ມຊົນ, ຊຶ່ງແມ່ນການຕໍ່ສູ້ຂອງຊາວຜູ້ອອກແຮງງານທັງໝົດພາຍ

ໃຕ້ການນຳພາຂອງຊົນຊັ້ນກຳມະກອນ ຕ້ານພວກນາຍທຶນ ທີ່ ໂຄ່ນລົ້ມລົງແລ້ວ ແຕ່ຍັງບໍ່ທັນຖືກດັບສູນຢ່າງສົມເຊິ່ງເທື່ອ ໃນ ເວລາດຽວກັນການຕໍ່ສູ້ດ່ວ່າຍັງແມ່ນການຕໍ່ສູ້ຕ້ານການ ທະ ຫານ, ການປົກຄອງ ເພື່ອຕ້ານກັບອິດທິກຳລັງ ແລະ ຮ່ອງ ຮອຍຂອງສັງຄົມເກົ່າ ແລະ ຍັງຫ້ວງແມ່ນ ການສຶກສາອົບ ຮົມ ຄົນໃໝ່ນຳອີກ. ອາວຸດທີ່ສຳຄັນຂອງການຕໍ່ສູ້ດ່ວ່າວ ແມ່ນ ລັດຜະເດັດການກຳມາຊີບ.

ໝາຍຄວາມວ່າ ໃນສະໄໝຂ້າມຜ່ານນີ້ ຍັງບໍ່ທັນ ມີ ຄວາມສະເໝີພາບເທື່ອ ລະຫວ່າງຊົນຊັ້ນກຳມະກອນແລະບັນ ດາກຸ່ມອື່ນໆຂອງຊາວຜູ້ອອກແຮງງານ.

ສະໄໝຂ້າມຜ່ານຈະຖືວ່າສົມສຸດລົງໄດ້ກໍຕໍ່ເມື່ອວ່າຢູ່ພາຍ ໃນປະເທດກຳມະສິດທຶນນິຍົມໄດ້ຖືກລົບລ້າງລົງຢ່າງສົມບູນ - ແລ້ວ ສ້າງຕັ້ງກຳມະສິດລັດສັງຄົມນິຍົມ (ກຳມະສິດຂອງ ທົ່ວ ປວງຊົນ)ຂຶ້ນແທນ ແລະ ກໍຕໍ່ເມື່ອວ່າການດັດສ້າງ ການກະ ສິກຳນາຍທຶນນ້ອຍໄປເປັນການກະສິກຳສັງຄົມນິຍົມສຳເລັດລົງ ໃນຮູບການລວມໝູ່. ນີ້ຄືສິ່ງສຳຄັນຂອງສະໄໝຂ້າມຜ່ານ . ອາດຈະມີບັນຫາອື່ນໆອີກທີ່ຍັງບໍ່ທັນແກ້ໄຂໄດ້ຢ່າງສົມບູນ ເທື່ອ ແຕ່ວ່າສິ່ງສຳຄັນຂອງມັນໄດ້ເຮັດສຳເລັດໄປແລ້ວ ກໍໝາຍ ຄວາມວ່າພື້ນຖານຂອງລະບອບສັງຄົມໄດ້ຖືກສ້າງຂຶ້ນແລ້ວ.

ຢູ່ໃນສະໄໝຂ້າມຜ່ານ ບັນຫາຄວາມສະເໝີພາບຈະແກ້ ໄຂກັນຄືແນວໃດແທ້ ? ຢູ່ໃນສະໄໝນີ້ ຈະຕ້ອງໄດ້ເຮັດ ສິ່ງ ສຳຄັນທີ່ລັກສະນະແບບຕັດສິນເພື່ອການສ້າງຕັ້ງສັງຄົມທີ່ມີຮູບ ເປັນອັນໜຶ່ງອັນດຽວກັນຄື: ຕ້ອງລົບລ້າງການກົດຂີ່ຂູດຮີດຄົນ

ຕໍ່ຄົນ. ຈະຕ້ອງຍົດເອົາດ້ວຍວິທີການໃດໜຶ່ງ ທີ່ເໝັນວ່າ ເໝາະສົມ (ດ້ວຍວິທີສັນຕິ ຫລືບໍ່ສັນຕິ, ດ້ວຍການຍົດຫລື ຊ ເອົາຊັບສົມບັດ) ສິ່ງທີ່ອຳນວຍເງື່ອນໄຂສະດວກໃຫ້ພວກຮົ່ວ ມີ ໄດ້ທຳການກອບໂກຍເອົາໜາກຜົນແຮງງານຂອງຄົນອື່ນໆ ໄດ້ດຳລົງຊີວິດໂດຍອາໃສເຫື່ອແຮງຄົນອື່ນ. ພວກອະດີດນາຍ ທຶນ ແລະ ເຈົ້າທີ່ດິນ (ໃນກໍລະນີທີ່ພວກຂະເຈົ້າບໍ່ໄດ້ ເຕັ້ນ ໂຕນໂຍນໜີໄປຕ່າງປະເທດ) ຈຳເປັນຈະຕ້ອງໄດ້ ກາຍ ເປັນຜູ້ອອກແຮງງານ ແລະ ຫາລ້ຽງຊີບດ້ວຍເຫື່ອແຮງ ຂອງ ຕົນເອງ. ຖ້າວ່າພວກຂະເຈົ້າຫາກຈົງໃຈເຮັດວຽກເພື່ອ ປະ ຊາຊົນຂອງຕົນຢ່າງແທ້ຈິງແລ້ວ ເມື່ອນັ້ນ ກໍຈະບໍ່ມີຜູ້ໃດທີ່ຈະຖື ເອົາອະດີດທີ່ຜ່ານມາຫລັ້ນກຳເນີດເປັນຄວາມຜິດ ຂອງພວກ ຂະເຈົ້າເລີຍ.

ຈາກຜົນຂອງການລົບລ້າງການກົດຂີ່ຂູດຮີດນັ້ນ ສະ ພາບ ການເປັນຢູ່ທາງດ້ານວັດຖຸຂອງຊາວກຳມະກອນ ແລະຊາວໄຮ່ ນາຈະຖືກປັບປຸງດີຂຶ້ນ, ອັດຕາຄ່າແຮງງານຂອງພວກຂະເຈົ້າ ກໍຈະເພີ່ມສູງຂຶ້ນເຊັ່ນກັນ. ກ່ອນອື່ນໝົດອັດຕາຄ່າແຮງ ງານ ຖືບຕ້ອງສູງແມ່ນຍ້ອນວ່າບັດນີ້ພາກສ່ວນຜົນຜະລິດທີ່ພວກ ຂະ ເຈົ້າເປັນຜູ້ຜະລິດຂຶ້ນມານັ້ນ ຈະບໍ່ໄດ້ຖືກກອບໂກຍ ໂດຍພວກ ນາຍທຶນ ຫລືພວກເຈົ້າທີ່ດິນອີກແລ້ວ. ເປັນທີ່ເຂົ້າໃຈ ກັນວ່າ ໃນພາກຕ້ອງຈ່າຍໄດ້ຂອງພວກນາຍທຶນ ແລະ ເຈົ້າທີ່ດິນຈະ ຖືກຫລຸດຕ່ຳລົງ ແລະ ເທົ່າທຽມກັບອັດຕາຄ່າຈ້າງຂອງພວກທີ່ ເປັນຊາວຜູ້ອອກແຮງງານໃນເມື່ອກ່ອນພຸ້ນ. ນິຄໄລຍະ ໜຶ່ງ ໄລຍະຄຽວຢູ່ໃນປະຫວັດສາດຂອງລະບອບກອມມູນິດ ໃນເມື່ອ

ຄວາມເທົ່າທຽມກັນຢູ່ໃນເງື່ອນໄຂດຳລົງຊີວິດໄດ້ປະຕິບັດ ກັນ ດ້ວຍວິທີການຫລຸດລາຍໄດ້ຂອງບຸກຄົນທີ່ມີລາຍໄດ້ສູງນັ້ນໃຫ້ຕຳ ລົງຈົນເທົ່າກັບລະດັບການຄອງຊີບຂອງຄົນທີ່ມີລາຍໄດ້ຕຳ່ . ສ່ວນຢູ່ໃນໄລຍະຂັ້ນອື່ນໆຂອງການຂະຫຍາຍຕົວຂອງຮູບ ຖານ ກອມມູນິດນັ້ນ ຄວາມເທົ່າທຽມກັນ (ທາງດ້ານລາຍໄດ້, ທາງ ດ້ານການສຶກສາ ແລະ ທາງດ້ານຄວາມອາດສາມາດໃນການ ບຸກໜ້າຂຶ້ນຕໍ່ທາງດ້ານສັງຄົມ ແລະ ອື່ນໆ) ຈະໄດ້ປະຕິບັດ ກັນດ້ວຍວິທີການຊຸກຍູ້ພວກທີ່ຫລ້າຫລັງທັງໝົດໃຫ້ກ້າວທັນເຖິງ ລະດັບຂອງພວກທີ່ກ້າວໜ້າສູງສຸດແລ້ວນັ້ນ. ຢ້ຶກເວັ້ນແບບນີ້ ໃນສະໄໝຂ້າມຜ່ານແມ່ນມີຄວາມຈຳເປັນໃຫ້ແກ່ການ ກໍ່ສ້າງ ສັງຄົມແບບໃໝ່ທາງດ້ານພົນຖານອັນ.

ຕາມທຳມະດາແລ້ວ ຄວາມເທົ່າທຽມກັນທາງດ້ານ ສະ ພາບການດຳລົງຊີວິດຂອງຄົນເຮົາ ຈະບໍ່ໄດ້ຈຳກັດດ້ວຍລະດັບ ລາຍໄດ້ແຕ່ຢ່າງໃດເລີຍ. ຢູ່ໃນຫລາຍໆປະເທດສັງຄົມນິຍົມ-ໃນສະໄໝຂ້າມຜ່ານນີ້ ເພິ່ນໄດ້ພະຍາຍາມສ້າງເງື່ອນໄຂສະ ດວກໃຫ້ໜົດທຸກໆຄົນໄດ້ມີເຮືອນຢູ່ດ້ວຍສະພາບຫລຸດລົ່ມ ກັນ ພຽງຂະໜາດສຳໃດສຳໜຶ່ງເທົ່ານັ້ນ. ຢູ່ໃນປະເທດລັດເຊຍ ສະໄໝພະເຈົ້າຊາ ພວກຮັ່ງມີ (ພວກນາຍທຶນ, ພວກເຈົ້າທີ່ ດິນ, ເຈົ້ານາຍຂັ້ນສູງ) ໄດ້ມີເຮືອນຢູ່ຢ່າງໂອໂຖງສອຍງາມ ຫລາຍຫ້ອງເຮືອນປະກອບດ້ວຍ ๕-๑๐ ຫ້ອງນອນ, ແຕ່ໃນເວ ລາດຽວກັນ ພວກກຳມະກອນຕ້ອງໄດ້ໜຶ້ນຫ້ອນອນຢູ່ຕາມຫ້ອງ ເຮືອນໃຕ້ດິນ, ຕາມສະຖານທີ່ພັກເຊົ່າອັນປຽກຊຸ່ມ,ຕາມຫ້ອງ ນອນລອມອື່ນໆ ຊຶ່ງເປັນສະຖານທີ່ ທີ່ລັບແຄບ, ເຮັດໃຫ້ພວກ

ກຳມະກອນເກືອບຈະຕ້ອງໄດ້ນອນຫຍັດແຫ້ຢັ້ນເປັກັນ, ແຕ່ລະ
ຄອບຄົວຂັ້ນກັ້ນດ້ວຍຜ້າກັ້ງເທົ່ານັ້ນ. ພວກນາຍທຶນຫລາຍໆຄົນ
ໄດ້ຊຸເຮືອນຫລາຍໆຫລັງແລ້ວແບ່ງປັນເປັນຫ້ອງເຮືອນໃຫ້ພວກ
ກຳມະກອນເຊົ່າຢູ່ແລ້ວເບີ່ບເອົາຄ່າເຊົ່າຈາກພວກ ຂະເຈົ້າ
ຢ່າງບໍ່ປານີກັນເລີຍ. ເພາະສະນັ້ນການປະຕິວັດຈຶ່ງໄດ້ ອອກ
ປ່າວຄຳຂວັນວ່າ "ຂໍໃຫ້ກະຕູບນ້ອຍຈຶ່ງມີແຕ່ສັນຕິພາບ, ປະ
ກາດສົງຄາມກັບຫໍໂຮງ". ພາຍຫລັງຍຶດເອົາຫໍໂຮງຕ່າງໆມາ
ເປັນຂອງປະຊາຊົນແລ້ວ ເພິ່ນກໍໄດ້ຈັດຕັ້ງປັບປຸງໃຫ້ເປັນຫໍ ພິ
ພິດທະພັນ, ສະຖານທີ່ການສຶກສາ, ໂຮງໝໍ. ຢູ່ທີ່ໂຮງ ພະ
ເຈົ້າຊາເກົ້າຫລ້ວາດນັ້ນ ເພິ່ນໄດ້ຈັດໃຫ້ເປັນເຮືອນບຳລຸງ ສຸ
ຂະພາບຂອງພວກກຳມະກອນ ແລະ ຊາວໄຮ່ນາ, ແລະພວກ
ຂະເຈົ້າຫລາຍໆຄົນກໍມັກເຮັດຕະຫລົກຫລິ້ນໄປນັ່ງຢູ່ແທ່ນບັນລັງ
ພະເຈົ້າຊາ, ສ່ວນເຮືອນຕ່າງໆທີ່ມີຂະໜາດນ້ອຍກວ່າຫໍໂຮງ
ນັ້ນ ກໍໄດ້ເຮັດເປັນເຮືອນຢູ່ໃຫ້ພວກກຳມະກອນດ້ວຍການເກັບ
ຄ່າຢູ່ທີ່ຕ່ຳທີ່ສຸດຢູ່ໃນໂລກ ປະຈຸບັນນີ້ (ແລະສົ່ງດ່ວນກ່ວມັນ
ໄດ້ເພິ່ມລາຍໄດ້ຂອງກຳມະກອນແລ້ວຂຶ້ນເປັນ ໑/ນ ຫລືທົບ
ເຄິ່ງຊ່ຳ).

ອີກດ້ານໜຶ່ງ ທີ່ສຳຄັນໃນການລົບລ້າງຄວາມບໍ່ສະເໝີ-
ພາບທາງດ້ານສັງຄົມ ແມ່ນການສ້າງສະຫະກອນລວມໝູ່ຂອງ
ຊາວໄຮ່ນາ, ນາຍຊ່າງຫັດຖະກຳ ແລະ ພໍ່ຄ້າຊາວຂາຍຕ່າງ
ຕ່າງ. ໃນເບື້ອງຕົ້ນຂອງສະໄໝຂ້ານຜ່ານນີ້ ພວກກຳມະ -
ກອນໄດ້ກາຍເປັນຊົນຊັ້ນສັງຄົມນິຍົມແລ້ວ ໝາຍຄວາມວ່າໄດ້
ກາຍເປັນຊົນຊັ້ນເຈົ້າຂອງສ່ວນລວມຕ່ຳຫະນະການຜະລິດ ;

ສ່ວນພວກຊາວໄຮ່ນາ, ພວກນາຍຊ່າງຫັດຖະກຳ ແລະ ພວກ
ພໍ້ຄ້ານັ້ນ ຍັງຄົງເປັນພວກນາຍທຶນນ້ອຍຢູ່ຕາມເດີມ.ດ້ວຍເຫດ
ນີ້ ສອງຊົນຊັ້ນຂອງຊາວຜູ້ອອກແຮງງານ ຈຶ່ງແຕກຕ່າງ ຈາກ
ກັນຕາມຫລັກເກນ ແລະ ເປັນຄົນລະຄົນໄປ. ພາຍຫລັງ ສຳ
ເລັດການຫັນເປັນສະຫະກອນລວມໝູ່ໄດ້ແລ້ວ ເມື່ອນັ້ນ ພວກ
ຂະເຈົ້າໄດ້ກາຍເປັນຊົນຊັ້ນທີ່ລາຍຄືກັນ, ເປັນຊົນຊັ້ນສັງຄົມນິ
ຍົມ, ເປັນເຈົ້າຂອງທີ່ບໍ່ແມ່ນຂອງສ່ວນຕົວ ແຕ່ຫາກເປັນເຈົ້າ
ຂອງສ່ວນລວມຕໍ່ພາຫະນະການຜະລິດຢູ່ໃນລະດັບດຽວກັນ .
ໝາຍຄວາມວ່າ ຢູ່ໃນສະໄໝຂ້າມຜ່ານນີ້ ຄວາມເຫົ່າທຽມ-
ກັນ ຕົວຈິງ ທາງດ້ານສະພາບການເປັນຢູ່ໄດ້ເກີດມີຂຶ້ນ ລວມ
ທັງຂອງບັນດາຊາວຜູ້ອອກແຮງງານເອງດ້ວຍ.

ອີກດ້ານໜຶ່ງທີ່ສຳຄັນຂອງຂະບວນວັດທະ ແມ່ນການ ລຶບ
ລ້າງໄພທ່ວງງານ. ຢູ່ໃນຕົວຈິງແລ້ວ ຈະມີຄວາມ ສະເໝີ
ພາບກັນໄດ້ບໍ ລະຫ່ວາງກຳມະກອນຜູ້ໜຶ່ງ ທີ່ມີຍຸກເຮັດ ຢູ່
ໂຮງງານແລ້ວ ແລະ ອີກຜູ້ໜຶ່ງພັດຫ່ວາງງານ ? ຜູ້ທີ່ໜຶ່ງ-
ໄດ້ຮັບອັດຕາຄ່າຈ້າງຂະໜາດໃດໜຶ່ງ ແລະ ເຂົ້າກໍ່ມີ ສິ
ບັນເທົາຊີວິດໄດ້ ແລະ ລ້ຽງລູກເຕົ້າໄດ້ແລ້ວ. ສ່ວນຜູ້ທີ່ສອງ
ພັດໄດ້ປະກອບອາຊີບແບບບໍ່ຄົງທີ່ ຫລືໄດ້ຮັບອັດຕາຊຸດໜຸນຂະ
ໜາດຕ່ຳສຸດໄປຊໍ່ທານກິນ. ຍິ່ງຮ້າຍໄປກ່ວານັ້ນ ຫາກ ເຂົ້າ
ຂາດຄວາມຫວັ່ງຢ່າງໝົດສິ້ນແລ້ວ ເຂົ້າຈຳເປັນຕ້ອງລັກເຂົ້າ
ຫລືຂ້າຕົວຕາຍ. ອີງຕາມຂໍ້ມູນຂອງຫ້ອງການຄົ້ນຄ້ວາເສດຖະ
ກິດແຫ່ງຊາດຂອງສະຫະລັດອາເມລິກາ, ການເຕີບໃຫຍ່ຂອງ
ໄພທ່ວງງານໃນໜຶ່ງເປີເຊັນຢູ່ພາຍໃນປະເທດຈະເຮັດ ໃຫ້

ຈຳນວນຄົນຂ້າຕົວຕາຍ ແລະ ຈຳນວນຄົນຖືກກັກຂັງຢູ່ຄຸກເພີ່ມ ຂຶ້ນເຖິງ ๔%, ຈຳນວນການໂຈລະກຳຕ່າງໆຈະເພີ່ມ ຮອດ ๕,๗ %.

ໃນສະໄໝຂ້າມຜ່ານນີ້ ໄພຫວ່າງງ່ານຈະສູນຫາຍ ໄປ ແລະ ນັ້ນກໍໝາຍຄວາມວ່າຄວາມແຕກຕ່າງກັນລະຫວ່າງສອງ ກຸ່ມຂອງພວກກຳມະກອນຄົນພວກທີ່ມີຄຸກເຮັດ ແລະ ພວກທີ່-ຫວ່າງງ່ານກໍຈະໄດ້ຖືກລົບລ້າງລົງ. ນັ້ນຄວາມເທົ່າທຽມ ກັນ ອັນແທ້ຈິງໃນເງື່ອນໄຂຄຳລົງຊົ່ວຄົນຢູ່ພາຍໃນຊຸມຊຸ້ມກຳມະກອນ.

ໂດຍທົ່ວໄປແລ້ວ ກ່ອນອື່ນໝົດ ການປະຕິວັດສັງຄົມນິຍົມ ຈະໄດ້ຍົກສູງລະດັບຊົ່ວຄົນການເປັນຢູ່ຂອງຊຸ້ມຄົນທີ່ທຸກຍາກທີ່ສຸດ ນັ້ນອ້ນ, ຈະກອບກູ້ເອົາຊົ່ວຄົນຂອງພວກຂະເຈົ້າໃຫ້ຫລຸດ ພົ້ນ ອອກຈາກຄວາມຕາຍດ້ວຍຄວາມອຶດຫິວ, ຈາກການກົ້ມ ບ່ອ້ມ ເຕັ້ມ. ສິ່ງດ່ຽງກ່ານີ້ແມ່ນສຳຄັນທີ່ສຸດ. ຍ້ອນວ່າໃນສູ້ມປູ່ປະ ເທດຮ່ຳ່ມທີ່ສຸດຂອງໂລກຄ່ຽຢ່ອາເມລິກາທ້ມນິຍົມທ້ອດອ້າງຜົ່ນ ສຳເລັດຕ່າງໆຂອງຕົ້ນນັ້ນ ມີຄົນອຶດຫິວ ແລະ ກ້ມບ່ອ້ມ ເຕັ້ມ ເປັນປະຈຳນັບເປັນ ๘๐ ລ້ານຄົນ. ພວກໜ້ງກ້ມອ້ມໂພດອີກ ພວກໜ້ງພັດອຶດຫິວ ມີຄຮູບພາບປະຈຳຕົວຂອງລະບອບ ທ້ມນິ ຍົມ. ການຂ້າມຜ່ານໄປສູ່ລະບອບສັງຄົມນິຍົມ ຈະລົບລ້າງ ຄວາມບ່ເປັນທ່ຽງກ່ານ້ມ.

ຢູ່ໃນສະໄໝຂ້າມຜ່ານນີ້ ການລົບລ້າງຄວາມບ່ ສະເໝີ ພາບກັນລະຫວ່າງອະດີດພວກຊູດຮ໊ດ, ຊາວການະກອນ ແລະ ຊາວໄຮ່ນາທາງດ້ານລະດັບການສ໊ກສາແລະວັດທະນະທຳ ນັ້ນ ແມ່ນສິ່ງຫຍຸ້ງຍາກທີ່ສຸດ. ເຖິງແມ່ນວ່າໂຮງຈັກໂຮງງ່ານ, ບ່

ລັດການຄ້າຕ່າງໆຂອງພວກນາຍທຶນ, ທຶດົນຂອງພວກເຈົ້າທີ່ ດົນໄດ້ຖືກຍົດແລ້ວກໍຕາມ ແຕ່ວ່າພວກຂະເຈົ້າຍັງຈະມີ ຄວາມ ເດັ່ນເລີດກ່ວາຊາວຜູ້ອອກແຮງງານຢູ່ຢ່າງຫລວງຫລາຍ ທາງ ດ້ານລະດັບການສຶກສາສູງ ຈຶ່ງຈະໄດ້ແກ່ຍາວເວລາ ໄປອີກ ນານ. ຕາມຕົວເລກຂອງປີ ໑໙໙໓ ຢູ່ປະເທດລັດເຊຍປະຊາ ຊົນທີ່ຮູ້ໜັງສືມີພຽງແຕ່ ໔໙,໔% ເທົ່ານັ້ນ. ຊາວກຳມະກອນ ສ່ວນໃຫຍ່ບໍ່ຮູ້ໜັງສືສ່ວນພວກຊາວໄຮ່ນາ ບໍ່ຮູ້ໜັງສືເກືອບວ່າ ໝົດທຸກຄົນ. ແຕ່ໃນເວລາດຽວກັນ ພວກນາຍທຶນ ແລະພວກ ເຈົ້າທີດົນສ່ວນຫລວງຫລາຍໄດ້ຮັບການສຶກສາຊັ້ນສູງຫລື ຊັ້ນ ກາງ. ໃນເມື່ອຕັ້ງບັນຫາວ່າດ້ວຍການກໍ່ສ້າງປັນຍາຊົນປະຊາ ຊົນ, ວ່າດ້ວຍການຮັບເອົາຊາວກຳມະກອນ, ຊາວໄຮ່ ນາ ແລະ ລູກເຕົ້າຂອງພວກຂະເຈົ້າເຂົ້າຮຽນຢູ່ຕາມສະຖາບັນ - ການສຶກສາຊັ້ນສູງນັ້ນ ພວກເຮົາໄດ້ພົບກັບຄວາມຫຍຸ້ງຍາກ ສັບສົນນາໆປະການ. ສະນັ້ນເພື່ນຈຶ່ງໄດ້ຈຳເປັນເປີດນັ້ນ ລົບ ລ້າງໄພ້ກົກໜັງສື (ແລະລວມທັ້ງຕັ້ງສະມາຄົມພິເສດ) ຂຶ້ນ ເພື່ອທຳການລົບລ້າງໄພ້ກົກໜັງສື. ຢູ່ໃນທຸກໆສະຖາບັນການ ສຶກສາ ເພື່ນໄດ້ຈັດຕັ້ງໃຫ້ມີກອງການສຶກສາສຳລັບກຳມະກອນ ຂຶ້ນ ຈຶ່ງໃນນັ້ນພວກກຳມະກອນຊາວໄຮ່ນາ ແລະລູກເຕົ້າຂອງ ພວກຂະເຈົ້າທີ່ຍັງບໍ່ທັນຈົບການສຶກສາຊັ້ນກາງ, ໃນໄລຍະປະ ມານ ๔ ປີ ພວກຂະເຈົ້າກໍຈະພື່ນພຶນຖານກ້າວຂຶ້ນຮຳຮຽນຕໍ່ຢູ່ ສະຖາບັນໄດ້. ສາມາດເວົ້າໄດ້ວ່າ ກອງການສຶກສາ ສຳລັບ ກຳມະກອນໄດ້ໃຫ້ຜົນຢ່າງຫລວງຫລາຍທີ່ສຸດ. ຊາວກຳມະ - ກອນທີ່ຈົບການສຶກສາ ຈຳນວນຫລວງຫລາຍໄດ້ພາກັນ ສູ້ຊົນ

ຜ່ານຜ່າກັບຫລັກສູດການສຶກສາໄດ້ຢ່າງສຳເລັດຜົນ ແລະພາຍ
ລຸນມາ ພວກຂະເຈົ້າຫລາຍໆຄົນ ໄດ້ກາຍເປັນນັກປາດ, ນັກວິ
ສະວະກອນ, ພະນັກງານພັກ ແລະ ພະນັກງານລຸ້ນຄອງເສດ
ຖະກິດ ທີ່ສຳຄັນ.

ເປັນທີ່ຈະແຈ້ງວ່າ ພວກຂະເຈົ້າມີຄວາມຫຍຸ້ງຍາກທີ່ສຸດທີ
ຈະແຂ່ງຂັນກັນທາງດ້ານການສຶກສາກັບພວກລູກເຕົ້າຂອງ ອະ
ດີດພວກນາຍທຶນ ຫລືພວກເຈົ້າທີ່ດິນຕ່າງໆຊຶ່ງໄດ້ຮັບການ ສຶກ
ສາອົບຮົມເປັນຢ່າງດີມາແລ້ວຕັ້ງແຕ່ຍັງນ້ອຍພຸ້ນ. ເພາະສະ
ນັ້ນ ເພື່ອຈະໃຫ້ລູກເຕົ້າຂອງຊາວກຳມະກອນ ແລະຂອງຊາວ
ໄຮ່ນາໄດ້ຮັບການສຶກສາຊັ້ນສູງເປັນອັນດັບທຳອິດນັ້ນ ໃນຊຸມປີ
ຫ໐-ຫ໐ ຢູ່ທີ່ ສສສຊ ເພິ່ນຈຶ່ງໄດ້ມີການຈຳກັດຮັບເອົາ ລູກ
ເຕົ້າຂອງພວກເຈົ້າທີ່ດິນ ແລະ ຂອງພວກນາຍທຶນ ເຂົ້າຮຳ
ຮຽນຢູ່ຕາມໂຮງຮຽນວິຊາຊີບຊັ້ນສູງ ແລະ ຊັ້ນກາງ. ດັ່ງນັ້ນ
ເພື່ອບັນລຸເຖິງຄວາມສະເໝີພາບອັນແທ້ຈິງ ເພິ່ນຈຳເປັນຈະ
ຕ້ອງໄດ້ປະຕິບັດຄວາມບໍ່ສະເໝີພາບທາງດ້ານກົດໝາຍຊົ່ວ-
ນຳອີກ. ນັ້ນຄືສະພາບຄວາມຫຍຸ້ງຍາກ ແລະ ຂັດແຍ້ງກັນຂອງ
ສະໄໝຂ້າມຜ່ານ.

ໃນສູ້ມີຢູ່ໃນປະເທດລາວໄດ້ສຳເລັດການລຶບລ້າງໄພກົກ
ໜ້ວງສີໃນຈຳນວນຄົນພົ້ນກະສຽນໄດ້ແລ້ວ ຢ່າງສົມເຊິ່ງ. ນັ້ນ
ແມ່ນຜົນສຳເລັດອັນໃຫຍ່ຫລວງຂອງອຳນາດປະຊາຊົນ.

ດັ່ງນັ້ນສະໄໝຂ້າມຜ່ານຈາກລະບອບທຶນນິຍົມ ໄປສູ່ ລະ
ບອບສັງຄົມນິຍົມ ໄດ້ສຳເລັດບາດກ້າວອັນໃຫຍ່ຫລວງໃນການ
ຜ່ານຂ້າມຈາກຄວາມບໍ່ສະເໝີພາບໄປສູ່ຄວາມສະເໝີພາບ,

ຍ້ອນວ່າມັນໄດ້ແກ້ໄຂບັນຫາການລົບລ້າງການກົດຂີ່ຂູດຮີດຄົນຕໍ່ຄົນ, ໄດ້ໄປສູ່ການກໍ່ສ້າງພື້ນຖານຂອງລະບອບສັງຄົມນິຍົມ.

ແຕ່ວ່າຢູ່ໃນຫົ້ ຄວາມສະເໝີພາບທາງດ້ານສັງຄົມຂອງຄົນເຮົາໄດ້ເກີດມີຂຶ້ນຢ່າງເຕັມສ່ວນແລ້ວບໍ ? ບໍ່ທັນມີເທື່ອ , ດັ່ງທີ່ພວກເຮົາຈະເຫັນຈາກບົດສະເໝີຕໍ່ໄປ. ການກໍ່ສ້າງພື້ນຖານຂອງລະບອບສັງຄົມນິຍົມ ແມ່ນເປັນພຽງແຕ່ບາດກ້າວທຳອິດເທົ່ານັ້ນ ແຕ່ຫາກວ່າປາສະຈາກບາດກ້າວທຳອິດແລ້ວບາດກ້າວຕໍ່ໄປກໍຄົງຈະເປັນໄປບໍ່ໄດ້ຢ່າງເດັດຂາດ. ເພື່ອຈະ ຂ້ຶນ ຫວ່ິດຂ້ຶນໄດໄດ້ ກໍຈະຕ້ອງໄດ້ຢຽບຂ້ຶນໄດໜຸກໆຂ້ຶນໄປເປັນ ລຳດັບ, ຈາກຂ້ຶນທີໜຶ່ງ ຈົນຮອດຂ້ຶນສຸດທ້າຍ. ແຕ່ວ່າມັນເປັນພຽງແຕ່ຂ້ຶນໄດຂ້ຶນທຳອິດເທົ່ານັ້ນ...

ຂັ້ນລະດັບ ສັງຄົມນິຍົມ
ຂອງຄວາມສະເໝີພາບ ທາງດ້ານສັງຄົມ

ບັດນີ້ ພວກເຮົາມາພ້ອມກັນໄຈ້ແຍກວ່າ ລະບອບສັງຄົມນິຍົມແມ່ນຫຍັງ ? ເພິ່ນໄດ້ບົດເບ້ືອນເນ້ືອໃນຂອງຄຳນິຍາມ"ລະບອບສັງຄົມນິຍົມ" ແລະ ທຳທ່ານໃສ່ຮ້າຍປ້າຍສີມັນຫລາຍ ໆ ເທ່ືອ ຈົນວ່າໃນສູ່ມົນຄົນທຳມະດາສາມັນອາດຈະບໍ່ເຂ້ົາໃຈໄດ້ ໂດຍສະເໝີໄປວ່າ ນັ້ນແມ່ນຫຍັງແທ້ .

ພວກໃສ່ຮ້າຍປ້າຍສີມາຍທ່ານໄດ້ຢືນຢັນວ່າ ລະບອບສັງຄົມນິຍົມ ແມ່ນສັງຄົມໜ່ຶງ ຊ່ຶງເປັນບ່ອນທ່ີຄົນເຮົາບ່ມ່ີສິດທິໃດໆ ທ້ັງສ້ົນ, ທຸກຄົນໃຊ້ຊ່ວ້ດໄປຕາມຄຳສ່ັງການ, ບ່ມ່ີຜູ້ໃດຈະສາມາດອອກຄຳຄິດຄຳເຫັນຂອງຕົນເອງຈັກໜ້ອຍເລ້ີຍ, ເປັນບ່ອນທ່ີຄົນເຮົາຖ້ືກບ້ັງຄ້ັບຢ່າງໜ້ັກໜ່ວງ, ບ້ັງຄ້ັບຢ່ົມເຫ້ັງໃຫ້ເຮ້ັດວຽກພາຍໃຕ້ປ່າຍປືນ ແລະ ເປັນບ່ອນທ່ີບ່ມ່ີຜູ້ໃດຈະມ່ີສ່ິງໃດເປັນຂອງຕົນເອງ. ຄາວສະໄໝກ່ອນການປະຕ້ິວັດເດ້ືອນຕຸລາ, ຄ.ສ.ໃນປ ີ ໑໙໐໗ ຢູ່ທ່ີປະເທດລ້ັດເຊຍ ເພ່ິນໄດ້ ແປປ້ົມຂອງ ເດ້ິດ ມ.ແປກ ທ່ີມ ຊ່ວ ່ າ "ພະອາທ ິ ດສ ິ ່ ວ ງ" ເປັນພາສາລ້ັດເຊຍ ພາຍໃຕ້ຫ ົ ວເລ ື ອງນ ້ ອຍ "ຄວາມໃຝ່ຝັນ ແບບ

ສັງຄົມ-ປະຊາທິປັດ". ຢູ່ໃນປັ້ມກ່າວຮ້າຍທ້ວມ ຄົນອາເມລິ-ກາຫນຸ່ມຜູ້ຫນຶ່ງ ໄດ້ຈົມຢູ່ພົນນ້ຳມະຫາສະຫມຸດອັດລັງຕິກ ເສຍ ແລ້ວ (ສັງຄົມພະເຈົ້າຊາສີ່ວ) ຊຶ່ງເປັນບ່ອນທີ່ຄ້າຍກັບວ່າ ມີລະບອບກອມມູນິດ. ນັ້ນຄືການແຕ້ມແຕ່ງຮູບພາບຫຍໍ້ ທີ່ ເປັນຫນ້າຢ້ານກົວທີ່ສຸດຕໍ່ການວາດພາບຕົວຈິງ"ແບບມາກຊຶດ" ກ່ຽວກັບລະບອບກອມມູນິດເຊ່ນວ່າ: ຢູ່ແຫ່ງນີ້ມີການ ຕີລອດ ກວດພຽງສະເຫມີກັນຢ່າງເຕັມສ່ວນ, ລະບຽບການດຳລົງ ຊີ ວິດປະຈຳວັນ ກໍໄດ້ປະຕິບັດກັນດ້ວຍຂໍ້ກຳນົດທີ່ເຂັ້ມງວດຄື: ຄົນ ເຮົາບໍ່ໄດ້ອົນຕາມຊຸ ແຕ່ຫາກອົນຕາມເລກປະຈຳຕົວ, ພາຍ ໃນໄລຍະຊົ່ວໂມງໃດຫນຶ່ງທີ່ກຳນົດໄວ້ແລ້ວນັ້ນ ທຸກໆຄົນຈະໄດ້ ຮັບນ້ຳແກ້ວຈົດຫນຶ່ງຖ້ວຍນ້ອຍ ແລະ ຢາປົວພະຍາດພຽງເລັກ ນ້ອຍ ດ້ວຍບໍລິມາດຂະຫນາດໃດຫນຶ່ງ, ແຕ່ລະຄົນບໍ່ມີສິດປາກ ເວົ້າຫລາຍກວ່າ ๑.๐๐๐ ຄຳຕໍ່ມື້, ການເລືອກຕູ້ຜ້ວໆເມຍໆ ກໍແມ່ນລັດເປັນຜູ້ຈັດຫາໃຫ້ ແລະ ອື່ນໆອີກ.

ໃນເມື່ອໄດ້ເກີດມີລະບອບສັງຄົມນິຍົມຕົວຈິງຂຶ້ນມາ ພວກ ຂະເຈົ້າຍິ່ງໄດ້ພ້ອມກັນອອກແຮງແຕ້ມແຕ່ງພິກປັ້ນຊຸດົມການອັນ ຂາວສະອາດຂອງລະບອບກອມມູນິດ. ຖ້າຫາກຄຳນວນເບິ່ງ ຫນົດຫຸກຢ່າງດັ່ງກ່າວນີ້ແລ້ວ ກໍຈະເຫັນວ່າ ການດຳລົງຊີວິດຢູ່ ນາຣົກນັ້ນ ດີກວ່າການດຳລົງຊີວິດຢູ່ໃນລະບອບສັງຄົມນິຍົມ ນີ ເສຍອີກ. ສຳລັບພວກນາຍທຶນແລ້ວ ສຸດທີ່ຄວາມສຳຄັນທີ່ສຸດ ທີ່ຈະເຮັດໃຫ້ຊາວຜູ້ອອກແຮງງານຂອງຕົນມີການວາດພາບ - ເບິ່ງໄປທາງຜິດຕໍ່ລະບອບສັງຄົມນິຍົມຄືແນວນີ້ແຫລະ, ຍ້ອນ ວ່ານັ້ນຈະສະກັດກັ້ນບໍ່ໃຫ້ຜູ້ໃດໄດ້ມີແນວຄິດຕໍ່ສູ້ເພື່ອລະບອບສັງ

ຄົມນິຍົມ, ບໍ່ໃຫ້ຜູ້ໃດໄດ້ລຸກຮ້ອນເຮັດການປະຕິວັດ. ໃນບາງ ຄັ້ງ ພວກນາຍທຶນກໍປະສົບກັບຜົນສຳເລັດໃນສົງຄາມ : ຍ້ອນວ່າຢູ່ພາຍໃນກຳມືຂອງພວກຂະເຈົ້ານີ້ໂທລະພາບ, ວິທະ ຍຸ, ໜັງສືພິມ ແລະ ການບິດເບືອນແຕ່ລະວັນຕໍ່ລຸ່ມການຍັນ ແທ້ຈິງຂອງລະບອບສັງຄົມນິຍົມ ໄດ້ເຮັດໃຫ້ນຸກຄົນ ຈຳນວນ ໜຶ່ງ ບໍ່ຍອມຮັບເອົາລຸ່ມການຕ່າງໆຂອງລະບອບສັງຄົມນິຍົມ ໄດ້ເຖິງແມ່ນວ່າໃນເວລາດຽວກັນນັ້ນ ພວກຂະເຈົ້າ ຈະເຂົ້າ ໃຈດີເຖິງການພັງທະລາຍທັງໝົດຂອງລະບອບທຶນນິຍົມກໍຕາມ ຈາກບ່ອນນັ້ນເອງຄືທາ ຂອງຄວາມໝົດຫວັງໃນຊີວິດ, ຂອງ ຄວາມບໍ່ກະຕືລືລົ້ນ ແລະ ແນວຄິດພຸກກະທັດນິຍົມຂອງພວກຂະ ເຈົ້າ.

ສາຍເຫດຂອງສົງຄາມອ້າງເທິງນັ້ນ ແມ່ນມາຈາກ - ພວກທີ່ເອີ້ນຕົນເອງວ່າເປັນນັກກອມມູນິດ ແຕ່ພັດບໍ່ຊາບຊຶ້ມທິດ ສະດີມາກ-ເລນິນ; ພວກຂະເຈົ້າໄດ້ສ້າງຄວາມປັ່ນປ່ວນ ພົກ ປົນຢ່າງຮຸນແຮງ ແລະ ໃນບາງຄັ້ງຄາວກໍເປັນໜ້າຫວັ່ນວິຕົກ ທີ່ສຸດຕໍ່ລະບອບສັງຄົມນິຍົມ ແລະ ຕໍ່ລະບອບກອມມູນິດ. ເຊັ່ນ ຕົວຢ່າງ, ຢູ່ໃນປະເທດກຳປູເຈຍ ຄາວສະໄໝໂປນປົດແລະ ພັກພວກຂອງເຂົາ ໄດ້ສ້າງ "ລະບອບສັງຄົມນິຍົມ ຕາມແບບ ຄາຍທະຫານ" ດ້ວຍການບັງຄັບອອກແຮງງານ,ລົບລ້າງຄອບ ຄົວ, ລົບລ້າງເງິນ, ລົບລ້າງການສຶກສາ, ລົບລ້າງການຮຸດ ສາຫະກຳ, ລົບລ້າງຕົວເມືອງ ແລະ ຍິ່ງຮ້າຍໄປກວ່າ ນັ້ນ ແມ່ນການລ້າລ້າງຜ່ານປະຊາຊຶ້ມທີ່ບໍ່ພໍໃຈທັງຫລາຍ ຢ່າງໂຫດ ຮ້າຍປ່າເຖື່ອນທີ່ສຸດ. ໃນສູ່ມນປະຊາຊຶ້ມກຳປູເຈຍ ໄດ້ປົດປ່ຽ

ຕົນເອງອອກຈາກພວກນັກກອມມູນິດຈອມປອມເຫລົ່ານັ້ນ ແລ້ວ ແລະ ກໍໄດ້ເລີ່ມທຳການປົວແປງບ້ານເກີດເມືອງນອນຂອງຕົນ ຊຶ່ງພວກອະດີດຜູ້ນຳໄດ້ນຳໄປສູ່ຄວາມຫາຍະນະຢ່າງໃຫຍ່ຫຼວງ ທີ່ສຸດແລ້ວນັ້ນ. ເຊັ່ນດຽວກັນຄາວສະໄໝ ເມົາເຊຕຸງ ກໍໄດ້ ພະຍາຍາມສ້າງພາບປອມແປງຂອງລະບອບກອມມູນິດຂຶ້ນຢູ່ໃນ ປະເທດຈີນ ໃນຮູບການ "ປະຊາຄົມ" ດ້ວຍອັດຕາການ ກິນ ເທົ່າທຽມກັນ "ຕາມແຕ່ລະປາກ", ດ້ວຍການຍົກຍ້າຍປະຊາ ຊົນນັບເປັນສິບໆລ້ານຄົນອອກຈາກຕົວເມືອງ ໄປສູ່ຊົນນະບົດ, ດ້ວຍການລົບລ້າງຄອບຄົວທັງໝົດ. ແຜນການດັ່ງກ່າວນີ້ ໄດ້ ປະສົບກັບການປະລາໄຊ ແລະ ບັນດາຜູ້ນຳຈີນຈຳຕ້ອງໄດ້ຍຸບ ເລີກອຸມ "ປະຊາຄົມ" ຕ່າງໆນັ້ນລົງ. ແຕ່ວ່າ "ການທົດ - ລອງ" ຕ່າງໆທັງໝົດເຫລົ່ານັ້ນທີ່ຄວນກັນວ່າ "ລະບອບ ສັງ ຄົມນິຍົມ" ແລະ "ລະບອບກອມມູນິດ" ນັ້ນໄດ້ຮັບການ ເຜີຍ ແຜ່ກັນຢ່າງກ້ວາງຂວາງ. ແລະ ບັນດາສັດຕູຂອງລະບອບສັງ ຄົມນິຍົມ ຈຶ່ງຂາດບໍ່ໄດ້ໃນການໝູນໃຊ້ສິ່ງດັ່ງກ່າວນີ້. ໃນສູ່ມ ນັ້ນ ພວກຂະເຈົ້າໄດ້ພາກັນຮ້ອງໂຮຂຶ້ນວ່າ: "ໝັ້ນລະຄົລະບອບ ສັງຄົມນິຍົມໃນພາກຕົວຈິງ! ທ່ານເຫັນແລ້ວຕົ່ວ່າ ອຸດົມການ ຂອງພວກມາກຊຸດ ໄດ້ນຳໄປສູ່ຄວາມຫາຍະນະອັນໃດແດ່ ໃນ ພາກປະຕິບັດຕົວຈິງ ! ບໍ່ມີຄວາມອຶດສະຫລະພາບ; ມີພຽງ- ແຕ່ຄວາມທຸກຍາກລອມ ແລະ ຄວາມຈຳກັດຮັດແຄບເທົ່ານັ້ນ". ພວກທໍລະຍົດຕໍ່ລັດທິມາກ ກໍຍັງໄດ້ສ້າງຄວາມເສຍຫາຍໃຫ້ແກ່ ລັດທິມາກຊຸດນຳອີກ.

ການກະທົບຂອງການໃສ່ຮ້າຍປ້າຍສີເປັນປະຈຳຂອງພວກ

ນາຍທຶນ, ຄວາມພະຍາຍາມ "ກໍ່ສ້າງ" ລະບອບສັງຄົມນິຍົມ ແລະ ລະບອບກອມມູນິດທຸກບ່ດເບ່ອນນັ້ນ ມັນຮຽກຮ້ອງໃຫ້ມີ ການຈຳແນກຢ່າງຈະແຈ້ງກັບຄຳນິຍາມ "ລະບອບສັງຄົມນິຍົມ" ຮຽກຮ້ອງໃຫ້ມີການເລົ່າລະອຽດຖ້ຖ້ວນທ້ສຸດວ່າ ຢູ່ໃນສັງຄົມ-ສັງຄົມນິຍົມນັ້ນ ຄົນເຮົາຢູ່ກິນກັນຄ້ແນວໃດແທ້.

ພ້ມຖາມຕົ້ນຕໍສຳຄັນ ແລະ ຕັດສິນຊ້ຂາດຂອງລະບອບສັງຄົມນິຍົມນັ້ນ ແມ່ນຢູ່ບ່ອນວ່າ ຢູ່ໃນລະບອບນ້ ພາຫະນະ ການຜະລິດ (ທ່ດິນ, ນ້ຳ, ໂຮງຈັກໂຮງງານ, ພາຫະນະຂົນສົ່ງ ແລະ ອ່ນໆ) ບ່ໄດ້ເປັນຂອງສ່ວນບຸກຄົນໃດໜ່ງ ແຕ່ນ້ນຫາກເປັນຂອງສ່ວນລວມ. ນ້ຍສ່ງສຳຄັນ້ຍ່ອນວ່າກຳມະສ້ດ ສ່ວນລວມ, ຊ້ທ່ໜ່ງ, ການກຳຈ້ດການກ້ດຂ່ຽດຮ້ດຄົນຕ່ຄົນ, ການຈ້ດການອາໄສກຳແຮງງານຂອງຜ່ຽມ. ຊ້ທ່ສອງ, ນ້ນກຳນ້ດລະອຽດເປ້າໝາຍການຜະລ້ດ. ຖ້ວ່າພາຫະນະການຜະລ້ດຫາກເປັນຂອງ ສ່ວນບຸກຄົນແລ້ວ ເມ່ອນ້ນເປ້າໝາຍການຜະລ້ດ ແມ່ນເພ່ອຮັບໃຊ້ສ້ດຜົນປະໂຫຍດຂອງບຸກຄົນ ເຫລ່ານ້ນ ເທ່ານ້ນ. ນາຍທຶນຜູ່ໜ່ງຄຳເນ່ນການຜະລ້ດສິນຄ້າໃດໜ່ງ, ເຊ່ນ້ຕ່ວຢ່າງ ເສ້ອ້ໍ້ມເປ້ນ້ນ, ບ່ແມ່ນເພ່ອຮັບປະກັນ ຕອບສະໜອງໃຫ້ປະຊາຊ່ນແຕ່ຢ່າງໃດເລ່ຍ ແຕ່ຫາກເພ່ອຮັບປະ-ກັນຜົນກຳໄລຈາກການຜະລ້ດເສ້ອ້ໍ້ມນ້ນໃຫ້ແກ່ຕົນ ຕ່າງຫາກ ແລະ ໄດ້ກຳໄລຫລາຍເທ່າໃດກ່ຍ່ງເປ້ນຜົນດ່ໃຫ້ແກ່ເຂົ້າເທ່ານ້ນ. ຊາວໄຮ່ນາຜູ່ໜ່ງທຳການຜະລ້ດເຂ້ົ້າ ແລະ ລ້ຽງສ້ດບ່ແມ່ນພ້ຽງແຕ່ເພ່ອກ່ນເທ່ານ້ນ ແຕ່ຍ່ງຕ້ອງໄດ້ນຳເອ້ົາ ເຂ້ົ້າ ແລະ ສ້ດຈຳນວນໃດໜ່ງໄປຂາຍທ້ທ່ອງຕະຫລາດ ເພ່ອຊ້ສ່ນ

ຄ້າທ໊ຈຳເປັນນ໋ອີກ. ຢູ່ໃນທ໋ມ ເປ້າໝາຍການຜະລິດ ຂອງ
ເຂົ້າ ແມ່ນສິດຜົນປະໂຫຍດສ່ວນຕົວ ແລະ ຄອບຄົວຂອງເຂົ້າ
ເທ່ົ່ານັ້ນ.

ແລະ ການທ໊ວ່າ ພວກຮ່ົ່ງມ໋ທ໋ມ ຈິດໃຈເຫລ໊ອມໃສຈຳນວນ
ໜ໋ົ່ງ ກໍເຄ໊ຍໄດ້ເສຍສະຫລະເວ໋ນຂອງຕົນຈຳນວນໃດໜ໋ົ່ງໃຫ້
ແກ່ກິດຈະການອຸຕສາຫະກຳອັນຊອບທຳຫລາຍໆຢ່ົ່າງນັ້ນ ມັນບ່ໍສາ
ມາດແກ້ໄຂບັນຫາ. ຂໍ໊ຍົກຕ໋ວຢ່ົ່າງວ່ົ່າ ກ໋ອນການປະຕ໋ວັດຢູ່ໃນ
ປະເທດລັດເຊຍ ເສດຖ໋ເວ໋ນລ້ານເມ໋ືອງ ໂມສະກູ ມ໋ນຊ໋ສ໋ຽງ
ໂດ່ງດັງ ຊ໋ວ່ົ່າ ສັບວາ ໂມໂຣຊ໋ຟ ໄດ້ໃຫ້ການຊ໋ວຍເຫລ໊ອອ໋ມ
ອຸດ໋ວຍເວ໋ນຈຳນວນຫລວງຫລາຍໃຫ້ແກ່ພ໋ກໂບນເຊ໋ົ່ກ (ປະ
ຈຸບ໋ນແມ່ນພ໋ກກ໋ອມມຸ໋ນິດແຫ່ງສະຫະພາບໂຊ໋ຽດ), ພ໋ົ່ຄ້າເມ໋ືອງ
ໂມສະກູ ຊ໋ວ່ົ່າ ຕະເຣ໋ຍ ລ໋ກກ໋ອບ ກໍໄດ້ສ້ົ່າງຕ໋ັ້ງໜ໋ົ່ພ໋ກທະ ພ໋ນ
ພາບແຕ໋ມຂ໋ນ ດ໋ວຍເວ໋ນຂອງຕົນເອງ ແລະ ກໍໄດ້ມ໋ອບ ເປ໋ນ
ຂອງຂວັນໃຫ້ແກ່ເມ໋ືອງ ໂມສະກູ. ຢູ່ທ໋ປະເທດ ແ໋ອດສະປ໋ານ
ເ ຈ ້ ຍ ິ ງ ເມ ດ ິ ມ ິ - ສ ິ ໂ ດ ເ ມ ຍ (ຂ ະ ໜ າ ມ ນ າ ມ ວ ່ ົ ່ າ " ເ ຈ ້ ຍ ິ ງ
ແດງ") ໄດ້ໃຫ້ຄວາມຊ໋ວຍເຫລ໊ອອ໋ມຊຸບ໋ນດາພ໋ກກ໋ອມມຸ ນ໋ິດ
ຕ່ົ່າງໆເປ໋ນຢ່ົ່າງດ໋ີ. ພ໋ວກນ໋າຍທ໋ມ ແລະ ພ໋ວກເຈ້ົ່າທ໋ດ໋ນຫ໋ານ
ຫລ໋ານຄ໋ນ ກໍໄດ້ເສຍສະຫລະເວ໋ນຂອງຕົນສ໋ວນໃດໜ໋ົ່ງ ເພ໋ືອ
ຊ໋ວຍເຫລ໊ອສ໋ງເຄາະພ໋ຍາກຈ໋ນ. ແຕ໋ວ່ົ່າຂ໋ຍົກເວ໋ັ້ນເຫລ໋ົ່ານ໋ ບ໋
ທຳລາຍກ໋ດເກນຕ໋ວ໋ຈ໋ງໄດ້ເລ໋ຍ ຄ໋: ການຜະລິດບ໋ນເວ໋ອນ ໄຂ
ກຳມະສິດສ່ວນຕົວຈະຮັບໃຊ້ສ່ວນຮຸ໋ກຄ໋ນຢູ່ເຊ໋ັ້ນເດ໋ນ.

ກຳມະສິດສ່ວນລວມແມ່ນສ໋ງທ໋ແຕກຕ່ົ່າງກ໋ນ, ໝ໋ານຄວາມ
ວ່ົ່າ ກຳມະສິດທ໋ບຊ໋ນກ໋ນໃດໜ໋ົ່ງຕ່ົ່າງຊ໋ານ ແຕ໋ອ໋ມ ກ໋ບ

ສັງຄົມລວມທັງໝົດ ດັ່ງທີ່ ຟ.ອັງແກມ ຂຽນໄວ້ວ່າ: ການຜະ
ລິດບົ່ມພົນຖານການຳມະສິດສ່ວນລວມ ຈະຕ້ອງ "ຮັບປະກັນ ໃຫ້
ສະມາຊິກຂອງສັງຄົມທຸກໆຄົນມີປັດໄຈແກ່ການດຳລົງ ຄົງຕົວ
ແລະ ແກ່ການພັນຂະຫຍາຍຄວາມສາມາດຂອງພວກ ຂະເຈົ້າ
ຢ່າງມີອິດສະຫລະພາບ, ໃນນັ້ນໃຫ້ຢູ່ໃນລະດັບທະວີຄູນ ຢ່າງ
ຮອບດ້ານ" ๑) ສິ່ງດັ່ງກ່າວນີ້ໝາຍຄວາມວ່າ ການຜະລິດທີ່
ເປັນຂອງສັງຄົມລວມນັ້ນ ຈະຕ້ອງສຸມໃສ່ຮັບໃຊ້ ສິດຜົນປະ
ໂຫຍດຂອງທຸກໆຄົນ. ພ້ອມດຽວກັນຢູ່ໃນຫົວຄຳວ່າ"ສິດຜົນປະ
ໂຫຍດ" ກໍຄວນຕີຄວາມໝາຍມັນອອກໃຫ້ເລິກເຊິ່ງ ກ້ວາງ
ຂວາງເຊັ່ນດຽວກັນ.

ສິດຜົນປະໂຫຍດຂອງປວງຊົນທັງໝົດບໍ່ໄດ້ໝາຍເຖິງແຕ່
ໃຫ້ໝົດທຸກຄົນຕ້ອງໄດ້ກິນອີ່ມນຸ່ງອຸ່ນ, ມີເຮືອນຢູ່ອາໃສ ແລະ
ຍົກສູງຄວາມອຸດົມພູນສຸກສ່ວນລວມຂຶ້ນໄປເລື່ອຍໆເທົ່ານັ້ນ. ແຕ່
ມັນຍັງມີຄວາມໝາຍອີກວ່າ ຕ້ອງຮັບປະກັນໃຫ້ແຕ່ລະຄົນ ມີ
ຄວາມ ອາດສາມາດທັງໝົດໃນການພັນຂະຫຍາຍ ທຸກ ໆ
ຄວາມສາມາດ, ການຂະຫຍາຍຕົວຂອງຕົນໃນຖານະເປັນມະ
ນຸດ. ນອກຈາກນີ້ມັນຍັງຕີຄວາມໝາຍອີກວ່າ ສັງຄົມຈະຕ້ອງ
ໄດ້ອອກແຮງປົກປັກ ຮັກສາທຳມະຊາດເພື່ອບໍ່ໃຫ້ມັນເປື່ອນເປີ
ຈາກການຊຸດສາຫະກຳ, ເພື່ອໃຫ້ພວກເຮົາໄດ້ປະໂລກໜ່ວຍ
ນີ້ຢູ່ໃນສະພາບອັນດີໄວ້ໃຫ້ແກ່ພວກລູກພວກຫລານ ຂອງພວກ

---

๑) ก.มาก, ฝ.อังแกม. มิพม เซล็มที่ ๘๐, หน้า ๑๕๔.

ເຮົາຢູ່ສືບຕໍ່ໄປ. ສ່ວນນາຍທຶນ (ຍ້ອນມັນຄິດເຫັນແຕ່ຜົນ ກຳ ໄລສ່ວນຕົວຢ່າງດຽວເທົ່ານັ້ນ) ພະຍາຍາມປະຢັດສະກັດກັ້ນ ການລົງທຶນຮອບໃສ່ການປົກປັກຮັກສາສິ່ງແວດລ້ອມທຳມະຊາດ, ບໍ່ທຳການກໍ່ສ້າງກິດຈະການທຳຄວາມສະອາດ ແລະ ຜົນຮ້າຍ ທີ່ໄດ້ຮັບຈາກສິ່ງດັ່ງກ່າວນັ້ນຄື ຂັ້ນຜິດທີ່ປ່ອລອຍ ອອກຈາກໜ່ ຂວັນຂອງໂຮງງານໄປໃສ່ຕົວເມືອງ ແລະ.ທົ່ງໄຮ່ທົ່ງນາສ່ວນ ສິ່ງເສດເຫລືອທີ່ເປັນພິດຂອງການຜະລິດກໍໄດ້ນຳໄປຖອກເທ-ໃສ່ແມ່ນ້ຳລຳທານຕ່າງໆ.

ສິດຜົນປະໂຫຍດລວມນັ້ນ ຄືເປົ້າໝາຍຂອງລະບອບ ສັງ ຄົມນິຍົມ. ແລະ ຍ້ອນທາດແທ້ເມື່ອໃນທາງດ້ານເສດຖະກິດ-ຂອງຕົນ ລະບອບສັງຄົມນິຍົມຈຶ່ງເປັນທັງສັງຄົມທີ່ມະນຸດ ສະ ທຳຫລາຍທີ່ສຸດຢູ່ໃນໂລກນີ້.

ກຳມະສິດສ່ວນລວມຕໍ່ພາຫະນະການຜະລິດ ໄດ້ ອຳນວຍ ຄວາມສະດວກໃຫ້ແກ່ລັດ ຈັດຕັ້ງເສດຖະກິດໄດ້ຢ່າງມີແຜນ - ການ, ເສີມຂະຫຍາຍທຸກໆຂົງເຂດຂອງຊີວິດຢ່າງສົມດູນກັນ. ຢູ່ໃນລະບອບທຶນນິຍົມ ຈະເຮັດແຜນການແນວໃດໄດ້ອີກ ໃນ ເມື່ອວ່າບັນດາເຈົ້າຂອງໂຮງຈັກໂຮງງານ, ທີ່ດິນ, ນ້ຳແມ່ນ ພວກກຳມະສິດສ່ວນຕົວນັບເປັນພັນໆ ແລະ ລ້ານໆຄົນ,ແຕ່ລະ ຄົນກໍພະຍາຍາມບັນລຸເຖິງເປົ້າໝາຍສ່ວນຕົວ ຂອງໃຜລາວ ເທົ່ານັ້ນ ແລະ ພວກເຂົາເຈົ້າກໍ່ບໍ່ໄດ້ຄຳນຶງເຖິງຜົນ ປະໂຫຍດ ສ່ວນລວມຈັກໜ້ອຍເລີຍດອກ. ຕົວຈິງແລ້ວ ມີແຕ່ຢູ່ໃນ ລະ ບອບສັງຄົມນິຍົມເທົ່ານັ້ນ ທີ່ຈະສາມາດຈັດຕັ້ງລວມຄອງ ບັນຊາ ສັງຄົມແບບວິທະຍາສາດໄດ້ ຍ້ອນວ່າຢູ່ທີ່ນັ້ນເປົ້າໝາຍຕ່າງ ໆ

ຂອງໝົດທຸກໆຄົນເປັນອັນໜຶ່ງອັນດຽວກັນ. ຢູ່ໃນລະບອບທຶນ
ນິຍົມທຸກໆຄວາມພະຍາຍາມແບບວິທະຍາສາດທີ່ແມ່ໃສ່ລຸ້ມຄອງ
ບັນຊາສັງຄົມຈະປະສົບແຕ່ກັບການປະລາໄຊຢ່າງຫລີກ ບໍ່ມັ້ນ
ຍ້ອນວ່າຜົນປະໂຫຍດລະຫວ່າງພວກນາຍທຶນ ແລະ ພວກກຳ
ມະກອນ, ລະຫວ່າງເຈົ້າທີ່ດິນ ແລະ ພວກຊາວໄຮ່ນາ ຂັດ
ແຍ່ງປໍລະປັກກັນ. ໃນເມື່ອພວກນາຍທຶນພະຍາຍາມ ເຮັດສິ່ງ
ໃດໜຶ່ງນັ້ນ ຊາວກຳມາຊີບກໍ່ຕ້ານຢັ້ນນາຍທຶນ; ໃນເມື່ອ
ຊົນຊັ້ນກຳມະກອນກໍພະຍາຍາມບັນລຸເຖິງຜົນປະໂຫຍດຂອງຕົນ
ນັ້ນ ພວກນາຍທຶນພັດເຂົ້າໄປຂັດຂວາງຊົນຊັ້ນກຳມະກອນ .
ສ່ວນຢູ່ໃນລະບອບສັງຄົມນິຍົມແລ້ວ ສິດຜົນປະໂຫຍດ ອັນໜຶ່ງ
ອັນດຽວຂອງບັນດາຊາວຜູ້ອອກແຮງງານທັງໝົດໄດ້ຮັບປະກັນ
ຄວາມອາດສາມາດໃຫ້ແກ່ການລຸ້ມຄອງບັນຊາທຸກໆ ຂົງເຂດ
ວຽກງານດ້ານສັງຄົມທັງໝົດຢ່າງມີແຜນການ ແລະ .ແທດ
ເໝາະຕໍ່ວິຈ.

ຍ້ອນວ່າໂຮງຈັກໂຮງງານທັງໝົດເປັນຂອງ ປະຊາຊົນ
ຊົ່ງລັດເປັນຜູ້ຕາງໜ້າຂອງປະຊາຊົນນັ້ນ, ເພິ່ນຈົ່ງ ສາມາດ
ວາງແຜນການໄດ້ຖືກຕ້ອງທີ່ສຸດວ່າ ຜົນຜະລິດອັນໃດ ແລະຈຳ
ນວນເທົ່າໃດທີ່ໂຮງຈັກໂຮງງານຈະທຳການຜະລິດ ເພື່ອຕອບ
ສະໜອງຄວາມຮຽກຮ້ອງຕ້ອງການຂອງປະຊາຊົນ. ຍ້ອນວ່າ
ສະຖາບັນການສຶກສາ, ໂຮງຮຽນປະຖົມ, ໂຮງຮຽນວິຊາຊີບ,
ໂຮງຮຽນຊັ້ນກາງຕ່າງໆທັງໝົດເປັນຂອງລັດນັ້ນ ເພິ່ນຈົ່ງສາ
ມາດຄິດໄລ່ສັບຊ້ອນວ່າ ຈະຮັບເອົາຄົນຈຳນວນເທົ່າໃດ ແລະ
ຮຽນວິຊາການໃດແດ່ ເພື່ອຄວາມຮຽກຮ້ອງຕ້ອງການຕົວຈິ.

ໃນເງື່ອນໄຂເຫລົ່ານັ້ ເພິ່ນຈຶ່ງສາມາດວາງແຜນການໄວ້ລ່ວງ
ໜ້າເປັນສິບໆປີ ຄາດໝາຍໄວ້ວ່າ ຄວາມອຸດົມພູນສຸກ ຂອງ
ປະຊາຊົນຈະເພີ່ມຂຶ້ນໄດ້ໃນປີໃດແທ້ ແລະ ໃນລະດັບ ເທົ່າ
ໃດ.

ເຖິງຢ່າງໃດກໍດີ ອັນນີ້ບໍ່ໄດ້ໝາຍຄວາມວ່າ ລະບອບສັງ
ຄົມນິຍົມຈະຮັບປະກັນຄວາມຮຽກຮ້ອງຕ້ອງການຂອງມະນຸດໄດ້
ຢ່າງເຕັມເມັດເຕັມໜ່ວຍ, ຈະຕອບສະໜອງໄດ້ໝົດ ທຸກ
ຄວາມຕ້ອງການຂອງມະນຸດ, ສ່ວນມະນຸດບໍ່ຕ້ອງເຮັດ ຫຍັງ
ໝົດ ແລະ ມີແຕ້ອ້າປາກລໍຖ້າກິນເທົ່ານັ້ນ ເພື່ອໃຫ້ ສັງຄົມ
ປ້ອນອາຫານເຂົ້າປາກຂອງຕົນ. ມັນບໍ່ເປັນຄືແນວນັ້ນເລີຍ. ຂໍ
ທີໜຶ່ງ, ກຳລັງການຜະລິດຂອງລະບອບສັງຄົມນິຍົມຍັງບໍ່ ທັນ
ຂະຫຍາຍຕົວໄດ້ສູງເຖິງຂັ້ນຮັບປະກັນໃຫ້ໝົດທຸກໆຄົນມີໄດ້ທຸກ
ສິ່ງທຸກຢ່າງຮອບດ້ານ. ໝາຍຄວາມວ່າ ລະບອບສັງຄົມນິຍົມ
ໂດຍໄດ້ອອກແຮງຍົກສູງສະພາບຄວາມເປັນຢູ່ຂອງຊາວຜູ້ອອກ
ແຮງງານໃຫ້ສູງຂຶ້ນເປັນລຳດັບໃນເວລາດຽວກັນ ມັນກໍຍັງ ບໍ່
ທັນໄດ້ຕອບສະໜອງໝົດທຸກໆຄວາມຮຽກຮ້ອງຕ້ອງການຂອງ
ແຕ່ລະຄົນໄດ້. ຈຳເປັນຕ້ອງຈຳກັດຄວາມຮຽກຮ້ອງຕ້ອງການ
ສ່ວນໃດສ່ວນໜຶ່ງ.

ຂໍ້ທີສອງ, ລະບອບສັງຄົມນິຍົມຖືກຳເນີດເກີດຈາກ ລະ
ບອບທຶນນິຍົມ ແລະ ເກີດຂຶ້ນບົນພື້ນຖານຂອງມັນ. ເພາະສະ
ນັ້ນຢູ່ໃນລະບອບສັງຄົມນິຍົມ ຈຶ່ງຍັງມີ "ຮອຍຊ້ຳ" ຈຳນວນ
ຫລວງຫລາຍຂອງອະດີດປະໄວ້ຢູ່. ນັບເປັນຮ້ອຍໆປີ ທີ່ມະນຸດ
ຢູ່ໃນການຈັດຕັ້ງ, ກອດກາ "ບັນດາຜູ້ບັນຊາ" ເຊັ່ນກັນ. ຢູ່ ໃນລະບອບສັງຄົມນິຍົມ ການຈັດຕັ້ງໄດ້ຖືກປະຕິບັດກັນບົນສິດ ຜົນປະໂຫຍດຂອງປະຊາຊົນ; ເປັນການຈະແຈ້ງວ່າ ປະຊາ ຊົນ ກໍມີສຸດກອດກາເບິ່ງການເຄື່ອນໄຫວວຽກງານຂອງບັນດາ ເພື່ອນສະຫາຍຂອງຕົນເອງ ຊຶ່ງເປັນຜູ້ທີ່ຖືກມອບໝາຍຮັບຜິດ ຊອບການຈັດຕັ້ງນັ້ນ. ບັນດາກຳມະກອນກໍຄືຊາວສະຫະກອນ ກະເສດລວມໝູ່ເປັນຈຳນວນລ້ານໆຄົນໄດ້ເປັນຜູ້ແທນ ປະຈຳ ສະພາຕ່າງໆ, ເປັນສະມາຊິກອົງຄະນະພັກຕ່າງໆ, ໄດ້ປະ ກອບສ່ວນເຂົ້າໃນວຽກງານຂອງອົງການຈັດຕັ້ງກຳມະບານ , ແລະ ບັນດາອົງການຈັດຕັ້ງມະຫາຊົນອື່ນໆອີກ. ຢູ່ໃນ ແຕ່ລະ ໂຮງຈັກໂຮງງານກໍໄດ້ມີການປະຊຸມກັນເປັນປະຈຳ ກ່ຽວກັບ ວຽກງານການຜະລິດຊຶ່ງ ໃນນັ້ນຜູ້ອຳນວຍການໄດ້ລາຍ ງານ ການປະຕິບັດວຽກງານຂອງຕົນຕໍ່ກອງປະຊຸມຟັງ. ເວົ້າລວມ ແລ້ວ ຢູ່ບ່ອນໃດກໍມີສູນກອດກາຂອງປະຊາຊົນ, ຫ້ອງການສັງ ຄົມວ່າດ້ວຍການຄົ້ນຄວ້າດ້ານເລກຖະກິດ, ແລະລວມທັງຫນັງ ສືພິມຕິດຜາ "ປະໂຣເຊັກໂຕ" ("ໄຟສາຍ") ຂອງຊາວ ໜຸ່ມນຳອີກ. ບັນດາກຳມະກອນມີຄວາມຈູບຈ້າວຫ້າວຫັນ ປະ ກອບສ່ວນເຂົ້າໃນການກຳນົດມາດຕະຖານການຜະລິດ ແລະ ວຽກງານການວາງແຜນການຕ່າງໆ, ເຂົ້າໃນການ ຈັດຕັ້ງ ແຮງງານ, ການແບ່ງປັນເບ້ຍບຳເນັດ, ການອະນຸມັດລາພັກ ການ, ອະນຸມັດຫ້ອງເຮືອນ, ອະນຸມັດຈຳນວນບ່ອນຢູ່ຕາມສະ ຖານທີ່ຕ່າງໆຂອງເດັກນ້ອຍ. ຖ້າບໍ່ມີການຕົກລົງເຫັນດີ ຈາກ ຄະນະກຳມະບານແລ້ວ ກຳມະກອນແມ່ນແຕ່ຄົນດຽວກໍຈະບໍ່ສາ

ມາດຖືກໄລ່ອອກຈາກການໄດ້. ຢູ່ພາຍໃນປະເທດ ຂອງພວກເຮົາໂດຍທົ່ວໄປແລ້ວ ສະຫະພັນກຳມະບານມີສິດຢ່າງ ຫລວງຫລາຍທີ່ສຸດ. ເຊັ່ນວ່າ ພຽງແຕ່ໃນປີ ໑໙໕໘ ເທົ່ານັ້ນ ອີງຕາມການສະເໜີຮຽກຮ້ອງຂອງພວກຂະເຈົ້າໃນສາຍເຫລະເມີດມາດຕະການລຸ້ມຄອງແຮງງານ ເພິ່ນໄດ້ທຳການ ຢຸດຕິວຽກງານຂອງໂຮງງານຈຳນວນ ໑໕໐ ແຫ່ງ, ສາມພັນ ຂະແໜງການ, ປົດຜູ້ບໍລິຫານງານຕ່າງໆອອກຈາກໜ້າທີ່ຮັບຜິດຊອບ ໙,໕ ພັນຄົນ. ນີ້ລະຄືກຳລັງແຮງຂອງການກວດ ກາ ຂອງກຳມະກອນ !

ຕົວຈິງແລ້ວ ການປະກອບສ່ວນເຂົ້າຢູ່ໃນການລຸ້ມຄອງນັ້ນ ມັນກໍແມ່ນຮູບການໜຶ່ງຂອງແຮງງານທີ່ເຮັດດ້ວຍມັນສະໝອງ. ດັ່ງນັ້ນ ການໜ່ວງຮູບລັກສະນະຂອງແຮງງານ ຈຶ່ງຢັ້ງຢືນຈາກການປະກອບລະບົບອັດຕະໂນມັດ, ການປະກອບ ສ່ວນຂອງຂັນດາກຳມະກອນ ແລະ ຂອງຊາວສະຫະກອນ ກະເສດ ລວມໝູ່ເຂົ້າໃນວຽກງານການເຄື່ອນໄຫວທາງດ້ານ ການປະດິດສ້າງ ແລະ ການຄົ້ນຄິດປະດິດແຕ່ງ, ເຂົ້າໃນການ ລຸ້ມຄອງການຜະລິດ ທັງໝົດເຫລົ່ານີ້ແມ່ນສິ່ງທີ່ສຳຄັນໃຫ້ແກ່ການລົບລ້າງຂັນດາຄວາມແຕກຕ່າງກັນທີ່ມີລະຫວ່າງແຮງງານ ທີ່ເຮັດດ້ວຍມັນສະໝອງ ແລະ ດ້ວຍກຳລັງກາຍ.

ແຕ່ວ່າສິ່ງທັງໝົດດັ່ງກ່າວ ຈະມີຂຶ້ນໄດ້ກໍຕໍ່ເມື່ອວ່າລະດັບວັດທະນະທຳ-ເຕັກນິກຂອງຂັນດາກຳມະກອນ ແລະຂອງຊາວໄຮ່ນາຈະໄລ່ລຽງກັນກັບລະດັບຂອງປັນຍາຊົນ. ລະດັບວັດທະນະທຳ-ເຕັກນິກ ມີຄຸນແນວໃດ ? ມັນແມ່ນລະດັບ ທາງດ້ານ

- ການສຶກສາສາມັນທົ່ວໄປ;
- ການຝຶກອົບຮົມວິຊາຊີບ;
- ຄວາມຮູ້ດ້ານການເມືອງ ;
- ຄວາມຮູ້ດ້ານເສດຖະກິດ;
- ລະດັບວັດທະນະທຳທົ່ວໄປ.

ຜ່ານມາໄດ້ເກືອບ ๔๐ ປີແລ້ວ ຢູ່ພາຍໃນປະເທດ ຂອງພວກເຮົາ ເພິ່ນໄດ້ປະຕິບັດລະບົບການສຶກສາຊັ້ນກາງ ສາມັນທົ່ວໄປ. ຈາກຜົນການປະຕິບັດດັ່ງກ່າວມັ້ນໄດ້ເຮັດໃຫ້ລະດັບການສຶກສາຂອງບັນດາກຳມະກອນ ແລະ ຂອງຊາວໄຮ່ນາ ມີອັນປ່ຽນແປງຢ່າງເຫັນປະຈັກຕາ. ໃນປີ ๑๙๓๐ ຢູ່ໃນ ລະຫວ່າງບັນດາກຳມະກອນຂອງ ສສສຊ ນັ້ນມີພຽງແຕ ๔๐,๔% ເທົ່ານັ້ນ ທີ່ມີລະດັບການສຶກສາຊັ້ນກາງຢ່າງສົມບູນ ແລະ ລະດັບສູງກວ່ານັ້ນ, ສ່ວນຢູ່ໃນລະຫວ່າງບັນດາຊາວສະຫະກອມ-ກະເສດລວມໝູ່ນັ້ນ ມີແຕ ๑๐,๓%. ຕົກມາຮອດປີ ๑๙๖๙ ບັນດາຕົວເລກເຫລົ່ານີ້ໄດ້ສູງຂຶ້ນເຖິງ ๔๑,๗ ແລະ๔๒,๓%. ຢູ່ໃນສະໄໝປະຈຸບັນນີ້ ພວກກຳມະກອນສ່ວນຫລາຍໄດ້ມີການສຶກສາຊັ້ນກາງຢ່າງສົມບູນ ແລະ ສູງກວ່ານັ້ນ.

ໃນສູນນີ້ ຢູ່ທີ່ ສສສຊ ເພິ່ນໄດ້ດຳເນີນການປະຕິຮູບ ລະບົບໂຮງຮຽນສາມັນຊັ້ນກາງ ແລະ ລະບົບການສຶກສາ ວິຊາຊີບ. ປະກົດວ່າໃນເມື່ອພວກເຮົາຖ່າຍທອດການສຶກສາສາມັນຊັ້ນກາງໃຫ້ພວກຊາວໜຸ່ມ ແຕ່ວ່າພວກເຮົາຍັງບໍ່ທັນໄດ້ ຖ່າຍທອດວິຊາຊີບໃດໜຶ່ງໃຫ້ພວກຂະເຈົ້າ, ສະນັ້ນຜົນປະ ໂຫຍດ ຈາກການສຶກສາແບບນີ້ຈຶ່ງມີໜ້ອຍ. ໃນສູນນີ້ພາຍຫລັງ ຈົບ

ໂຮງຮຽນສາມັນຊັ້ນກາງ, ໂຮງຮຽນວິຊາຊີບຊັ້ນກາງປະເພດ ຕ່າງໆແລ້ວ ແຕ່ລະຄົນທີ່ຈະລົງໄປສູ່ວຽກງານຕົວຈິງນັ້ນ ຕ້ອງ ໄດ້ຮັບການສຶກສາສາມັນຊັ້ນກາງ ແລະ ການຝຶກອົບຮົມ ດ້ານ ວິຊາຊີບເປັນຢ່າງດີເສຍກ່ອນ. ສິ່ງດັ່ງກ່າວນີ້ຈະຊ່ວຍ ສ້າງ ເງື່ອນໄຂສະດວກໃນລະດັບສູງສຸດໃຫ້ແກ່ການລົບລ້າງ ຮອງ ຮອຍຄວາມແຕກຕ່າງກັນລະຫວ່າງບັນດາກຳມະກອນ, ຊາວສະ ຫະກອນກະເສດລວມໝູ່ ແລະ ບັນດານັກປັນຍາຊົນຊຶ່ງເກົ່ອບ ຖ້ວນໜ້າຄົນມີການຝຶກອົບຮົມວິຊາຊີບໂດຍທັ່ວໜ້ົດ.

ສ່ວນຢູ່ຕາມສະຖາບັນການສຶກສາຊັ້ນສູງ ກໍ່ຄືຕາມ ໂຮງ ຮຽນຊັ້ນກາງຕ່າງໆນັ້ນ ປັນຍາຊົນຈະຕ້ອງມີການສຶກສາ ດ້ານ ການເມືອງ ຊຶ່ງຖ້ວນເປັນສິ່ງທີ່ຈຳເປັນສຳລັບທຸກໆຄົນ ເພາະ ວ່າ ຖ້າບໍ່ມີຄວາມຮູ້ທາງດ້ານການເມືອງຢ່າງພຽງພໍແລ້ວແມ່ນ ເປັນໄປບໍ່ໄດ້ເລີຍ ທີ່ຈະປະກອບສ່ວນເຂົ້າ ໃນການລຸ້ມຄອງ ວຽກງານຂອງສັງຄົມ. ດ້ວຍເຫດນີ້ເອງຢູ່ທີ່ ສສສຊ ລະບົບ ການສຶກສາຂອງຊາວໜຸ່ມ ກ່ຽວກັບການເມືອງ ແລະກ່ຽວກັບ ພັກ, ກ່ຽວກັບການປຸກລະດົມໂຄສະນາໄດ້ຮັບການ ເສີມຂະ ຫຍາຍກັນຢ່າງກ້ວາງຂວາງທີ່ສຸດ ເຊັ່ນບັນດາມະຫາວິທະຍາ-ໄລມະຫາຊົນ, ໜ້ວງປາຖະກະຖາ, ວຽກງານຂອງພວກ ນັກ ຊ່ຽວສາມການເມືອງ ແລະ ຂອງນັກປຸກລະດົມອົມຂວາຍຕ່າງ ຕ່າງໆ ແລະ ອື່ນໆເປັນຕົ້ນ.

ຖ້າບໍ່ມີຄວາມຮູ້ທາງດ້ານເສດຖະກິດຢ່າງພຽງພໍແລ້ວ ແມ່ ນອນທີ່ສຸດ ການລຸ້ມຄອງວຽກງານຂອງສັງຄົມກໍຈະບໍ່ມີປະສິດທິ ຜົນຢ່າງໃດໄດ້ເລີຍ. ນັກປັນຍາຊົນໄດ້ທຳການສຶກສາຮ່ຳຮຽນ

ເອົາຄວາມຮູ້ທາງດ້ານເສດຖະກິດຢູ່ຕາມສະຖາບັນການສຶກສາ ຕ່າງໆ. ໃນດ້ານນີ້ ເພື່ອດຶງເອົາບັນດາກຳມະກອນແລະຊາວ ໄຮ່ມາໃຫ້ກ້າວຕໍ່ໄປເຖິງລະດັບຂອງພວກພະນັກງານ ກຳມະ ກອນທີ່ເຮັດວຽກດ້ວຍມັນສະໝອງໄດ້ນັ້ນ ເພິ່ນໄດ້ສ້າງຕັ້ງລະ ບົບການສຶກສາສາມັນທົ່ວໄປທາງດ້ານເສດຖະກິດສຳລັບບັນດາ ຊາວຜູ້ອອກແຮງງານຕ່າງໆຂຶ້ນ.

ໃນທີ່ສຸດ ວັດທະນະທຳທົ່ວໄປຂອງປະຊາຊົນ ກໍມີຄວາມ ໝາຍສຳຄັນຍິ່ງເຊັ່ນກັນ. ຢູ່ໃນສາຍເຫດນີ້ ປະເທດລັດເຊຍ ກ່ອນການປະຕິວັດກໍໄດ້ເປັນປະເທດໜຶ່ງທີ່ມີຄວາມຫລ້າຫລັງທີ່ ສຸດ, ຍ້ອນວ່າປະຊາຊົນສ່ວນຫລວງຫລາຍບໍ່ຮູ້ໜັງສື. ແຕ່ວ່າ ໃນສູ່ນີ້ ສະພາບການດັ່ງກ່າວໄດ້ມີການຫັນປ່ຽນຢ່າງພົ້ນຖານ ແລ້ວ. ໃນປີ ໑໙໓໙ ຢູ່ທີ່ ສສສຊ ມີຫໍສະໝຸດຈຳນວນ໑໙໕໔ ພັນແຫ່ງປະກອບດ້ວຍປຶ້ມອ່ານຕ່າງໆສອງຕື້ຫົວ, ສະໂມສອນ ໑໙໒,໒ ພັນແຫ່ງ, ຫໍພິພິດທະພັນ ໑໒໙໘ ແຫ່ງ, ໂຮງ ລະ ຄອນ ໒໘໒ ແຫ່ງ ຊຶ່ງທັງໝົດເຫລົ່ານີ້ໄດ້ມີຄົນເຂົ້າຊົມເຖິງ ໑໘໔,໙ ລ້ານຄົນ, ມີເຄື່ອງສາຍຮູບເງົາ ໑໕໑,໙ພັນໜ່ວຍ ແຕ່ລະປີໄດ້ຜະລິດຮູບເງົາຈຳນວນ ໘໙໙ ເລື່ອງ, ປຶ້ມອ່ານ ຕ່າງໆ ໒໘,໒ ພັນປະເພດ, ໜັງສືພິມ ໒໘ກ໙,ວາລະສານ ໕໙໐໒ ປະເພດ. ປະຊາຊົນໂຊວຽດໄດ້ກາຍເປັນຜູ້ມັກ ອ່ານ ຫລາຍທີ່ສຸດຢູ່ໃນໂລກ: ເຊັ່ນວ່າຢູ່ເມືອງ ມາກນິຕໍກອກສະກະ, ອີງຕາມຕົວເລກການຄົ້ນຄວ້າຂອງພວກເຮົານັ້ນ ບັນດາກຳມະ ກອນ ໒໕,໔% ໄດ້ນຳໃຊ້ຫໍສະໝຸດສ່ວນລວມ ແລະແຕ່ລະຄົນ ໃນລະຫວ່າງພວກເຂົາເຈົ້ານັ້ນ ມີປຶ້ມອ່ານຢູ່ໜ້ອງສະໝຸດ ນ້ອຍ

ປະຈຳເຮືອນຈຳນວນ ໒໐ ຫົວໂດຍຄິດໄລ່ຂະໜາດປານກາງ. ໃນປະຈຸບັນນີ້ ອີງຕາມລະດັບຄວາມຮຽກຮ້ອງຕ້ອງການ ທາງດ້ານຈິດໃຈ ແລະ ການຊຸມໃຊ້ຕົວຈິງໜາກຜົນທາງດ້ານ ວັດທະນະທຳນັ້ນ ຊຸມຊົນກຳມະກອນມີອັນແຕກຕ່າງກັນກັບ ປັນຍາຊຸມນ້ອຍລົງແລ້ວ.

ພ້ອມດຽວກັນນັ້ນ ທັງການພັນປ່ຽນຢູ່ໃນລະຫວ່າງ ປັນຍາຊຸມເອງນັ້ນ ກໍເພັ່ງໄດ້ຢ່າງປະຈັກຕາເຊັ່ນກັນ. ຂັ້ນທີໜຶ່ງການນຳໃຊ້ "ເຄື່ອງເຕັກນິກ" ເຂົ້າໃນອຸຕສາຫະກຳເກີດມີຂຶ້ນ, ເຄື່ອງຈັກເຄື່ອງລາມຕ່າງໆກໍໄດ້ມີການ ແຜ່ລາມກັນນັບມື້ນັບກ້ວາງຂວາງອອກ (ເຄື່ອງຈັກຄິດໄລ່ເອເລັກຕະໂຣນິກ, ລະບົບວິດີໂອ ແລະ ອື່ນໆ). ແຮງງານຂອງປັນຍາຊຸມ ກໍມີອັນຄ້າຍຄຽງກັນກັບແຮງງານຂອງກຳມະກອນ ເປັນສ່ວນໃຫຍ່ຫລາຍແລ້ວ. ຂັ້ນທີສອງ, ໂດຍອີງຕາມລະດັບຄວາມຕ້ານຕ້ານແບບສັງຄົມນິຍົມ ແລະ ລະດັບຈັດຕັ້ງແລ້ວ ກໍເຫັນ ວ່າ ປັນຍາຊຸມກໍໄດ້ຄ່ອຍໆກ້າວອົ່ນໄປສູ່ລະດັບຂອງຊຸມຊົນ ກຳມະກອນ ທີ່ແມ່ນກຳລັງນຳໜ້າຂອງສັງຄົມໂຊວຽດ. ສະນັ້ນ ຢູ່ທີ່ນີ້ການຂະຫຍັບຕົວເຂົ້າຫາກັນແມ່ນໄປພ້ອມໆກັນທັງສອງດ້ານ.

ໃນປະຈຸບັນນີ້ ຂະບວນວິວັດໃນການປະກອບລະບົບອັດຕະໂນມັດເຂົ້າສູ່ການຜະລິດຢູ່ພາຍໃນປະເທດຂອງພວກເຮົາແມ່ນຍັງຢູ່ໃນຂັ້ນເລີ່ມຕົ້ນເທົ່ານັ້ນ. ຢູ່ໃນອົງເຂດການຂຸດສາຫະກຳມີກຳມະກອນພຽງແຕ່ທໍ່ໃດເປີເຊັນເທົ່ານັ້ນ ທີ່ນຳເອົາລະບົບອັດຕະໂນມັດ, ສ່ວນຢູ່ໃນອົງເຂດການກໍ່ສ້າງ ແລະ ການກະສິກຳແລ້ວ ລະບົບອັດຕະໂນມັດແມ່ນຫາກໍ່ກຳເນີດເກີດຂຶ້ນເພາະ

ສະນັ້ນ ການລົບລ້າງຮອງຮອຍຄວາມແຕກຕ່າງກັນທາງ ລະ
ຫວ່າງພະນັກງານກຳມະກອນ ທີ່ເຮັດວຽກ ທາງດ້ານມັນສະ
ໝອງ ແລະ ທາງດ້ານກຳລັງກາຍ ແມ່ນຊ່ວງໄລຍະ ແສນ
ຍາວນານທີ່ສຸດ ແລະ ດ້ວຍເຫດນີ້ ບັນຍາຊົນຈະຄົງຕົວ ເປັນ
ກຸ່ມສັງຄົມໜຶ່ງຂອງສັງຄົມໄປຈົນກ່ວາອ່ານລະບອບກອມມູນິດຈະ
ໄດ້ຮັບການກໍ່ສ້າງໄດ້ຢ່າງສົມບູນ.

ຄວາມແຕກຕ່າງກັນລະຫວ່າງຊັ້ນຄົນຕ່າງໆພາຍໃນ ກຸ່ມ
ຕ່າງໆທາງດ້ານສັງຄົມນັ້ນ ແມ່ນໜຶ່ງໃນຈຳນວນບັນດາຄວາມ
ແຕກຕ່າງຕົ້ນຕໍທາງດ້ານສັງຄົມຢູ່ພາຍໃນສັງຄົມໂຊວຽດ. ຄຳ
ວ່າ "ຊົນຊັ້ນກຳມະກອນ" ນີ້ນັ້ນໄດ້ກວມລວມເອົາໝົດ ທົ່ວ
ນວນຊົນຕ່າງໆ: ນັບແຕ່ຜູ້ຊ່ຽວຊານເຄື່ອງຈັກເຖິງຜູ້ຄວບ ຄຸມ
ຕ່ອງໂສ້ອັດຕະໂນມັດກໍ່ຜູ້ບັນຊາເຄື່ອງຈັກຄິດໄລ່ເອເລັກຕະ-
ໂຣນິກ. ຊາວສະຫະກອນກະເສດລວມໝູ່ແມ່ນທັງນັກຂັບລົດໄຖ
ນາ ແລະ ທັງພວກທີ່ບໍ່ມີອຸປະສະເພາະ ຢູ່ໃນແຕ່ລະມື້ ເພິ່ນ
ອາດຈະຈັດສົ່ງພວກນີ້ຖ້າຄາດຫລ້ອນໄປອອກແຮງງານ ຢູ່ບ່ອນ
ອື່ນ. ສ່ວນຢູ່ໃນລະຫວ່າງພວກປັນຍາຊົນນັ້ນ ພວກເຮົາ ເຫັນ
ທັງນັກປາດບັນດິດ ກໍ່ຄົນງານ, ຄາລາຮູບເງົາທີ່ໂດ່ງ ດັງ
ຈົນຮອດ ນາຍສະໝຸດບັນຊັ້ນສາມັນທຳມະດາ. ສະນັ້ນ ຈຶ່ງ
ເຫັນໄດ້ວ່າ ສະພາບຂອງນວນຊົນຕ່າງໆຢູ່ພາຍໃນຊົນຊັ້ນໜຶ່ງ
ຫລືກຸ່ມສັງຄົມໜຶ່ງນັ້ນ ແມ່ນມີອັນແຕກຕ່າງກັນຫລາຍໆຢ່າງ.

ຢູ່ໃນສູນນ ຊົນຊັ້ນກຳມະກອນຂອງ ສສສຊ ໄດ້ແບ່ງອອກ
ເປັນຂ້າຊົນຄົນ ຊຶ່ງແຍກຕາມລະດັບຄວາມສັບສົນ ຂອງແຮງ
ງານ. ທີ່ໜຶ່ງ ແມ່ນບັນດາກຳມະກອນທີ່ບໍ່ມີລະດັບ ວິຊາສະ

ເພາະທາງດ້ານອຸຣງາມ, ທີ່ສອງ ແມ່ນມີລະດັບຕ່ຳ, ທີ່ສາມ ແມ່ນມີລະດັບປານກາງ, ທີ່ສີ່ ແມ່ນມີລະດັບອັຸຈາສະເພາະສູງ ທາງດ້ານອຸຣງາມ. ໃນທີ່ສຸດ ຊັ້ນຄົນທີ່ມີຄວາມຂະຫຍາຍ ຕົວ ສູງສຸດນັ້ນ ແມ່ນບັນດາກຳມະກອນ: ປັນຍາຊົນທີ່ປະກອບ ດ້ວຍ ບັນດາກຳມະກອນແບບໃໝ່. ພວກເຮົາຖືວ່າພວກທີ່ບໍ່ມີລະດັບ ອັຸຈາສະເພາະທາງດ້ານອຸຣງາມນັ້ນ ແມ່ນບັນດາກຳມະກອນ ຜູ້ທີ່ມີອຸຣງາມເຮັດແບບງ່າຍໆທີ່ສຸດ ແລະ ເພື່ອປະຕິບັດອຸຣງາມດັ່ງກ່າວນັ້ນ ກໍ່ບໍ່ຈຳເປັນຕ້ອງໄດ້ທຳການສຶກສາອົບຮົມອັນ ໃດທັງສິ້ນເລີຍ. ພຽງແຕ່ມອບໝາຍໜ້າທີ່ອຸຣງາມ ແລະ ແນະນຳກົດລະບຽບຄວາມປອດໄພທາງດ້ານເຕັກນິກໃຫ້ ຊຸ ເທົ່ານັ້ນ ກໍໃຊ້ການໄດ້ແລ້ວ. ນັ້ນຄືອຸຣງາມຂອງຄົນ ຄຸຣມ ຖ່າຍເຄືອງ, ຄົນປັດກວາດ, ຄົນເຝົ້າຍາມ, ຄົນຮັບໃຊ້ເປັນ ຕົ້ນ. ສ່ວນກຳມະກອນ-ປັນຍາຊົນນັ້ນ ແມ່ນຜູ້ທີ່ມີອຸຣງາມເຮັດ ແບບສັບສົນຫຍຸ້ງຍາກທີ່ສຸດ ແລະ ເພື່ອປະຕິບັດອຸຣງາມນັ້ນກໍ ຈຳເປັນຕ້ອງມີລະດັບການສຶກສາອັຸຈາສະເພາະຊັ້ນກາງຂຶ້ນ ສູງ.

ຢູ່ໃນກໍລະນີນີ້ ການລົບລ້າງຄວາມແຕກຕ່າງກັນທາງດ້ານ ສັງຄົມຈະດຳເນີນກັນໄປຄືແນວໃດ ? ພວກເຮົາໄດ້ເຫັນແລ້ວ ວ່າ ໃນການຂະຫຍັບຕົວເຂົ້າຫາກັນລະຫວ່າງຊົນຊັ້ນ ກຳມະ ກອນ ແລະ ຊາວໄຮ່ນາ, ຕົວເມືອງ ແລະ ຊົນນະບົດ, ແຮງ ງານທາງດ້ານມັນສະໝອງ ແລະ ທາງດ້ານກຳລັງກາຍ ນັ້ນ ລ້ວນແຕ່ແມ່ນບັນການລົບລ້າງບັນດາຮ່ອງຮອຍຄວາມແຕກຕ່າງ ກັນທີ່ມີລະຫວ່າງສິ່ງທັງໝົດເຫລົ່ານີ້, ແມ່ນການເຕົ້າໂຮມກຸ່ມ

ต่างๆเหล่านี้ล้วนเป็นอันหนึ่งอันดุจอกัน. ความแตกต่างกันพายในจิมจั้น และ พายในกุมละหว่างจั้นคิมต่าง ๆ นั้น จะขายสาบสูนไปได้ถ้วยอิทิพากอม. ยู่ทีมีสิว ที่หน้าสิมใจหลายอันเกิดขึ้น. ในหว่างบ่ถิมมานี้เอง ได้เกิดมีจั้นคิมกำมะกอม-ปันยาจิมขึ้นมา. ความแตกต่างหว่างไทกันละหว่างบันดากำมะกอม-ปันยาจิม และ บันดากำมะกอมที่บ่มีละถับอิชาสะเพาะนั้น แม่นมีหลายกว่า ละหว่างบันดากำมะกอมที่มีละถับสูง และ บ่มีละถับจำอีก. หมายความว่า ทานเกิดมีจั้นคิมแบบใหม่ คือ กำมะกอม-ปันยาจิมนี้มันได้นำไปสู่ทานลิบล้าง ความแตกต่างกันที่มีละหว่างจิมจั้นกำมะกอมโดยทั่งหมดและปันยาจิม แต่ในเวลาดุจอกัน มันพึดได้นำไปสู่ทานเพิ่มทะอีความแตกต่างกัน ละหว่างจั้นคิมต่างๆพายใน จิมจั้นกำมะกอม. เห็นได้ว่า ยู่บอมนี้ ทานสร้างตั่ว ความสะเหมือนพายทางด้านสัวคิมโดยสิมบูนนั้น จะบ่ดำเนินกันไปด้วยอิทิพากทานลิบล้างบันดาความแตกต่างกัน แต่หากด้วยอิทิพากทานลิบล้างจั้นคิมกำมะกอมที่บ่มีละถับอิชาสะเพาะทางด้านอุกงานไปเทื่อละก้าวในเบื่องต้น, จากนั้น จั่งก้าวไปลิบล้างจั้นคิมที่มีละถับต่ำแล้วก้าวไปลิบล้างพอกต่อๆไปย่างเป็นลำดับ. ทิดทางตั้นต่ำใน ทานเสิมขะหยายจิมจั้นกำมะกอมโอจุดนั้น แม่นเธิดให้พูกพูกคิมกายไบเป็นกำมะกอม-ปันยาจิม. ยู่ในทาน ทะเสดลอมหมู่กะจั่นกัน เพิ่นกะได้ดำเนินตามทิดทางที่ถ้าย

ຄຽງກັນນ໌.

ການເຮັດໃຫ້ພາຍໃນປັນຍາຈຸນກາຍເປັນປະເພດໜຶ່ງປະເພດຄຽວທາງດ້ານສັງຄົມໂດຍສົມບູນນັ້ນ ເຫັນວ່າຈະຄຳເນີນກັນໄປດ້ວຍຄວາມຫຍຸ້ງຍາກສັບສົນສົມຄວນ. ເຫັນໄດ້ວ່າຍາມໃດເພິ່ນກໍຕ້ອງການຕົວທ່ານໜໍ ແລະ ນາງແພດ ຢູ່ສະເໝີ ແລະ ເປັນການບໍ່ເໝາະສົມທີ່ສຸດ ຖ້າຫາກວ່າທ່ານໜໍ ຕ້ອງໄດ້ໄປເຮັດໜ້າທີ່ຂອງນາງແພດ. ແນ່ນອນທີ່ສຸດ,ຄວາມ ສາມາດໃນການໝູນໃຊ້ເຕັກນິກຂອງບັນດານາງແພດຈະສູງຂຶ້ນຢູ່ໃນລະດັບໃດໜຶ່ງ ແລະ ອີງຕາມລະດັບຄວາມສັບສົນ ຂອງວຽກງານນັ້ນ ພວກຂະເຈົ້າກໍມີອັນດັບຄຽງກັບບັນດາທ່ານໜໍ ໃນລະດັບໃດໜຶ່ງເຊັ່ນກັນ. ແຕ່ວ່າ ຄວາມແຕກຕ່າງກັນ ທັງໝົດທາງດ້ານລະດັບຄວາມສັບສົນ ຂອງວຽກງານຢູ່ພາຍໃນໝູ່ປັນຍາຈຸນນັ້ນຈະບໍ່ຈົບສົ້ນໄປໄດ້ຈັກເທື່ອເລີຍ.

ນອກຈາກນີ້ ກໍຍັງມີບັນຫາໜຶ່ງອີກ ທີ່ພົວພັນເຖິງການລົບລ້າງບັນດາຄວາມແຕກຕ່າງກັນທາງດ້ານຊຸ້ມຊຸ້ມສັງຄົມ ແລະ ຄວາມບໍ່ສະເໝີພາບທາງດ້ານສັງຄົມ ທີ່ບັນດາຄວາມແຕກຕ່າງ ທາງດ້ານຊຸ້ມຊຸ້ມສັງຄົມນັ້ນສ້າງມັນຂຶ້ນມາ. ນັ້ນຄື ບັນຫາການເຄື່ອນຍ້າຍທາງດ້ານສັງຄົມ ๑).

ຢູ່ພາຍໃນປະເທດຂອງພວກເຮົາ ການເຄື່ອນຍ້າຍ ທາງ

---

๑) ການເຄື່ອນຍ້າຍທາງດ້ານສັງຄົມນັ້ນ ແມ່ນການ ຍົກຍ້າຍ ຂອງຄົນເຮົາ ຈາກກຸ່ມສັງຄົມໜຶ່ງ ເຂົ້າໄປສັງກັດ ຢູ່ກຸ່ມ ສັງຄົມອື່ນ.

ດ້ານສັງຄົມມັກເກີດມີຂຶ້ນ ລະຫວ່າງຮຸ່ນຄົນຕ່າງໆເປັນສ່ວນ - ໃຫຍ່. ພວກລູກເຕົ້າຂອງບັນດາກຳມະກອນທີ່ຈົບໂຮງຮຽນສາ ມັນທົ່ວໄປແລ້ວນັ້ນ ກໍຈະກ້າວຂຶ້ນຮຽນຕໍ່ຢູ່ທີ່ສະຖາບັນ ຊັ້ນສູງ ແລະຈາກນັ້ນພວກຂະເຈົ້າກໍຈະກາຍເປັນນັກປັນຍາຊົນ. ໝາຍ ຄວາມວ່າ ຖ້າເບິ່ງຕາມຕົ້ນກຳເນີດຂອງຜູ້ເປັນພໍ່ແມ່ແລ້ວນັ້ນກໍ ຈະເຫັນໄດ້ວ່າ ພວກລູກເຕົ້າໄດ້ປ່ຽນທີ່ຕັ້ງ ທາງດ້ານສັງຄົມ ຂອງຕົນເອງແລ້ວ. ນີ້ຄືການເຄື່ອນຍ້າຍທາງດ້ານສັງຄົມ ລະ ຫວ່າງຮຸ່ນຄົນຕ່າງໆ.

ອີກສິ່ງໜຶ່ງນັ້ນຄື ການເຄື່ອນຍ້າຍທາງດ້ານສັງຄົມ ພາຍ ໃນຮຸ່ນຄົນ, ໝາຍຄວາມວ່າ ໃນຕະຫລອດທົ່ວຊົນຊັ້ນຢູ່ນັ້ນ ຄົນ ຜູ້ໜຶ່ງຜູ້ດຽວໄດ້ມີໂອກາດເປັນສະມາຊິກຂອງຫລາຍໆກຸ່ມ ສັງ ຄົມທີ່ແຕກຕ່າງກັນ. ເຊັ່ນຕົວຢ່າງ, ກຳມະກອນຜູ້ໜຶ່ງ ທີ່ທຳ ການສຶກສາຢູ່ສະຖາບັນຊັ້ນສູງພາກຄ່ຳ ຫລືແບບແລກປ່ຽນ ກັນ ທາງຈົດໝາຍນັ້ນ ກໍຈະກາຍເປັນນັກປັນຍາຊົນໃນທີ່ສຸດ. ຊາວ ສະຫະກອນກະເສດຜູ້ໜຶ່ງໄດ້ຍົກຍ້າຍເຂົ້າໄປຢູ່ພາຍໃນ ຕົວ ເມືອງ, ມີວິຊາຊີບໃໝ່ ແລະ ໃນທີ່ສຸດກໍຈະກາຍເປັນກຳມະ ກອນໄດ້ເຊັ່ນກັນ. ແຕ່ວ່າ, ດັ່ງທີ່ພວກເຮົາໄດ້ຮຽນມາ ແລ້ວ ນັ້ນ ປະເພດຂອງການເຄື່ອນຍ້າຍທາງດ້ານສັງຄົມແບບນີ້ແມ່ນ ພົບເຫັນໜ້ອຍກວ່າ.

ບັນດາຄວາມແຕກຕ່າງກັນໃນການມີໂອກາດໄດ້ຮັບ ການ ສຶກສາຊັ້ນສູງ ແລະ ການເຄື່ອນຍ້າຍທາງດ້ານສັງຄົມນັ້ນ ຈະ ລົບລ້າງມັນໄດ້ແນວໃດ ?

ໜຶ່ງໃນຈຳນວນປັດໄຈອັນສຳຄັນຕໍ່ບັນຫາດັ່ງກ່າວນີ້ ຄືຢູ່

ພາຍໃນປະເທດຂອງພວກເຮົາ ເພິ່ນໄດ້ລົງມືປະຕິບັດການສຶກ
ສາສາມັນຊັ້ນກາງທົ່ວໄປໃນພາກຕົວຈິງແລ້ວ. ຜູ້ແຕ່ງຍັງຈື່ໄດ້
ວ່າ ໃນຄາວເມື່ອບັນດາລູກຂອງລາວຍັງຮຽນຢູ່ໂຮງຮຽນ ນັ້ນ
ແລະ ຢູ່ໃນເວລາການລວມປະຊຸມພໍ່ແມ່ນັກຮຽນໃນຄັ້ງ ໜຶ່ງ
ເພິ່ນໄດ້ຮາຍໃຫ້ແມ່ຍິງຜູ້ໜຶ່ງຍອມວ່າລູກຊາຍຂອງລາວ ຮຽນ
ໜັງສືບໍ່ໄດ້ດີ. ສ່ວນແມ່ຍິງຄົນນັ້ນ ກໍໄດ້ຕອບຢ່າງມີເຫດຜົນດີ
ວ່າ: "ຂ້ອຍບໍ່ຮູ້ຈະເຮັດຫຍັງໄດ້ ? ຂ້ອຍເອງກໍຮຽນ ຮອດ
ພຽງແຕ່ຫ້ອງ ๔ ເທົ່ານັ້ນ ສ່ວນລູກຊາຍມັນພັດຮຽນຢູ່ຫ້ອງສິບ
ແລ້ວ, ຂ້ອຍບໍ່ພຽງແຕ່ບໍ່ສາມາດຊ່ວຍເຫລືອມັນຢູ່ໃນການ ຮ່ຳ
ຮຽນຂອງມັນເທົ່ານັ້ນ ແຕ່ຍິ່ງໄປກ່ວານັ້ນ ຂ້ອຍຮອດບໍ່ຮູ ຈະ
ກວດກາໄດ້ວ່າມັນຮຽນບົດຮຽນໄດ້ຄືແນວໃດຊ້ຳ". ໃນສູ່ມ ສັ
ສະພາບການໄດ້ປ່ຽນແປງໄປແລ້ວ. ຍ້ອນວ່າເກືອບ ๔๐ ປີ
ຜ່ານມາແລ້ວ ທີ່ເພິ່ນໄດ້ປະຕິບັດການສຶກສາສາມັນຊັ້ນກາງທົ່ວ
ໄປ. ເພາະສະນັ້ນ ໃນປະຈຸບັນນີ້ເກືອບຖືໄດ້ວ່າ ພວກພໍ່ແມ່
ຂອງເດັກນ້ອຍທຸກໆຄົນທີ່ກຳລັງຮຽນຢູ່ໂຮງຮຽນສາມັນນັ້ນແມ່ນ
ມີທັງລະດັບການສຶກສາຊັ້ນກາງນຳ. ໝາຍຄວາມວ່າພວກຂະ
ເຈົ້າມີຄວາມອາດສາມາດປະມານເທົ່າໆກັບພວກນັກປັນຍາຊົນ
ໃນການໃຫ້ຄວາມຊ່ວຍເຫລືອແນະນຳການຮ່ຳຮຽນຕ່າງໆ ໃຫ້
ລູກເຕົ້າຂອງຕົນ. ຍ້ອນວ່າພໍ່ເປັນນັກວິສະວະກອນກໍຄົງ ມີ
ຄວາມສາມາດຊ່ວຍເຫລືອລູກເຕົ້າຂອງຕົນໃຫ້ຮຽນເກັ່ງໄດ້ແຕ່
ທາງດ້ານເລກຄະນິດສາດ ແລະ ຮູບແຕ້ມເຕັກນິກເທົ່ານັ້ນ ,
ສ່ວນກ່ຽວກັບທາງດ້ານປະຫວັດສາດ, ວັນນະຄະດີ, ຊີວະສາດ
ແລ້ວ ເຂົ້າກໍຢູ່ໃນສະພາບຄວາມຮັບຮູ້ດ່ຽງດຽວກັນກັບ ກຳມະ

ກອມທີ່ມີລະດັບການສຶກສາຊັ້ນກາງນັ້ນເອງ.

ປັດໄຈອັນທີ່ສອງ ຄືຢູ່ພາຍໃນປະເທດຂອງພວກເຮົາເພິ່ນ ໄດ້ສ້າງຕັ້ງຂະແໜງປົກຽມຢູ່ຕາມສະຖາບັນການສຶກສາຊັ້ນສູງ ແຫ່ງຕ່າງໆ. ເພິ່ນໄດ້ຮັບເອົາບັນດາກຳມະກອນ ແລະ ຊາວ ສະຫະກອນກະເສດທີ່ດີເດັ່ນເຂົ້າໄປຮຽນຢູ່ຂະແໜງປົກຽມນັ້ນ ພວກຂະເຈົ້າໄດ້ທຳການສຶກສາຮ່ຳຮຽນໄປຕາມຫລັກສູດ ການ ຮຽນຂອງໂຮງຮຽນສາມັນຊັ້ນກາງພາຍໃນກຳນົດໜຶ່ງປີ ແລະ ຈາກນັ້ນພວກຂະເຈົ້າກໍຈະມີຄວາມອາດສາມາດກ້າວອົ້ນຮຽນຕໍ່ ຢູ່ທີ່ສະຖາບັນ.

ປັດໄຈອັນທີ່ສາມ ແມ່ນລະບົບການສຶກສາ ແບບແລກປ່ຽນ ກັນທາງຈົດໝາຍ ແລະ ພາກຄຳທີ່ໄດ້ແຜ່ຂະຫຍາຍກັນ ຢ່າງ ກ້ວາງຂວາງທີ່ສຸດ ຢູ່ພາຍໃນປະເທດ. ໃນສົກການສຶກສາ ປີ ໑໙໖໓-໖໔ ມີນັກສຶກສາຈຳນວນ ໔໖ພັນກ ພັນຄົນທີ່ຮຽນຢູ່ຕາມ ຂະແໜງການຮຽນປະຈຳວັນຂອງສະຖາບັນການສຶກສາຊັ້ນສູງ ແຫ່ງຕ່າງໆ, ຮຽນຢູ່ຕາມຂະແໜງການຮຽນພາກຄ່ຳມີ ๔๕๔ ພັນ, ຮຽນແບບແລກປ່ຽນກັນທາງຈົດໝາຍມີ ๑๔๑๔ ພັນຄົນ ໝາຍຄວາມວ່າ ຫລາຍກວ່າ ๓ກ % ຂອງຈຳນວນນັກສຶກສາ ທັງໝົດໄດ້ຮັບການສຶກສາຊັ້ນສູງໂດຍບໍ່ໄດ້ຕັດຂາດ ຈາກການ ຜະລິດເລີຍ ແຕ່ທັງເຮັດທັງຮຽນໄປພ້ອມໆກັນ. ພວກຂະເຈົ້າ ເປັນໃຜກັນແທ້ ? ຂ້ອທີ່ໜຶ່ງ, ຄົນພວກນີ້ແມ່ນມາຈາກຄອບຄົວ ທີ່ໄດ້ຮັບອັດຕາໜ້ອຍຫລືມາຈາກຄອບຄົວຂອງພະນັກງານ ກຳ ມະກອນທີ່ມີລູກຫລາຍຄົນ, ກ່ອນອື່ນໝົດ ແມ່ນມາຈາກ ຄອບ ຄົວກຳມະກອນ ແລະ ຊາວສະຫະກອນກະເສດລວມໝູ່. ຂ້ອ

ສອງ, ແມ່ນພວກທີ່ບໍ່ໄດ້ຮັບການສຶກສາຂັ້ນສູງຕາມສະພາບ ທີ່ ເໝາະສົມ ຊຶ່ງເນື່ອງມາຈາກສາຍເຫດບາງປະການ (ຮັບ ໃຊ້ການທະຫານ, ເຈັບປ່ວຍ, ສະພາບຄອບຄົວ) ຈາກນັ້ນ ກໍພັດໄດ້ຮັບພາລະເບິ່ງແຍງຄອບຄົວອີກ. ແມ່ນອັນທີ່ສຸດ ພວກ ຂະເຈົ້າພ້ອມດ້ວຍຄອບຄົວບໍ່ສາມາດຈະໃຊ້ຊີວິດຢູ່ໄດ້ໂດຍ ອາ ໃສແຕ່ເງິນເບ້ຍລ້ຽງການສຶກສາເທົ່ານັ້ນ (ຍ້ອນວ່າເງິນເບ້ຍ ລ້ຽງນັ້ນໜ້ອຍກວ່າອັດຕາຄ່າແຮງງານຫລາຍສົມຄວນ) , ເພາະສະນັ້ນ ຈຶ່ງຈຳເປັນຕ້ອງໄດ້ເຮັດວຽກແດ່ ຮຽນແດ່ ໄປ ພ້ອມໆກັນ. ໃນທີ່ສຸດ ພວກບັນດານັກສຶກສາທີ່ແຕ່ງງານກັນໃນ ໄລຍະທີ່ກຳລັງຮຽນ ແລະ ເພື່ອຮັບພາລະເບິ່ງແຍງ ຄອບຄົວ ໃນເວລາອັນໆນັ້ນ ກໍຈຳຕ້ອງໄດ້ພາກັນໄປຮຽນຢູ່ໃນຂະແໜງ ການສຶກສາພາກຄ່ຳຫລືແບບແລກປ່ຽນກັນທາງຈົດໝາຍ.ດ້ວຍ ເຫດນີ້ ລະບົບການສຶກສາພາກຄ່ຳ ແລະ ແບບແລກປ່ຽນ ກັນ ທາງຈົດໝາຍ ຈຶ່ງເປັນພາຫະນະອັນໜຶ່ງທີ່ສຳຄັນໃຫ້ແກ່ ຝູງ ຄົນຂອງຊົນຄົນທີ່ມີລາຍໄດ້ໜ້ອຍ ໄດ້ຮັບການສຶກສາ ອັນຊາສະ ເພາະຊັ້ນສູງຫລືຊັ້ນກາງ ແລະ ມັນກໍໄດ້ສ້າງການລະ ໂອກາດ ຢ່າງຫລວງຫລາຍທີ່ສຸດ ໃຫ້ພວກຂະເຈົ້າໄດ້ມີລະດັບ ການສຶກ ສາດັ່ງກ່າວມານັ້ນເປັນຢ່າງດີ.

ການເຄື່ອນໄຫວຂອງທັງໝົດສາມປັດໃຈເຫລົ່ານີ້ ມັນຈະ ເຮັດໃຫ້ບັນດາຄວາມອາດສາມາດໃນການໄດ້ຮັບການສຶກສາ ອັນ ຊາສະເພາະຊັ້ນສູງ ຫລືຊັ້ນກາງ, ບັນດາຄວາມອາດສາມາດ ໃນການເຄື່ອນຍ້າຍ ຕ່າງໆທາງດ້ານສັງຄົມ ນັບມື້ນັບໄດ້ກາຍ ເປັນອັນເທົ່າທຽມກັນສຳລັບບັນດາຝູງຊົນຕ່າງໆຂອງທຸກໆ ກຸ່ມ

ສັງຄົມໂດຍທັງໝົດ. ບາງທີບັນດາຄວາມແຕກຕ່າງກັນ ຈະ
ຫາຍສາບສູນໄປຢ່າງສົ້ນເຊີງ ໃນເມື່ອມີການກໍ່ສ້າງ ລະບອບ
ກອມມູນິດຂຶ້ນໃນໄລຍະເບື້ອງຕົ້ນ.

ບັດນີ້ ຂໍເວົ້າອີກຈັກສອງສາມຄວາມກ່ຽວກັບກຸ່ມສັງຄົມກຸ່ມ
ໜຶ່ງຂອງສັງຄົມໂຊວຽດ ຊຶ່ງພວກເຮົາຍັງບໍ່ທັນໄດ້ກ່າວ ຫວນ
ຄືນເທື່ອນີ້ຄື ກ່ຽວກັບບັນດາພະນັກງານ ທີ່ບໍ່ແມ່ນນັກວິຊາ
ການ. ນັ້ນຄື ບັນດາພະນັກງານກຳມະກອນທີ່ເຮັດວຽກ ທາງ
ດ້ານມັນສະໝອງ ຊຶ່ງມີລະດັບວິຊາສະເພາະຕ່ຳ ຫລືບໍ່ມີ ລະ
ດັບ. ໂດຍແຕກຕ່າງຈາກປັນຍາຊົນນັ້ນ ແຮງງານຂອງພວກ
ຂະເຈົ້າ ບໍ່ໄດ້ຮຽກຮ້ອງລະດັບການສຶກສາວິຊາສະເພາະ ທັງ
ຊັ້ນສູງ ກໍຄືຊັ້ນກາງແຕ່ຢ່າງໃດເລີຍ. ນັ້ນຄື ຄົນຂາຍເຄື່ອງ,
ຄົນຄິດໄລ່ບັນຊີ, ຜູ້ເບີກຈ່າຍເງິນ, ນັກພິມດີດ, ເລຂາທາງ
ດ້ານເຕັກນິກ, ຜູ້ກຳກັບເອກະສານ, ຜູ້ຊ່ວຍວຽກປະຈຳຫ້ອງ
ທົດລອງ, ຕຳຫລວດຊັ້ນນ້ອຍເປັນຕົ້ນ. ການຂະຫຍາຍຕົວກຸ່ມ
ດັ່ງກ່າວນີ້ ດຳເນີນໄປໃນສອງທິດທາງ. ຂ້ອໜຶ່ງ, ເມື່ອງ
ຈາກມີການນຳໃຊ້ເຄື່ອງຈັກຄິດໄລ່ເອເລັກຕະໂຣນິກເຂົ້າ ໃນ
ການຄິດໄລ່ ແລະ ສະສາງບັນຊີກັນຢ່າງກ້ວາງຂວາງທີ່ສຸດນັ້ນ
ມັນໄດ້ເຮັດໃຫ້ຄວາມຕ້ອງການຕົວພະນັກງານທາງດ້ານນີ້ ໄດ້
ຫລຸດໜ້ອຍຖອຍລົງຊັກໄຊ້. ພວກຂະເຈົ້າກໍໄດ້ຄ່ອຍໆກ້າວຂຶ້ນ
ເປັນຜູ້ບັນຊາຈັກຄິດໄລ່, ໝາຍຄວາມວ່າໄດ້ກາຍເປັນກຳມະ
ກອນ, ແລະ ໃນຕໍ່ໜ້າ ທິດຂະຫຍາຍຕົວ ຂອງພວກຂະເຈົ້າ
ແມ່ນກ້າວໄປເຖິງການຫັນເປັນຮູບລັກສະນະອັນໜຶ່ງ ອັນດຽວ
ກັນທາງດ້ານສັງຄົມ ຄືເປັນເໝືອນດັ່ງກຳມະກອນນັ້ນເອງ .

ສ່ວນອີກປະເພດນຶ່ງນັ້ນ ແຮງງານນັບມື້ນັບມີຄວາມ ສັບສົນ ຫຍຸ້ງຍາກຍິ່ງໆຂຶ້ນ. ໃນອະນາຄົດຕໍ່ໜ້ານີ້ ມີທ່າອຽງ ໄປສູ່ ການຫັນເອົາຄົນຂາຍເຄື່ອງທົ່ວໜົດໄປເປັນຄົນຂາຍເຄື່ອງ ຊຸ ນຳຄຳເຫັນຊຶ່ງຈະເປັນຜູ້ແນະນຳຜູ້ຊຸເຄື່ອງທົ່ວຫລາຍໃຫ້ຮູ ຈັກ ກັບສິນຄ້າໃໝ່ໆທີ່ຈັດວາງໄວ້ຢູ່ພາຍໃນຮ້ານຄ້ານັ້ນ. ເຄື່ອງ ແບບນັບມື້ນັບຫລາຍຂຶ້ນ. ເຊັ່ນວ່າຢູ່ໃນປີ ໑໙໗໕ ເຄື່ອງໜຶ່ງ ຂອງສິນຄ້າທົ່ວໜົດທີ່ໄດ້ວາງຂາຍຢູ່ຕາມຮ້ານຄ້າຕ່າງ ໆ ນັ້ນ ເປັນສິນຄ້າທີ່ບໍ່ມີໃຜຮູ້ຈັກ ຈັກໜ້ອຍເລີຍພາຍໃນຕະຫລອດ໑໕ ປີກ່ອນໜ້າປີ ໑໙໗໕ ນີ້. ຜູ້ຂາຍສິນຄ້າປະເພດຜັກ ມີລະດັບ ຄວາມຫຍຸ້ງຍາກສັບສົນທາງດ້ານອຸຕສາຫະກຳແບບໜຶ່ງ, ຜູ້ຂາຍ ສິນຄ້າປະເພດໂທລະທັດ, ເຄື່ອງອັດສຽງ, ວິດີໂອ, ລົດ , ຈັກຄົດໄລ່ເອເລັກຕະໂຣນິກ ພັດມີລະດັບຄວາມຫຍຸ້ງຍາກ ສັບ ສົນແບບໜຶ່ງອີກ.

ດ້ວຍເຫດນີ້ ຈຶ່ງເກີດມີການຈັດສ້າງ ການເປັນປະເພດ ໜຶ່ງປະເພດຢ່ອຍ ຢ່າງສົມບູນທາງດ້ານສັງຄົມຂອງສັງຄົມນຶ່ງ, ໝາຍຄວາມວ່າ ທຳການລົບລ້າງບັນດາກຸ່ມສັງຄົມທີ່ມີຄວາມ ເທົ່າທຽມກັນທາງດ້ານທີ່ຕົວຂອງຕົນນັ້ນລົງ ກໍ່ຄືທຳການລົບລ້າງ ໂຄງປະກອບສັງຄົມທາງດ້ານອຸນຸ້ມນັ້ນເອງ ໜຶ່ງໃນຈຳນວນ ຂັ້ນຢ່ຳອັນສຸດທ້າຍຊຶ່ງຊຸ້ໃຫ້ເຫັນເຖິງໝາກຜົນ ທີ່ສັງຄົມ ຂອງພວກເຮົາໄດ້ຍາດມາໄດ້ໃນດ້ານນີ້ແລ້ວນັ້ນ ແມ່ນ ການ ເພີ່ມທະວີຈຳນວນຄອບຄົວທີ່ຖືກແບ່ງແຍກກັນທາງດ້ານສັງຄົມ, ໝາຍຄວາມວ່າ ບັນດາສະມາຊິກຂອງຄອບຄົວເຫລົ່ານັ້ນ ໄດ້ ສັງກັດຢູ່ແຕ່ລະກຸ່ມສັງຄົມທີ່ແຕກຕ່າງກັນ. ຢູ່ພາຍໃນ ປະເທດ

ຂອງພວກເຮົາ ປະກົດການດັ່ງກ່າວນີ້ແມ່ນບໍ່ມີເລີຍ ຕາບໃດທີ່ ແມ່ຍິງບໍ່ໄດ້ອອກໄປເຮັດວຽກການຜະລິດສັງຄົມ, ຕາບໃດ ທີ່ ລາວນັ່ງຢູ່ແຕ່ໃນບ້ານ ແລະ ເບິ່ງແຍງລູກຕ້ຳ ແລະ ເຮັດ ວຽກເຮືອນການຊານເທົ່ານັ້ນ. ໃນເມື່ອນັ້ນ ສະພາບ ທາງ ດ້ານສັງຄົມຂອງແມ່ຍິງ ຈະຖືກກຳນົດໄປຕາມສະພາບຂອງ ຜູ້ ເປັນຜົວ. ໃນສູນນ ຢູ່ທ ສສສຊ ເກືອບຖືໄດ້ວ່າແມ່ຍິງທຸກ ໆ ຄົນໄດ້ມີວຽກເຮັດງານທຳ ແລະ ດ້ວຍເຫດນ້ ພວກຂະເຈົ້າ-ຈຶ່ງມີສະພາບທາງດ້ານສັງຄົມເປັນຂອງຕົນເອງ. ສະນັ້ນ ຈຶ່ງ ມັກເກີດມີຢູ່ສະເໝີວ່າ ການສັງກັດທາງດ້ານສັງຄົມຂອງ ຜູ້ ເປັນຜົວ ແລະ ຜູ້ເປັນເມຍ, ຂອງຜູ້ເປັນພໍ່ແມ່ ແລະລູກຕ້ຳ ຈຶ່ງບໍ່ກົງກັນ. ເກີດມີຫລາຍຄອບຄົວທີ່ສຸດທ້ນ ສ່ວນປະກອບທາງ ດ້ານສັງຄົມແບບຜະສົມກັນ. ຢູ່ໃນ ສສສຊ ໂດຍສະເລ່ຍຜ່ານ ການ ໃນປີ ໑໙ກ໙ ຄອບຄົວດັ່ງກ່າວນ້ປະກອບມີເຖິງ໓໓,໑% ຂອງຈຳນວນຄອບຄົວທັງໝົດ, ຢູ່ລັດ ອູຊະເບກ໊ສະຖານ ໔໐,໔, ກາຊັກສະຖານ ໓໔,໒, ອາແຊກໃບຊານ ໓໒,໔, ກຽກກ໊ດສະຖານ ໓໔,໕, ຕາດຊ໊ກ໊ດສະຖານ-໓໘,໒, ຕຸກ ເມນ໊ດສະຖານ ໓ກ,໘% ຂອງຈຳນວນຄອບຄົວທັງໝົດ. ສັງດັ່ງກ່າວນ້ໄດ້ສະແດງໃຫ້ເຫັນວ່າ ບັນດາກຸ່ມສັງຄົມແລະຊົນ ຊຸ່ມຕ່າງໆໄດ້ຂະຫຍັບຕົວເຂ້ົາຫາກັນ ແລະ ມີສຳພັນ ທະພາບ ຊ່ວກັນ ແລະ ກັນຢ່າງຫລວງຫລາຍແລ້ວ, ການພົວພັນ ທາງ ດ້ານສ່ວນຕົວ ກໍໃກ້ຊິດສະໜິດແໜ້ນກັນເປັນຢ່າງດີແລະການ ສັງກັດທາງດ້ານສັງຄົມຂອງເຈ້ົາບ່າວ ແລະ ເຈ້ົາສາວນ້ນກໍ່ ມີຄວາມສຳຄັນໃດໆທັງສ້ນໃຫ້ແກ່ການແຕ່ງງານກັນ. ແຕ່ວ່າໃນ

ເວລາດຽວກັນ ສາລະຄະດີໂລກຕ່າງກໍເຕັມໄປດ້ວຍ ຂໍ້ຂຽນ ຕ່າງໆທີ່ເປັນເລື່ອງເສົ້າໆເລົ່າເຖິງບ່າວສາວມັກຮັກກັນ ແຕ່ ຕ່າງຝ່າຍຕ່າງກໍມີສະພາບທາງດ້ານສັງຄົມແຕກຕ່າງກັນ ແລະ ຜູ້ເປັນພໍ່ແມ່ບໍ່ອາດ່ອະນຸຍາດໃຫ້ພວກຂະເຈົ້າແຕ່ງງານ ກັນໄດ້ ເພາະວ່າການແຕ່ງງານແບບນີ້ຈະສ້າງຄວາມອັບອາຍ ຂາຍ ໜ້າໃຫ້ແກ່ຄອບຄົວທີ່ຮັ່ງມີ...ແຕ່ວ່າ ບັນຫາຄວາມຮັກແບບນີ້ ລະບອບ ສັງຄົມນິຍົມໄດ້ແກ້ໄຂຕົກໄປແລ້ວ ແລະ ມັນກໍໄດ້ ເຮັດໃຫ້ທຸກຄົນມີຄວາມອິດສະຫລະພາບໃນການເລືອກເອົາ ຄູ່ ຄອງຊີວິດຂອງຕົນ.

ດ້ວຍເຫດນີ້ ພວກເຮົາຈຶ່ງເຫັນໄດ້ວ່າການສ້າງຕັ້ງຄວາມ ເປັນປະເພດໜຶ່ງປະເພດດຽວຢ່າງສົມບູນທາງດ້ານ ສັງຄົມ ຂອງສັງຄົມນັ້ນ ແມ່ນດຳເນີນໄປດ້ວຍຜົນສຳເລັດຢ່າງສະຫງ່າ ງາມທີ່ສຸດ. ແຕ່ວ່າຢູ່ບ່ອນນີ້ຍັງມີອີກບັນຫາໜຶ່ງຄື: ສັງຄົມປະ ເພດໜຶ່ງປະເພດດຽວທາງດ້ານສັງຄົມ ຈະກາຍເປັນສັງຄົມ ແຫ່ງຄວາມສະເໝີພາບຢ່າງສົມບູນທາງດ້ານສັງຄົມ ຂອງຄົນ ເຮົາໄດ້ຢ່າງເຕັມສ່ວນໄດ້ຫລືບໍ ?

ກ່ອນໜ້ານີ້ ພວກເຮົາໄດ້ເວົ້າມາໜົດແລ້ວກ່ຽວກັບ ບັນ ດາຄວາມແຕກຕ່າງກັນທີ່ເປັນຄວາມແຕກຕ່າງກັນທາງດ້ານສັງ ຄົມ ໂດຍທຳມະຊາດຂອງມັນເອງ. ແຕ່ວ່າຢູ່ໃນສັງຄົມຊົນຊັ້ນ ໃດກໍຕາມ ມີບາງຄວາມແຕກຕ່າງກັນຊຶ່ງຕາມທຳມະຊາດຂອງ ຕົນບໍ່ມີລັກສະນະສັງຄົມແຕ່ພັດມີຄວາມໝາຍທາງດ້ານສັງຄົມ. ເຊັ່ນຕົວຢ່າງ, ຄວາມແຕກຕ່າງກັນ ລະຫວ່າງຜູ້ຊາຍແລະແມ່ ຍິງນັ້ນແມ່ນມີລັກສະນະທາງດ້ານຊີວະສາດ. ແຕ່ວ່າ ທີ່ພວກ

ເຮົາໄດ້ຮຽນມາແລ້ວ ຢູ່ໃນສັງຄົມຊົນຊັ້ນນັ້ນ ເຫັນວ່າ ບັນດາ
ຄວາມແຕກຕ່າງກັນທາງດ້ານວັດຖຸສາດເຫລົ່ານັ້ນ ໄດ້ນຳໄປສູ່
ຄວາມບໍ່ສະເໝີພາບທາງດ້ານສັງຄົມ ລະຫວ່າງຜູ້ຊາຍ ແລະ
ແມ່ຍິງຂົມ.

ຄວາມບໍ່ສະເໝີພາບດັ່ງກ່າວນີ້ ມັນໄດ້ເກີດມີຂົມ ຢູ່ໃນ
ເງື່ອນໄຂຂອງສັງຄົມທີ່ມີການກົດຂີ່ຂູດຮີດກັນຊຶ່ງເປັນບ່ອນທີ່ ຜູ້
ຊາຍ ແລະ ແມ່ຍິງບໍ່ມີຄວາມເທົ່າທຽມກັນ ເຊັ່ນຢູ່ໃນໂລກສາ
ສະໜາມູຊະລຶມກໍຄືສາສະໜາຄຣິສຕຽນ ນັ້ນເອງ.

ໄປພ້ອມໆກັບການເຂົ້າປະກອບສ່ວນຂອງແມ່ຍິງຢູ່ໃນການ
ຜະລິດສັງຄົມ ກໍຄືຄວາມເປັນເອກະລາດຂອງແມ່ຍິງທາງດ້ານ
ເສດຖະກິດນັ້ນ ເຫັນວ່າຄວາມສະເໝີພາບເທົ່າທຽມກັນ ລະ
ຫວ່າງແມ່ຍິງ ກັບຜູ້ຊາຍກໍຄ່ອຍໆເລີ່ມເກີດມີຂົມ. ສັງຄົງກ່າວ
ນີ້ ໄດ້ປະກົດມີຂົມຢູ່ໃນລະບອບທຶນນິຍົມໃນເບື້ອງຕົ້ນ, ແຕ່ວ່າ
ການປົດປ່ອຍແມ່ຍິງໃນພາກຕົວຈິງ ໄດ້ຢ່າງວ່ອງໄວນັ້ນ ແມ່ນ
ເລີ່ມເກີດຂົມຢູ່ໃນລະບອບສັງຄົມນິຍົມເທົ່ານັ້ນ.

ບັນຫາດັ່ງກ່າວນີ້ ແມ່ນມີສອງດ້ານດ້ວຍກັນ. ໃນເບື້ອງ
ຕົ້ນ ການທີ່ພວກຜູ້ຊາຍໄດ້ຮັບຮູ້ຄວາມສະເໝີພາບ ຂອງພວກ
ແມ່ຍິງນັ້ນແມ່ນມີຄວາມໝາຍອັນສຳຄັນຍິ່ງສຳລັບພວກເຮົາ .
ໂດຍອີງຕາມກົດໝາຍແລ້ວ ຄວາມສະເໝີພາບ ຂອງແມ່ຍິງ
ໄດ້ຖືກກຳນົດຂົມນັບແຕ່ມີທຳອິດຂອງອຳນາດໂຊວຽດ ທີ່ໄດ້ກຳ
ເນີດຂົມ. ເປັນຄັ້ງທຳອິດທີ່ເພີ່ນໄດ້ປະກາດຢ່າງເປັນ ກົດ
ໝາຍວ່າ ແມ່ຍິງມີສິດທິທຸກໆຢ່າງເໝືອນດັ່ງກັບຜູ້ຊາຍ.ເປັນ
ຄັ້ງທຳອິດທີ່ເພີ່ນໄດ້ກຳນົດອັດຕາຄ່າແຮງງານເທົ່າທຽມກັນຂົມ

ລະຫວ່າງຜູ້ຊາຍ ແລະ ແມ່ຍິງທີ່ມີໜ້າວຽກອັນດຽວກັນ. ເປັນ ຄົງທຳອິດທີ່ແມ່ຍິງໄດ້ມີຄວາມອາດສາມາດຕົວຈິງເພື່ອທຳການ ສຶກສາຮ່ຳຮຽນ ແລະ ຮ່ຳຮຽນເອົາວິຊາສະເພາະ. ເປັນ ຄົງ ທຳອິດທີ່ແມ່ຍິງມີຄວາມເທົ່າທຽມກັບຜູ້ຊາຍ ສາມາດເຂົ້າ ປະ ກອບສ່ວນຢູ່ໃນວຽກງານການລຸ້ມຄອງລັດ. ແຕ່ວ່າ ເພິ່ນຕ້ອງ ໄດ້ໃຊ້ເວລາກັນຢ່າງຍາວນານທີ່ສຸດ ເພື່ອເຮັດໃຫ້ຜູ້ຊາຍຮັບຮູ ຄວາມສະເໝີພາບຂອງຕົນເທົ່າກັບແມ່ຍິງຢູ່ພາຍໃນຄອບຄົວ. ພໍເສັດແລ້ວ ເພິ່ນໄດ້ພົບຄວາມຫຍຸ້ງຍາກທີ່ສຸດຢູ່ໃນບັນດາ ລັດ ຕ່າງໆທີ່ມີປະຊາຊົນເປັນຜູ້ຖືສາສະໜາມຸຊະລິມ. ເປັນ ໄລຍະ ເວລາອັນຍາວນານທີ່ສຸດ ທີ່ຜູ້ເປັນຜົວ ແລະ ຜູ້ເປັນພໍ່ບໍ່ອະນຸ-ຍາດໃຫ້ພວກແມ່ຍິງໄດ້ຮຽນໜັງສື, ໄດ້ເຮັດວຽກ ແລະ ບັງ ຄັບໃຫ້ພວກຂະເຈົ້າຕ້ອງລຸ້ມຜ້າປົກໜ້າ. ເຖິງແມ່ນວ່າ ບາງ ຊົນຊາດມຸຊະລິມຂອງ ສສສຊ ເຊັ່ນ ຊາວກາຊັກ, ຕາຕາ, ບາຊະກີ-ບໍ່ເຄີຍມີຜ້າລຸ້ມໜ້າມາກ່ອນເລີຍກໍຕາມ, ສ່ວນ ໃນ ດ້ານອື່ນໆແມ່ຍິງໄດ້ຕົກຢູ່ໃນສະພາບບິບບັງຄັບເໝືອນດັ່ງ ຢູ່ ເຂດຕາເວັນອອກທ່ວໆໄປຈົນຮອດບ່ອນວ່າ ຍິງສາວຖືກບີບບັງ ຄັບໃຫ້ແຕ່ງງານກັບຜູ້ຊາຍທີ່ນາງບໍ່ເຄີຍໄດ້ພົບໜ້າ ມາກ່ອນ ເລີຍ.

ເພິ່ນໄດ້ໃຊ້ເວລາມັບເປັນສິບໆປີໃນການເຮັດວຽກປຸກລະ ດົມຂົນຂວາຍໃຫ້ຊາບຊຶ້ມຮູ້ແຈ້ງເຖິງອຳນາດໂຊວຽດ ແລະໃນ ການຕໍ່ສູ້ຂອງພວກແມ່ຍິງເພື່ອດຳເນີນການຕໍ່ສູ້ ປົດປ່ອຍຕົນໄປ ຈົນກວ່າວ່າຜ້າລຸ້ມໜ້າຈະຫາຍສາບສູນໄປຈົນກວ່າວ່າພວກແມ່ ຍິງຈະໄດ້ເຮັດວຽກ ແລະ ຮ່ຳຮຽນໜັງສື, ໝາຍຄວາມວ່າ

ຈົນກ່ວາພວກຂະເຈົ້າໄດ້ຊຸມໃຊ້ສິດທິພົນລະເຮືອນຂອງຕົນ. ໃນ
ສູນ ແມ່ຍິງໄດ້ປະກອບສ່ວນອັນສຳຄັນຢູ່ໃນຊີວິດຂອງປະເທດ
ຊາດ.

ໃນປະຈຸບັນນີ້ ແມ່ຍິງເກືອບທຸກໆຄົນຂອງ ສສສຊ ມີວຽກ
ເຮັດງານທຳກັນໝົດ. ໃນປີ ໑໙໗໔ ແມ່ຍິງໄດ້ປະກອບ ມີ
ເຖິງ ๔๓,๑ % ຂອງຈຳນວນປະຊາຊົນທັງໝົດ ແລະ ๕๑% ຂອງຈຳນວນກຳມະກອນ ແລະ ພະນັກງານທັງໝົດ. ພ້ອມ
ດຽວກັນນີ້ ແມ່ຍິງມີ ๗๐ % ໃນຈຳນວນນັກວິຊາການທັງໝົດ
ທຸກລະດັບການສຶກສາວິຊາສະເພາະຊັ້ນສູງ ແລະ ຊັ້ນກາງ ,
๔๐ % ໃນຈຳນວນພະນັກງານດ້ານວິທະຍາສາດ, ๗๒ %ໃນ
ຈຳນວນນາຍໝໍ, ๗๐ % ໃນຈຳນວນນາຍຄູ ໂຮງຮຽນ ສາ
ມັນສຶກສາ. ແມ່ຍິງມີຈຳນວນໜ້ອຍກ່ວາໝູ່ໝົດນັ້ນແມ່ນຢູ່ຂະ
ແໜງອຸດສາຫະກຳ, ເພາະວ່າຢູ່ທີ່ນັ້ນເພິ່ນໃຊ້ແຮງງານໜັກ
ທີ່ເຮັດດ້ວຍກຳລັງກາຍເປັນສ່ວນໃຫຍ່. ສ່ວນບ່ອນທີ່ ແມ່ຍິງ
ເຮັດວຽກຫລາຍກ່ວາໝູ່ໝົດນັ້ນ ແມ່ນຢູ່ຕາມປະເພດ ໜ້າ
ວຽກຕ່າງໆທີ່ສອດຄ່ອງເໝາະສົມກັບກຳລັງແຮງຂອງພວກແມ່
ຍິງເອງ. ມີແມ່ຍິງຈຳນວນຫລາຍໆຄົນໄດ້ກາຍເປັນນັກປາດ,
ນັກສະແດງ, ນັກເຄື່ອນໄຫວວຽກງານຂອງພັກ ແລະ ຂອງ
ລັດທີ່ມຸ່ງສ້າງໂດ່ງດັງ.

ພ້ອມດຽວກັນນີ້ ຢູ່ໃນໂລກທີ່ບໍ່ແມ່ນສັງຄົມນິຍົມນັ້ນມີແມ່ຍິງ
ຫລາຍກ່ວາຕົ້ນບໍ່ຮູ້ໜັ້ງສືຢ່າງສົມເຊີ່ງ ຢູ່ທີ່ປະເທດຝະລັ່ງ,
ແລະ ສະຫະພັນເຢຍລະມັນມີແມ່ຍິງ ๓๗ % ເທົ່ານັ້ນທີ່ ລະ
ດັບການສຶກສາດ້ານວິຊາສະເພາະ, ຢູ່ທີ່ປະເທດ ໂຮມລັງ ๘๕

ແບນອຸກ ๔๐, ອິຕາລີ ๑๔ %. ສ່ວນຫລວງຫລາຍແລ້ວພວກ
ແມ່ຍິງໄດ້ເຮັດວຽກປະຈຳຫ້ອງການ, ຢູ່ໃນອົງເຂດວຽກງານ
ບໍລິການມວນຊົນ, ສ່ວນຢູ່ຕາມໂຮງຈັກໂຮງງານນັ້ນ ພວກຂະ
ເຈົ້າໄດ້ເຮັດວຽກທີ່ມີລະດັບວິຊາສະເພາະປານກາງ ໃນການ
ເລືອກເຟັ້ນຊົ່ນສ່ວນວັດຖຸສຳເລັດຮູບ. ໃນຈຳນວນບັນດານັກວິ
ສະວະກອນນັ້ນ ມີແມ່ຍິງປະກອບຢູ່ນຳ ๔,๗% ທີ່ປະເທດ ໂອ
ຕຣິສ, ອັງກິດ ๑,๖, ແຄນນາມ ๔,๓, ການາດາ ๖,๕,
ຝະລັ່ງ ๓,๗, ສະຫະພັນເຢຍລະມັນ ๖,๕, ສະຫະລັດອາ
ເມລິກາ ໜ້ອຍກວ່າ ๖ %. ພວກເຮົາເຫັນໄດ້ວ່າ, ໂດຍສົມ
ທຽບກັບບັນດາປະເທດທີ່ນິຍົມອຸ້ມໆແລ້ວ,ຢູ່ທີ່ ສສສຊ ເຫັນ
ໄດ້ມີບາດກ້າວອັນໃຫຍ່ຫລວງທີ່ສຸດໃນວຽກງານການ ລົບລ້າງ
ຄວາມບໍ່ສະເໝີພາບທາງດ້ານສັງຄົມລະຫວ່າງຜູ້ຊາຍ ແລະ
ແມ່ຍິງ ແລະ ໃນສູ່ນັ້ນ ເຫັນໄດ້ດຳເນີນນຳພາວຽກງານ ດ້ວ
ກ້າວໃຫ້ກ້າວໄປເຖິງບັ້ນສຳເລັດໃນທີ່ສຸດ.

ຜົນຈາກການປົດປ່ອຍຕົນເອງນັ້ນ ແມ່ຍິງໄດ້ເອົາຕົວໜຸດ
ພົ້ນອອກຈາກຫາດຮັບໃຊ້ປະຈຳເຮືອນ, ບໍ່ໄດ້ມີໜ້າທີ່ ເບິ່ງ
ແຍງພຽງແຕ່ລູກເຕົ້າ ແລະ ວຽກເຮືອນຄົວເຮົ່ານັ້ນ, ແມ່ຍິງ
ໄດ້ໃຊ້ຊ່ວງເວລາສ່ວນລວມ ກໍຄືສ່ວນຕົວໄດ້ຢ່າງສຸດໃຈແລ້ວ .
ລະບອບສັງຄົມນິຍົມເປັນຜູ້ມອບສິ່ງດ້ວ ກ້າວນີ້ເປັນຂອງຂວັນອັນ
ປະເສີດໃຫ້ແມ່ຍິງ.

ແຕ່ວ່າ ຄວາມສຸກແຕ່ລະຢ່າງນັ້ນ ພັດມີທັ້ງດ້ານ ສະຫ້ອມ
ຄືນຂອງມັນ. ເມື່ອແມ່ຍິງໄດ້ມີວຽກເຮັດງານທຳແລ້ວ ໃນ
ເວລາດຽວກັນ ພາລະໜຸກໜ່ຽງພາຍໃນບ້ານເຮືອນ ແມ່ຍິງ

ຕົກເປັນຂອງແມ່ຍິງຢູ່. ດ້ວຍເຫດນີ້ ນ້ຳທຳງານລວມ ຂອງແມ່ຍິງໃນມື້ໜຶ່ງໆ ຈຶ່ງຖືກແກ່ຍາວຫລາຍກວ່າ ພວກຜູ້ຊາຍເປັນຫລາຍໆເທົ່າ. ສະຫຼຸບໄດ້ວ່າແມ່ຍິງມີຄວາມອາດສາມາດໜ້ອຍກວ່າໃນການພັກຜ່ອນ, ເສີມຂະຫຍາຍລະດັບວັດທະນະທຳ, ຍົກລະດັບວິຊາສະເພາະ, (ແຕ່ເຖິງປານນັ້ນກໍຕາມ ສິ່ງໃດທີ່ໄດ້ລົງມືເຮັດແລ້ວ ສິ່ງນັ້ນແມ່ຍິງເຮັດໄດ້ຜົນແນ່ນອນ ຫລາຍກວ່າ).

ລະບອບສັງຄົມນິຍົມ ໄດ້ມີຄວາມພະຍາຍາມ ຊ່ວຍເຫລືອແມ່ຍິງໃຫ້ໄດ້ຫລຸດພົ້ນອອກຈາກຄວາມບໍ່ສະເໝີພາບເຊັ່ນນ້ຳ. ຢູ່ທ ສສສຊ ຈຳນວນໂຮງຮຽນອະນຸບານໄດ້ເພີ່ມສູງຂຶ້ນ ໃນແຕ່ລະປີ. ໃນປີ ໑ຜ໙໐ ຢູ່ຕາມໂຮງຮຽນອະນຸບານ ແລະເຮືອນລ້ຽງເດັກນັ້ນເພີ່ມໄດ້ເບ້ງແຍງລ້ຽງດູເດັກນ້ອຍເຖິງ ๔.๔๘๒ ພັນຄົນ, ຕົກມາໃນປີ ໑ຜ๗໓ ມີຮອດ ๑๔๔๗໓ ພັນຄົນ. ຕອນເຊົ້າຜູ້ເປັນແມ່ໄດ້ນຳເອົາລູກນ້ອຍໄປຝາກໄວ້ຢູ່ໂຮງຮຽນອະນຸບານ ຫລືເຮືອນລ້ຽງເດັກແລ້ວຈຶ່ງໄປເຮັດວຽກ, ຕົກມາຮອດຕອນແລງ ພາຍຫລັງເລີກຈາກວຽກງານມາກໍໄປແວ່ເອົາເດັກກັບຄືນບ້ານ. ຢູ່ໃນທີ່ນີ້ ຄອບຄົວໄດ້ມີການໃຊ້ຈ່າຍໜ້ອຍທີ່ສຸດໃນການປະກອບສ່ວນຄ້ຳຈູນພວກເດັກນ້ອຍທີ່ຝາກໄວ້ ຢູ່ຕາມໂຮງຮຽນອະນຸບານ ຫລືເຮືອນລ້ຽງເດັກ. ໃນຕະຫລອດຊຸມປີຫລັງໆມານີ້ ເນື່ອງຈາກວ່າອັດຕາຄ່າແຮງງານຂອງບັນດາພະນັກງານທີ່ເຮັດວຽກຢູ່ຕາມສະຖານທີ່ເດັກນ້ອຍກ່ອນອາຍຸ ເຂົ້າຮຽນແຫ່ງຕ່າງໆໄດ້ເພີ່ມສູງຂຶ້ນ, ອາຫານການກິນ ຂອງພວກເດັກນ້ອຍໄດ້ຮັບການປັບປຸງດີຂຶ້ນ ແລະ ອື່ນໆນັ້ນ ມູນຄ່າ ໃນ

ການຄ້ຳປະກັນສັງຄົມພວກເດັກນ້ອຍຢູ່ຕາມໂຮງຮຽນ ອະນຸບານໄດ້ເພີ່ມສູງຂຶ້ນແຕ່ ๔๕๐ ເຖິງ ๕๐๐ ຮຸບຕໍ່ປີ, ສ່ວນ ຢູ່ຕາມເຮືອນລ້ຽງເດັກນັ້ນແມ່ນໄດ້ເພີ່ມຈາກ ๕๐๐ ເຖິງ ๕๓๐ ຮຸບ. ແຕ່ວ່າໃນເວລາດຽວກັນ ການໃຊ້ຈ່າຍຂອງຜູ້ເປັນພໍ່ແມ່ ຕໍ່ການຝາກເດັກນ້ອຍນັ້ນແມ່ນບໍ່ໄດ້ເພີ່ມຂຶ້ນແຕ່ຢ່າງໃດເລີຍ . ຍ້ອນວ່າລັດເປັນຜູ້ຮັບພາລະແບກຫາບເອົາເອງເຖິງ ๙๐ % ຂອງຈຳນວນມູນຄ່າທັງຫມົດໃນການຄ້ຳປະກັນສັງຄົມ ພວກ ເດັກນ້ອຍທີ່ຝາກຢູ່ຕາມໂຮງຮຽນອະນຸບານ ແລະ ເຮືອນລ້ຽງ ເດັກ. ໂຮງຮຽນອະນຸບານ ແລະ ເຮືອນລ້ຽງເດັກ ຍັງໄດ້ ຊ່ວຍໃຫ້ພວກເດັກນ້ອຍມີສຸຂະພາບແຂງແຮງ (ເພາະວ່າ ຢູ່ທີ່ ນັ້ນ ເພີ່ນໄດ້ຈັດຕັ້ງການເບິ່ງແຍງກວດກາສຸຂະພາບຢູ່ເປັນປະ ຈຳ) ແລະ ຊ່ວຍໃຫ້ພວກຂະເຈົ້າໄດ້ຮັບການເສີມຂະຫຍາຍ ຮອບດ້ານນຳອີກ. ໃນພາກຕົວຈິງແລ້ວ ກໍເຫັນວ່າພວກ ເດັກ ນ້ອຍທີ່ເຕີບໃຫຍ່ຢູ່ໂຮງຮຽນອະນຸບານ ແລະ ຕໍ່ມາໄດ້ເຂົ້າຮຳ ຮຽນຢູ່ໂຮງຮຽນນັ້ນ ແມ່ນຮຽນໄດ້ດີກວ່າພວກ ທີ່ໄດ້ອົບຮົມສັ່ງ ສອນຢູ່ພາຍໃນບ້ານເປັນຫລາຍໆເທົ່າ. ສະຫລຸບໄດ້ວ່າບັນດາ ສະຖານທີ່ເດັກກ່ອນອາຍຸເຂົ້າຮຽນຕ່າງໆນັ້ນ ມັນບໍ່ພຽງແຕ່ຈະ ແບ່ງເບົາວຽກງານຂອງແມ່ບ້ານເທົ່ານັ້ນ ແຕ່ຍັງຫາກສົ່ງເສີມ ຂະຫຍາຍຄວາມສາມາດຂອງພວກເດັກນ້ອຍອີກດ້ວຍ.

ໃນສຶກສຶກສາ ປີ ๑๙๙๐/๙๑ ຢູ່ທີ່ ສສສຊ ມີເດັກ ນັກຮຽນ ๙๐๐ ພັນຄົນທີ່ຮຽນຢູ່ໂຮງຮຽນແບບຕະຫລອດຫມົດມື້ ນັ້ນ, ຕົກມາຮອດສຶກສຶກສາປີ ๑๙๙๓ ๙๔ ແມ່ນມີຮອດ๑๘,๔ ລ້ານຄົນແລ້ວ. ຢູ່ໃນໂຮງຮຽນເຫລົ່ານັ້ນ ພວກເດັກນ້ອຍ ທີ່ມີ

ອາຍຸນ້ອຍນັ້ນ ພາຍຫລັງເລີກຮຽນແລ້ວ ກໍພາກັນພັກຜ່ອນ, ຫຼິ້ນ ເຄື່ອງຫລິ້ນ, ກິນເຂົ້າທ່ຽງ, ເຮັດບົດຮຽນປະຈຳບ້ານ ແລະ ຜູ້ເປັນພໍ່ແມ່ກໍບໍ່ໄດ້ກັງວົນເປັນຫ່ວງໃຍນຳພວກຂະເຈົ້າອີກເລີຍ.

ນອກຈາກນີ້ ຕາຫມ່າງຮ້ານອາຫານກໍໄດ້ຖືກ ເສີມຂະ ຫຍາຍອອກຢ່າງຫລວງຫລາຍທີ່ສຸດ. ໃນປີ ໑໙໗໐ ຢູ່ຕາມ ຮ້ານອາຫານຕ່າງໆນັ້ນ ໄດ້ມີບ່ອນນັ່ງ ຈຳນວນ ໑໐ລ້ານບ່ອນ, ຕິກມາໃນປີ ໑໙໗໓ ມີຮອດ ໑໙,໔ ລ້ານບ່ອນແລ້ວ. ສ່ວນ ການນຳ ໄດ້ອຳນວຍເວີ້ນໄຂສະດວກໃຫ້ແກ່ແມ່ຍິງບ້ານ ມີ ຄວາມຈຳເປັນໄດ້ແຕ່ງອາຫານທ່ຽງຢູ່ບ້ານໃນແຕ່ລະມື້ອກ. ພ້ອມດຽວກັນນີ້ ຕາຫມ່າງຮ້ານຄ້າ "ອາຫານປຸງແຕ່ງ" ກໍໄດ້ ຖືກເສີມຂະຫຍາຍອອກຊຸ້ມດຽວກັນ ຊຶ່ງເປັນບ່ອນຂາຍ ອາ ຫານເຄື່ອງສຳເລັດຮູບພ້ອມໆຊະນິດ ແລະຖ້ານຳມັນໄປປຸງແຕ່ງຕໍ່ ກໍຈະໃຊ້ເວລາພຽງແຕ່ເລັກນ້ອຍເທົ່ານັ້ນ. ຕາຫມ່າງການບໍລິ ການມວນຊົນກໍໄດ້ຮັບການເສີມຂະຫຍາຍເປັນຢ່າງດີ. ໃນປີ ໑໙໗໐ ຢູ່ພາຍໃນປະເທດມີໂຮງຊັກເຄື່ອງ ໓,໕ ພັນແຫ່ງ, ມາຮອດປີ ໑໙໗໓ ມີເຖິງ ๕,໑ ພັນແຫ່ງແລ້ວ. ຕູ້ເຢັນ, ຈັກ ດູດຝຸ່ນ, ຈັກຊັກເຄື່ອງ ແລະ ເຄື່ອງຈັກໃຊ້ສຳລັບເຮືອນ ຄົວ ປະເພດຕ່າງໆ ກໍໄດ້ຖືກຜະລິດ ນັບມື້ນັບຫລາຍຂຶ້ນ ຊຶ່ງລ້ວນ ແຕ່ເປັນສິ່ງທີ່ຊ່ວຍຫລຸດຜ່ອນເວລາ ເຮັດວຽກບ້ານການເຮືອນ ຂອງພວກແມ່ຍິງເປັນຢ່າງດີ.

ເພິ່ນໄດ້ເຮັດຫລາຍສິ່ງຫລາຍຢ່າງເພື່ອປັບປຸງເວີ້ນ ໄຂ ການດຳລົງຊີວິດປະຈຳວັນ. ແຕ່ເຖິງຢ່າງໃດກໍດີ ມາຮອດສູ່ມື້ ນີ້ ພວກເຮົາຍັງບໍ່ທັນບັນລຸໄດ້ເຖິງຄວາມສະເໝີພາບ ຕົວຈິງ

ຢ່າງສົມບູນ ລະຫວ່າງຜູ້ຊາຍ ແລະ ແມ່ຍິງເທື່ອ. ແນ່ນອນທີ່ສຸດ ຄວາມສະເໝີພາບດັ່ງກ່າວບໍ່ຮອມກຳນົດໄວ້ວ່າ ແມ່ຍິງ ຈະຕ້ອງເປັນເໝືອນຜູ້ຊາຍໃນທຸກໆດ້ານ ແລະ ແມ່ຍິງ ຈະຕ້ອງເຮັດວຽກງານຕ່າງໆປະເພດດຽວກັນເໝືອນດັ່ງ ພວກຜູ້ຊາຍ. ຍາມໃດແມ່ຍິງກໍຈະຕ້ອງເປັນແມ່ຍິງຢູ່ສະເໝີໄປ ນັ້ນເອງ. ແມ່ຍິງມີພາລະໜ້າທີ່ອັນສຳຄັນຍິ່ງຄື ເກີດ ແລະ ບົວລະບັດເບິ່ງແຍງລູກເຕົ້າ (ເຖິງແນ່ນອ ແມ່ຍິງ ຈະມີວຽກເຮັດງານທຳ ເທົ່າທຽມກັບຜູ້ຊາຍກໍຕາມ) ສິ່ງດັ່ງກ່າວນັ້ນ ຈະຕິດພັນເກາະຫ້ອຍກັບທຸກໆການກະທຳຂອງແມ່ຍິງ ໃນຕະຫລອດຊົ່ວຊີວິດຂອງເຂົາ. ພວກເຮົາ ບໍ່ຕ້ອງການລົບລ້າງຄວາມແຕກຕ່າງກັນທັງໝົດທີ່ລະຫວ່າງເພດຕ່າງກັນນັ້ນ ແຕ່ຢ່າງໃດເລີຍ. ພວກເຮົາຕ້ອງການພຽງແຕ່ຢາກນຳເອົາ ແມ່ຍິງໄປຢູ່ໃນເງື່ອນໄຂດຳລົງຊີວິດໜ້າກຽດຂອງເຂົາ, ສ້າງເງື່ອນໄຂຄວາມສະດວກໃຫ້ເຂົາໄດ້ມີທັງການເຮັດວຽກ, ທັງການພັກຜ່ອນ, ທັງເບິ່ງແຍງອົບຮົມບົ່ມສອນລູກເຕົ້າ,ທັງການນຳພາວຽກບ້ານການເຮືອນ, ທັງເສີມຂະຫຍາຍທາງດ້ານວັດທະນະທຳເທົ່ານັ້ນເອງ.

× ×

ເພື່ອນັກອ່ານທີ່ຮັກແພງ, ພວກເຮົາໄດ້ຮ່ວມກັບ ທ່ານພ້ອມກັນພິຈາລະນາໄຈ້ແຍກລະອຽດເບິ່ງວ່າ ການລົບ ລ້າງຮອງຮອຍຄວາມແຕກຕ່າງກັນທາງດ້ານສັງຄົມຢູ່ໃນເງື່ອນ ໄຂ ຂອງລະບອບສັງຄົມນິຍົມນັ້ນໄດ້ປະຕິບັດດຳເນີນກັນໄປ ຄືແນວ

ໃດແລ້ວ. ທຸກໆຄົນຈະຄ່ອຍໆສະເໝີພາບເທົ່າທຽມກັນ ຢູ່ໃນ
ສະພາບທີ່ຕ່ຽງຂອງຕົນເປັນເທື່ອລະກ້າວໆໄປ, ແຕ່ວ່າຕ້ອງອີງ
ໃສ່ຜົນສຳເລັດອັນສູງສົ່ງທີ່ມີຢູ່ໃນສັງຄົມເທົ່ານັ້ນ. ເຊັ່ນວ່າ ,
ການຂະຫຍັບຕົວເຂົ້າຫາກັນຂອງລະດັບລາຍໄດ້ນັ້ນ ຈະເກີດມີ
ຂຶ້ນໄດ້ແມ່ນດ້ວຍວິທີການຫລຸດລາຍໄດ້ຂອງພວກທີ່ມີອັດຕາຄ່າ
ແຮງງານສູງ ແຕ່ຫາກດ້ວຍວິທີການຍົກລະດັບລາຍໄດ້ຂອງບັນ
ດາພະນັກງານກຳມະກອນ ທີ່ມີອັດຕາຄ່າແຮງງານຕ່ຳພຸ້ນຕ່າງ
ຫາກ. ການຫັນປ່ຽນຮູບລັກສະນະຂອງແຮງງານຈະເກີດມີຂຶ້ນ
ໄດ້ດ້ວຍວິທີການຍົກຮູບລັກສະນະຂອງແຮງງານຂອງບັນດາກຳ
ມະກອນຂຶ້ນເຖິງລະດັບຂອງບັນດາປັນຍາຊົນ, ສ່ວນການເທົ່າ
ທຽມກັນທາງດ້ານລະດັບວັດທະນະທຳ-ເຕັກນິກຂອງກຸ່ມສັງຄົມ
ຕ່າງໆນັ້ນ ແມ່ນດ້ວຍວິທີການຍົກລະດັບວັດທະນະທຳ-ເຕັກນິກ
ຂອງພວກກຳມະກອນ ແລະ ຂອງພວກສະຫະກອນກະເສດ
ລວມໝູ່ໃຫ້ສູງຂຶ້ນ ເຖິງລະດັບປັນຍາຊົນ. ບໍ່ແມ່ນຕ້ອງເມື່ອງທີ
ຈະຖອຍຄົນຫລັງໄປຫາເງື່ອນໄຂການດຳລົງຄົງຕົວແບບຊົນນະ
ບົດ ແຕ່ຫາກແມ່ນຊົນນະບົດທີ່ຈະຕ້ອງປ່ຽນຕົວໄປຫາລະດັບຂອງ
ຕົວເມືອງ ທາງດ້ານເງື່ອນໄຂດຳລົງຊີວິດຕ່າງໆ ທັງໝົດ.
ໝາກຜົນທີ່ຍາດມາໄດ້ທາງດ້ານຄວາມສະເໝີພາບນັ້ນ ຈະ
ກາຍເປັນຜົນດີໃຫ້ແກ່ສັງຄົມກໍ່ຕໍ່ເມື່ອວ່າ ບັນຫາບໍ່ນຳໄປສູ່ການ
ຫລຸດຕ່ຳລະດັບລວມຂອງການເຕີບໃຫຍ່ຂະຫຍາຍຕົວ ຂອງປະ
ເທດຊາດເທົ່ານັ້ນ. ການລົບລ້າງຄວາມບໍ່ສະເໝີພາບ ທາງ
ດ້ານສັງຄົມຈະຕ້ອງອຸກຍູ້ສັງຄົມໃຫ້ກ້າວໄປຂ້າງໜ້າເລື່ອຍໆ.
ແຕ່ຖ້າວ່າມັນຫາກອີງໃສ່ການເຄື່ອນຕົວຂອງສັງຄົມ ແບບຖອຍ

ຫລັງແລ້ວ ແລະ ເມື່ອນັ້ນມັນຈະກາຍເປັນພຽງແຕ່ການຕິລອດ ກວດພຽງກັນແບບເປົ່າດາຍເທົ່ານັ້ນ ຊຶ່ງບໍ່ມີໃຜທີ່ຈະຕ້ອງການ ມັນເລີຍ.

ຢູ່ທີ່ປະເທດຈີນ ສະໄໝ ມາວເຊຖຸງ ນັ້ນ ເຂົາເອງ ກໍມີຄວາມພະຍາຍາມວ່າຈະທຳການລົບລ້າງຮອງຮອຍ ຄວາມ ແຕກຕ່າງກັນໃຫ້ໄດ້ໄວພາຍໃນບໍ່ເທົ່າໃດປີທີ່ມີລະຫວ່າງ ຕົວ ເມືອງ ແລະ ຊົນນະບົດ, ລະຫວ່າງແຮງງານທີ່ເຮັດດ້ວຍມັນ ສະໝອງ ແລະ ດ້ວຍກຳລັງກາຍ. ດ້ວຍວິທີການໃດ ?ແມ່ນ ດ້ວຍວິທີການທັນເອົາບັນດາຄົນພາຍໃນເມືອງໜຸ່ງຄົນ ລົງໄປ ສູ່ການເຮັດວຽກງານການກະສິກຳ, ບັນດານັກປັນຍາຊົນໜຸ່ງ ຄົນ ລົງໄປສູ່ການຖືຊ້ອນຫລັກເຮັດວຽກທາງດ້ານ ກຳລັງ ກາຍ, ໝາຍຄວາມວ່າ ດ້ວຍວິທີການຫລຸດຕຳລະດັບຂອງຕົວ ເມືອງລົງໃຫ້ຮອດລະດັບຂອງຊົນນະບົດ, ລະດັບຂອງນັກ ປັນ ຍາຊົນ ລົງໃຫ້ຮອດລະດັບຂອງກຳມະກອນ ແລະຂອງຊາວໄຮ່ ນາ. ຢູ່ໃນໄລຍະສະໄໝ "ການປະຕິວັດວັດທະນະທຳ"ທ່ຽງ ໃຫຍ່ທີ່ໜ້າເສົ້າໃຈນັ້ນ ແມ່ນມີການປາບປາມບັນດາຄົນ ທີ່ມີ ການສຶກສາໂດຍທົ່ວສົ້ນ, ຖືວ່າວັດທະນະທຳ ແລະ ການສຶກ ສາແມ່ນສິ່ງທີ່ບໍ່ຈຳເປັນ ແລະ ທັງມີຜົນຮ້າຍອີກນຳ. ໃນສູ່ມ ບັນດາຜູ້ນຳຈີນ ຈຳເປັນຕ້ອງປະຖົມບັນດາຄຳຂວັນຕ່າງໆເຫຼົ່ານັ້ນ ແລະ ທັງກ່າວປະນາມມັນພ້ອມ. ແຕ່ວ່າການປະຕິບັດບັນ ດາຄຳຂວັນຕ່າງໆທີ່ຜ່ານມາຂອງບັນດາຜູ້ນຳຈີນ ພາຍໃນ ໄລ ຍະບໍ່ພໍເທົ່າໃດປີຢູ່ປະເທດຈີນນັ້ນ ມັນໄດ້ສ້າງ ຜົນເສຍຫາຍ ຢ່າງໜັກໜ່ວງໃຫ້ແກ່ການຂະຫຍາຍຕົວທາງດ້ານເສດຖະກິດ

ກໍ່ຄືທາງດ້ານສັງຄົມຂອງປະເທດຊາດ ແລະ ຈົນເທົ່າທຸກວັນນີ້ ປະເທດຈົນ ກໍ່ຍັງບໍ່ທັນສາມາດຟື້ນຕົວພົ້ນຈາກໄພພິບັດດັ່ງກ່າວ ນັ້ນໄດ້ຢ່າງສົມບູນດີເທື່ອ.

ແນ່ນອນທີ່ສຸດ ບັນດາເປົ້າໝາຍຂອງສະໄໝແຫ່ງ "ການ ກະໂດດຂັ້ນຄັ້ງໃຫຍ່" ແລະ ແຫ່ງ "ການປະຕິວັດວັດທະນະ-ທຳ" ເຫລົ່ານັ້ນລ້ວນແຕ່ແມ່ນບັນດາຄຳຂວັນແບບທົ່ວໆໄປຂອງ ການຕີລວດກວດພຽງກົນແບບພວກນາຍທຶນນ້ອຍ. ເປັນ ຫຍັງ ຈຶ່ງເປັນເຊັ່ນນີ້, ລະດັບການສຶກສາຂອງບາງຄົນຈຶ່ງສູງ ກວ່າ ຂ້ອຍອີກ ? ສັງຄົມຕ້ອງການວິທະຍາສາດ, ການສຶກສາ, ຄຸນ ຄ່າທາງດ້ານວັດທະນະທຳຕ່າງໆ ເພື່ອຫຍັງກັນແທ້ ຖ້າຫາກ-ວ່າຂ້ອຍບໍ່ເຂົ້າໃຈຫຍັງໝົດໃນສິ່ງດັ່ງກ່າວນັ້ນ ?ເປັນຫຍັງຈຶ່ງ ອາດເປັນເຊັ່ນນີ້ໄດ້ທ່ວາບາງຄົນຕ້ອງໄດ້ຮັດອຽກງານທີ່ຫຍຸ້ງ ຍາກສັບສົນຫລາຍກວ່າຊາວໄຮ່ນາທີ່ກຳຈືກຂ້ວນນັ້ນເສຍອີກ ? ແລະ ສົມຄວນບໍ່ວ່າບາງຄົນຈະຕ້ອງໄດ້ຮັບອັດຕາຄ່າແຮງງານ ສູງກວ່າຊາວໄຮ່ນາຄົນນັ້ນ ?

ເຮັດການຕີລວດກວດພຽງ ໝົດທຸກໆຄົນ ແລະ ໝົດ ທຸກໆຢ່າງໃຫ້ກ້າວໜ້າສົມດູນກັນ, ບ້ວງລັບໃຫ້ນາຍແພດ ຜ່າຕັດ ໄປຂຸດດິນ, ສ່ວນນັກວິສະວະກອນກໍບ້ວງລັບໃຫ້ໄປຄຳນາດ້ວຍມື ນັ້ນ ເຫັນໄດ້ວ່ານັ້ນແມ່ນປັດຊະຍາແຫ່ງການຕີລວດກວດ ພຽງ ກັນແບບງ່າຍດາຍທີ່ສຸດເລີຍ. ການຕີລວດກວດພຽງໂດຍເອົາ ຕົວເລກລະດັບຕ່ຳສຸດເປັນພື້ນຖານນັ້ນ ແມ່ນພາຫະນະ ອັນແທ້ ຈິງທີ່ຈະນຳສັງຄົມກັບຄືນຫລັງ.

ຊາວນາຊຸດໃໝ່ວ່າການລຶບລ້າງທຸກໆຮອງຮອຍຂອງຄວາມ

ແຕກຕ່າງກັນທາງຊົນຊັ້ນສັງຄົມນັ້ນ ຈະຕ້ອງເລັ່ງໃສ່ແຕ່ພົນສຳ
ເລັດທີ່ສູງສຸດຂອງສັງຄົມນັ້ນເປັນພົນຖານ, ຈະຕ້ອງ ເຮັດໃຫ້
ປະເທດຊາດມີການສືບຕໍ່ຂະຫຍາຍຕົວໄປຂ້າງໜ້າຢູ່ສະເໝີ.

ภาคที่

การขัดจุดถึงความสะเหมิพาบต็อจิง ย่างสิ้มบูน ของวุขันดาอุ้มอาถ.

การลิขุ้ลาง ธอางธ้อยถอาุมแตกต่างกัน ละหว่างอ็วงเขถหอางถุ้มต่างๆถ้วยกัน

ก่อมสะไหมมะหาปะติวัถสังถ์มินิยมเถ็อมตุลา ปี ๑๗๑๗ นั้น ปะเหถลัถเขุยสะไหมพะเจ้าอุา ได้เป้น เหมิ่อมถั่งลุกลุมอ็วงของปะชาอาถ, อุ้มอาถ, อุ้ม เผ่า และ อุ้มเผ่านิ้อยนับเป้นธ้อยๆที่เข้าอยู่ในการ ลุ้มถอาง ของวัถลัถเขุยนั้น ไว้อยู่พายใต้แอกถอบถอางสอางอุ้อม ถ์ โถยพอกมายหิ้น "ของต็นเอง" และ พอกสักถิมา ก็ถ์ พอกก็ถ์ขูถธ์ถลัถเขุยนั้นเอง. มันแม่นแอกถอบถอางลัก สะมะอาถ, การเม็อง, เสถถะกิถก็ถ์สาถสะหมา อิก มำ. ถ์นลัถเขุย เป้นผู้ถอบถอง, ส่วมอุ้มอาถอื่นๆเป้น ผู้ถิกหยฐถหยามหมื่นปะหมาถ. การเอ๋อถิ สาถสะหมา เป้นหางการของวันดาทะสัถลัถเขุยนั้น แม่น สาถสะ หมาถธ์ถสะตฐม, ส่วมสาสะหมาอื่นๆแม่นยู่ ในสะพาบ สำธองเท่านั้น. ถำว่าสะพาบสำธองนี้ แม่นถำเว้าหับ เหมาะสิ้มกับสะพาบต็อจิงพ่างใด. ต็อย่าง, ยู่แขอว การอาม อ็วงปะชาอุ้มส่วมหลองหลายแม่นเป้นอาวตาตา

ທັນັບຖືສາດສະໜາອິດສະລາມນັ້ນ ເພິ່ນໄດ້ໃຊ້ນະໂຍບາຍບັງ
ຄັບໃຫ້ຊາວຕາຕາເຫລົ່ານັ້ນນັບຖືສາດສະໜາຄຣິດສະຕຽນ .
ບັນດາຊາວມູຊະລິມບໍ່ມີສິດທີ່ຈະຕັ້ງພູມລຳເນົາໃກ້ຕໍ່ເມືອງກາ
ຊາມກວ່າ ๕๐ ກິໂລແມັດ. ຊາວຕາຕາ ເປັນຈຳນວນຫລວງ
ຫລາຍໄດ້ຈຳໃຈເຂົ້າເປັນຄຣິດສາສນິກຊຸມ ເພື່ອວ່າຕົນຈະ ບໍ່
ໄດ້ຖືກຂັບໄລ່ຍ້າຍອອກໄປຢູ່ບ່ອນອື່ນ ສ່ວນຢູ່ຕາມເມືອງອື່ນ
ອື່ນຂອງແຂວງດົ່ງກ່າວນີ້ ຊາວຕາຕາ ຄຣິດສາສນິກຊຸມ ໄດ້
ຮັບນະໂຍບາຍພິເສດຫລາຍໆຢ່າງ. ຂໍເວົ້າຕື່ມອີກວ່າ ຜູ້ທີ່ໄດ້
ຮັບການບີບບັງຄັບຂົ່ມເຫັງຢ່າງໜັກໜ່ວງນັ້ນ ຮ້ງນີ້ພວກ ນິ
ກາຍທີ່ເອົາຕົວແຍກອອກຈາກສາດສະໜາຄຣິດສະຕຽນ ແຫ່ງ
ພາກຕາເວັນອອກ. ຜູ້ທີ່ທຳການສວດມົນຢູ່ວັດ ມູຊະລິມ, ຢູ່ວັດ
ດາສາມ [1] ກໍຄືຢູ່ໃນວັດຊາວຢິວນັ້ນ ແມ່ນບໍ່ມີສິດສະເໜີພາບ
ເໝືອນດັ່ງຊາວຄຣິດສາສນິກຊຸມແຕ່ຢ່າງໃດເລີຍ. ອຸດສາຫະ
ກຳໄດ້ຮັບການຂະຫຍາຍຕົວຢູ່ພຽງແຕ່ໃນດິນແດນຕ່າງໆທີ່ຊາວ
ລັດເຊຍອາໄສຢູ່ເທົ່ານັ້ນ. ສ່ວນຢູ່ຕາມຂົງເຂດຕ່າງໆ ທີ່ຊຸມ
ຊາດອື່ນໆອາໄສຢູ່ນັ້ນ ເພິ່ນກໍພຽງແຕ່ຂຸດຄົ້ນນ້ຳມັນຢູ່ເມືອງບາ
ກູ ແລະ ກໍຂຸດຄົ້ນຖ່ານຫີນຢູ່ບໍ່ຖ່ານຫີນຂອງແຂວງໂດເມດເທົ່ານັ້ນເອງ.

ດິນແດນອັນກ້ວາງໃຫຍ່ໄພສານທີ່ເປັນບ່ອນຢູ່ອາໄສ ຂອງ
ບັນດາຊຸມຊາດຕ່າງໆທີ່ບໍ່ແມ່ນຊຸມຊາດລັດເຊຍນັ້ນໄດ້ກາຍເປັນ
ດິນແດນທີ່ທຸກຍາກຫລ້າຫລັງທີ່ສຸດ. ບັນດາຊຸມຊາດເປັນ ຈຳ

---

๑) ດາສາມ-ແມ່ນວັດຂອງຜູ້ເຊື່ອຖືສາດສະໜາພະລາມະ : ເຊັ່ນຊາວການມິກ,ຊາວບູຮຽດແລະອື່ນໆ.(ຜູ້ຮຽບຮຽງ)

ນອນຫລວງຫລາຍບໍ່ມີພາສາຂຽນ, ໂຮງຮຽນ, ວັນນະຄະດີ, ປັນຍາຊົນ, ຊົນຊັ້ນກຳມະກອນເປັນຂອງຕົນເອງເລີຍ. ຊົນເຜົ່າຈຳນວນໜຶ່ງຍັງມີຊີວິດການເປັນຢູ່ເໝືອນກັບສະໄໝລະບອບເຜົ່າພັນປະຖົມບູຮານພົ້ນເສຍອີກ. ອີງຕາມ ການຂະຫຍາຍຕົວຂອງຕົນໂດຍທົ່ວໝົດແລ້ວເຫັນວ່າປະເທດ ລັດເຊຍ ຕ້ອງໃຊ້ເວລາອີກຮ້ອຍປີເພື່ອແລ່ນທັນປະເທດເອີລົບອື່ນໆສ່ວນ ຢູ່ພາຍໃນປະເທດແລ້ວ ມີຊົນຊາດຕ່າງໆທີ່ໄດ້ມີ ຄວາມຫລ້າ ຫລັງຈາກຊົນຊາດລັດເຊຍເຖິງ ๘๐๐-๙๐๐ ປີ.

ຍິ່ງຮ້າຍໄປກວ່ານັ້ ລັດຖະບານພະເຈົ້າຊາຍັງໄດ້ທຳລາຍ ຄວາມຖືກຕ້ອງປອງດອງຊາດ, ສ້າງຄວາມແຕກແຍກອາຄາດ ໝາດໝາງກັນຍິ່ງ ລະຫວ່າງຊົນຊາດໜຶ່ງ ກັບອີກຊົນຊາດ ໜຶ່ງ. ສະເພາະຢ່າງຍິ່ງສິ່ງດ່ວນກ່ວານັ້ ໄດ້ຖືກປະຕິບັດກັນໃນ ສະໄໝທີ່ຂະບວນການປະຕິວັດໄດ້ມີການລຸກຮືຂຶ້ນ ແລະ ໃນ ເມື່ອໄພອັນຕະລາຍໄດ້ມາບຸກຄຸກຳນາດການປົກຄອງຂອງ ພະ ເຈົ້າຊາເອງ. ເພື່ອເອົາຕົວໜຸດລອດອອກຈາກຄວາມ ໂກດ ແຄ້ນຂອງບັນດາຊາວຜູ້ອອກແຮງງານນັ້ນໃນໄລຍະ ການປະຕິ ວັດລັດເຊຍເທື່ອທຳອິດປີ ๑๙๐๕ ລັດຖະບານພະເຈົ້າຊາໄດ້ກໍ່ ສະພາບການຂ້າລ້າງຜານກັນຍິ່ນລະຫວ່າງຊາວອາກເມນີແລະ ອາແຊັກໃບຊາມ (ໂດຍສ່ວຍໃຊ້ສະພາບທີ່ວ່າ ຊາວອາກເມນີ ເປັນຄຣິດສາສນິກຊົນ, ສ່ວນຊາວອາແຊັກໃບຊາມ ແມ່ນເປັນ ຊາວມູສລິມ) ແລະ ສ້າງຕັ້ງກອງໂຈລະກຳຊາວຢິວຕ່າງ ๆ ແລະ ອື່ນໆອີນເປັນຕົ້ນ. ເຂົ້າໄດ້ສ້າງຄວາມແຕກແຍກ ອາ ຄາດບາດໝາງກັນຍິ່ນລະຫວ່າງຊົນຊາດຕ່າງໆກໍເພື່ອເຮັດໃຫ້

ພວກຂະເຈົ້າຫັນໜ້າໜີຈາກການຕໍ່ສູ້ປະຕິວັດນັ້ນເອງ.

ມະຫາປະຕິວັດເດືອນຕຸລາ ປີ ໑໙໑໗ ໄດ້ໂໝງບາດລ້ອມຕັດສິນໃສ່ສະພາບການດັ່ງກ່າວນີ້ຢ່າງໜັກໜ່ວງ. ໜຶ່ງ ໃນຈຳນວນກົດບັນຍັດສະບັບທຳອິດທີ່ເພິ່ນໄດ້ຮັບຮອງເອົານັ້ນແມ່ນ "ຖະແຫລງການ ກຳນົດບັນດາສິດທິຂອງຊົນຊາດຕ່າງໆແຫ່ງປະເທດລັດເຊຍ"ຊຶ່ງປະກາດໃຫ້ຊົນຊາດ ແລະ ຊົນເຜົ່າ ທັງໝົດມີສິດເທົ່າທຽມກັນ, ໄດ້ມອບສິດໃຫ້ພວກຂະເຈົ້າທຸກໆຄົນກຳນົດເສັ້ນທາງເດີນຂອງຕົນດ້ວຍຕົນເອງຈົນເຖິງຂອນອາສາມາດອອກຈາກວົງສາຄະນາຍາດລັດເຊຍ ແລະສ້າງຕັ້ງລັດເອກະລາດຂອງໃຜລາວຂຶ້ນໄດ້. ເວົ້າຕາມສະພາບເປັນຈິງ ແລ້ວເຫັນວ່າຢູ່ໃນການກະທຳດັ່ງກ່າວນີ້ ແມ່ນຍັງບໍ່ທັນມີ ລັກສະນະສັງຄົມນິຍົມຫຍັງເລີຍ, ແຕ່ຈະຍັງຕ້ອງເຮັດໄດ້ເຮັດວ່າສິ່ງດັ່ງກ່າວນີ້ ມັນຄວນຈະແມ່ນການປະຕິວັດປະຊາທິປະໄຕ ນາຍທຶນເປັນຜູ້ກະທຳຕໍ່ອຳ. ແຕ່ຍອມວ່າ ການປະຕິວັດດັ່ງກ່າວນີ້ພັດບໍ່ສາມາດກະທຳສຳເລັດໄດ້ໃນສິ່ງດັ່ງກ່າວນີ້ເລີຍ, ສະນັ້ນຢູ່ທີ່ປະເທດລັດເຊຍ ການປະຕິວັດສັງຄົມນິຍົມຈຶ່ງໄດ້ຮັບພາລະແກ້ໄຂບັນຫາດັ່ງກ່າວນີ້.

ໃນໄລຍະເວລາທຳອິດສາທາລະນະລັດໂຊວຽດ ເອກະລາດຈຳນວນໜຶ່ງໄດ້ຖືກສ້າງຕັ້ງຂຶ້ນຄືສາທາລະນະລັດລັດເຊຍ, ອູກຣາອິນ, ເບໂລຣູດເຊຍ, ລັດແຖບຫລັງກາວະກາດ, ສ່ວນຢູ່ພາຍໃນສາທາລະນະລັດສະຫະພັນສັງຄົມນິຍົມໂຊວຽດລັດເຊຍນັ້ນ ກໍໄດ້ເກີດມີສາທາລະນະລັດປົກຄອງດ້ວຍຕົນເອງຂຶ້ນ ຈຳນວນໜຶ່ງ, ລັດທຳອິດໃນຈຳນວນສາທາລະນະລັດເຫລົ່ານັ້ນ

ແມ່ນສາທາລະນະລັດ ບາສກີຣ. ແຍກຕົວອອກຈາກ ປະເທດ ລັດເຊຍ ແລະ ພາກັນສ້າງຕັ້ງລັດເອກະລາດຂຶ້ນມີ ແຟງລັງ, ແອດສະໂຕນີ, ລັດວີ, ລິດວາ, ໂປໂລຍ ຊຶ່ງເປັນລັດທີ່ພວກ ນາຍທຶນກຳອຳນາດ. ເປັນເທື່ອທຳອິດໃນປະຫວັດສາດ ທີ່ ຫລາຍໆຊົນຊາດຂອງປະເທດລັດເຊຍໄດ້ມີລັດເປັນຂອງ ຕົນ ເອງ (ເຊັ່ນຊາວເບໂລຮູດເຊຍ, ບາສກີຣ, ຢູດມູຣ໌ຕ, ກາ ຊັກ, ຕວກເມນີ, ມາຣີ, ຈູວາຊ໌ ແລະ ອື່ນໆເປັນຕົ້ນ). ເປັນເທື່ອທຳອິດທີ່ພວກຂະເຈົ້າໄດ້ກາຍເປັນເຈົ້າການບັນ ຊາ ໜ້າທີ່ວຽກງານຂອງຕົນເອງ, ໄດ້ກາຍເປັນຜູ້ລຸມຄອງ ການ ຂະຫຍາຍຕົວທາງດ້ານເສດຖະກິດ ແລະ ວັດທະນະທຳ ຂອງ ຕົນເອງ.

ຖ້າວ່າອຳນາດໂຊວຽດຫາກຈຳກັດຮັດແຄບໃນການ ມອບ ສິດທິຢ່າງເທົ່າທຽມກັນໃຫ້ບັນດາຊົນຊາດທັງໝົດແລ້ວໃນເມື່ອ ນັ້ນອຳນາດໂຊວຽດກໍຄົງຈະຢຸດຈົ່ງຢູ່ບົນຄວາມສະເໝີ ພາບ ນາຍທຶນແບບຮູບການເທົ່ານັ້ນເອງ. ສ່ວນພວກໂບນເຊບິກ ກໍ ພາກັນເລີ່ມຕົ້ນຈາກຄວາມສະເໝີພາບແບບນີ້.

ຕ້ອງເຮັດແນວໃດໃຫ້ສະພາບຂອງບັນດາຊົນຊາດທັງໝົດ ມີຄວາມເທົ່າທຽມກັນໄດ້ໃນພາກປະຕິກຳຕົວຈິງ. ສ່ວນ ວິທີ ການທີ່ຈະນຳໄປປະຕິບັດນັ້ນ ແມ່ນພວກເຮົາໄດ້ກ່າວມາແລ້ວຢູ່ ໃນພາກທີ່ຜ່ານມາເຊັ່ນວ່າ: ດ້ວຍວິທີການຍົກລະດັບການເປັນ ຢູ່ຂອງບັນດາຊົນຊາດ ທີ່ຫຸກຍາກຫລ້າຫລັງນັ້ນຂຶ້ນເຖິງລະດັບ ຂອງບັນດາຊົນຊາດທີ່ມີການຂະຫຍາຍຕົວແລ້ວເປັນເທື່ອ ລະ ກ້າວໆໄປ. ເພິ່ນສາມາດເວົ້າໄດ້ໂດຍກົງວ່າ ປະຊາຊົນ ລັດ

ເຊຍ ຜູ້ຍິງໃຫຍ່ໄດ້ມີບົດບາດອັນໃຫຍ່ຫລວງຢູ່ໃນພາລະກິດດັ່ງ ກ່າວນີ້ ຊຶ່ງເປັນຜູ້ໃຫ້ການຊ່ວຍເຫລືອແກ່ບັນດາຊົນຊາດ, ຊົນ ເຜົ່າ ແລະ ເຜົ່າຊົນທີ່ທຸກຍາກຫລ້າຫລັງໂດຍທັ່ວໄປ.

ໃນປີ ໑໙໔໔ ບັນດາມິດຕະພາບກັນດ້ວຍຄວາມສະໝັກ ໃຈ ລະຫວ່າງລັດເຊຍ, ອູກຣາອິນ, ເບໂລຣູດເຊຍ ແລະສະຫະ ພັນໂກກາດ ນັ້ນເພິ່ນຈຶ່ງໄດ້ສ້າງຕັ້ງສະຫະພາບສາທາລະນະ-ລັດສັງຄົມນິຍົມໂຊວຽດຂຶ້ນ. ພຽງແຕ່ພາຍໃນໄລຍະຕະຫລອດ ໒໐ ປີ ແຫ່ງການສ້າງຕັ້ງ ສສສຊ ເທົ່ານັ້ນ ບໍລິມາດການຜະ ລິດທາງດ້ານອຸດສາຫະກຳກໍໄດ້ເພິ່ມສູງຂຶ້ນໃນຂອບເຂດທົ່ວປະ ເທດ ເຖິງ ๕໓ກ ເທື່ອ, ຢູ່ສະຫະພັນສາທາລະນະລັດສັງຄົມ ນິຍົມໂຊວຽດລັດເຊຍ ເຖິງ ๕໐໐, ອູກຣາອິນ, ເບໂລຣູດ-ເຊຍ ກ໓໐, ອູຊະເບກິສະຖານ ๔໓๔, ກາຊັກສະຖານ - ໙໓໒, ຊອກຊີ ໓໐๔, ອາແຊັກໃບຊານ ๑๔๔, ລິດວາ(ນັບ ຈາກປີ ๑໙๔໐ ເປັນຕົ້ນມາ ຊຶ່ງເປັນປີທີ່ລິດວາເຂົ້າເປັນ ລັດ ໜຶ່ງຂອງ ສສສຊ) ໒໓, ໂມນດາວີ ໙໒໙, ລັດວີ(ນັບແຕ່ ປີ ๑໙๔໐ ເປັນຕົ້ນມາ) ๔ກ,ກຽກກີຊ-ກ๑๔, ຕາດຊິກ ສະຖານ ๗໙๗, ອາກເມນີ ๑໐๔๗, ຕວກເມນີ ๔໐໙,ແອສ ໂຕນີ (ນັບແຕ່ປີ ๑໙๔໐ ເປັນຕົ້ນມາ) ๕๑ ເທື່ອ. ເມື່ອ ສັງເກດເບິ່ງບັນດາຕົວເລກເຫລົ່ານີ້ແລ້ວ ກໍເປັນໜ້າ ສົນໃຈ ເພາະວ່າ: ສາທາລະນະລັດໃດໃນອະດີດຍິ່ງມີຄວາມທຸກຍາກ ຫລ້າຫລັງຫລາຍເທົ່າໃດແລ້ວ ຈັ່ງຫວະກາມຂະຫຍາຍຕົວຂອງ ມັນທາງດ້ານອຸດສາຫະກຳຍິ່ງສູງຂຶ້ນເທົ່ານັ້ນ. ຢູ່ຕາມ ສາທາ ລະນະລັດຕ່າງໆ (ສະເພາະຢ່າງຍິ່ງແມ່ນຢູ່ຕາມບັນດາສາທາ

ລະນະລັດເຂດອາຊີກາງ) ອຸດສາຫະກຳເກືອບຖ້ວ ໄດ້ຖືກ
ສ້າງຕັ້ງຂຶ້ນຢູ່ໃນເຂດທ້ອງຖິ່ນເປົ່າຫວ່າງທັງນັ້ນ.

ໃນໄລຍະການສ້າງຕັ້ງສະຫະພາບໂຊວຽດຂຶ້ນມາໃໝ່ ໆ
ນັ້ນ, ໃນປີ ໑໙໔໔ ຢູ່ຕາມບາງສາທາລະນະລັດນັ້ນ (ກາຊັກ
ສະຖານ, ໂມນດາວີ, ກຽກກີເຊຍ, ຕາດຊິກິດສະຖານ ,
ຕວກເມນີ) ແມ່ນບໍ່ມີສະຖາບັນການສຶກສາກໍ່ຄືບໍ່ມີນັກສຶກ ສາ
ຈັກຄົນເລີຍ. ຕໍ່ມາໃນປີ ໑໙໕໔ ຢູ່ທົ່ວປະເທດ ໃນຈຳນວນ
ປະຊາຊົນ ໑໐ ພັນຄົນໃດມີນັກສຶກສາ ໑໙ ຄົນໂດຍ ຄິດໄລ່
ຂະໜາດປານກາງ ແລະ ຖ້າຄິດໄລ່ ຕາມສາທາລະນະລັດ
ຕ່າງໆແລ້ວ ຕົວເລກລະອຽດຈະມີດັ່ງນີ້: ສະຫະພັນ ສາທາ
ລະນະລັດສັງຄົມນິຍົມໂຊວຽດລັດເຊຍ ໔໑໙ ຄົນ (ແຕ່ຢູ່ໃນນີ້
ຕ້ອງຄຳນຶງວ່າ ຢູ່ຕາມມະຫາວິທະຍາໄລ ແລະສະຖາບັນການ
ສຶກສາຕ່າງໆຂອງສະຫະພັນລັດເຊຍນັ້ນ ມີນັນດານັກສຶກສາມາ
ຈາກສາທາລະນະລັດອື່ນໆທີ່ຮຽນປະປົນນຳເຂົ້າຈຳນວນຫລວງ
ຫລາຍທີ່ສຸດ), ອູກຣາອິນ ໑໗໙, ເບໂລຣຸດເຊຍ ໑໕໙ ,
ອຸຊະເບກິສະຖານ ໑໗໔, ກາຊັກສະຖານ ໑໗໙, ຊອກຊີ
໑໗໑, ອາແຊັກໃບຊານ ໑໗໔, ລິດວາ ໔໐໕, ໂມນດາວີ
໑໓໑, ລັດວີ ໑໕໔, ກຽກກີເຊຍ ໑໕໕, ຕາດຊິກິດສະ -
ຖານ ໑໓໕, ອາກເມນີ ໑໕໔, ຕວກເມນີ ໑໔໕, ແອສໂຕ
ນີ ໑໗໑ ຄົນ. ອີງຕາມອັດຕາສ່ວນຂອງນັນດານັກສຶກສາ ສົມ
ທຽບໃສ່ຈຳນວນພົນລະເມືອງຂອງ ອຸຊະເບກິສະຖານ ແລະ
ກາຊັກສະຖານທີ່ໃນອະດີດເປັນລັດທີ່ທຸກຍາກຫຼ້າຫຼັງນັ້ນສອງລັດ
ດັ່ງກ່າວນີ້ ໄດ້ໄລ່ທັນບາງປະເທດມາແຕ່ຄົນແລ້ວຊໍ້ນປະເທດ

ອັງກິດ, ອິຕາລີ, ກາມາດາ, ສະຫະພັນເຢຍລະມັນ, ຝະລັ່ງ ແລະ ຍີ່ປຸ່ນ. ຊາວອັງກິດ ຊຶ່ງເຄີຍໄດ້ຖືກໜ້ຳປະໜາດ"ຄົນອາຊີ" ທັງໜົດໃນຄວາມໂງ່ຈ້າງົ່ມງວາຍ ແລະ ຄວາມ ກົກໜັ່ງສີ່ຂອງພວກຂະເຈົ້ານັ້ນ ມາບັດນີ້ຕົນໄດ້ກາຍເປັນ ປະຊາຊົນທີ່ມີລະດັບການສຶກສາຕ່ຳກວ່າ "ຄົນອາຊີ" ໂຊວຽດ ເສຍ ແລ້ວ.

ລະດັບຊີວິດການເປັນຢູ່ຂອງປະຊາຊົນໃນບັນດາສາທາລະ ນະລັດ ສະຫະພາບທັງໜົດໄດ້ເພີ່ມທະວີສູງຂຶ້ນ ແລະ ມີສະ ພາບເທົ່າທຽມກັນຢ່າງວ່ອງໄວທີ່ສຸດ. ມາຮອດປີ ໑໙໓໑ ຢູ່ ພາຍໃນຂອບເຂດທົ່ວປະເທດ ການຈໍລະຈອນສິນຄ້າຂອງການ ຄ້າຂາຍຍ່ອຍຂອງລັດ ແລະ ຂອງລວມໝູ່ໄດ້ເພີ່ມສູງຂຶ້ນ ໘ຟ ເທື່ອ ໂດຍສົມທຽບໃສ່ປີ ໑໙໘໓, ທົ່ວຂອບເຂດສະຫະພັນສາ ທາລະນະລັດສັງຄົມນິຍົມໂຊວຽດລັດເຊຍ ໘໘, ອູກຣາອິນ໘໔ ເບໂລຣູດເຊຍ ໙ກ, ລຊູຊະເບກິສະຖານ ໕ກ, ກາຊັກສະ ຖານ ຟ໔, ຊອກຊີ ໙໕, ອາແຊັກໃບຊານ ໘ກ, ກຽກກິສະ ຖານ ຟ໘, ຕາດຊິກິດສະຖານ ກ໔, ອາກເມນີ ໓ກ, ຕວກ ເມນິດສະຖານ ໙໓; ສົມທຽບໃສ່ປີ ໑໙໔໐ ຢູ່ລິດວາ ໑໓ , ໂມນດາວີ ໘໕, ລັດວີ ໑໔, ແອດສະໂຕນີ ໑໙ ເທົ່າ.ພວກ ເຮົາເຫັນໄດ້ອີກເທື່ອໜຶ່ງວ່າ ລາຍໄດ້ຂອງປະຊາຊົນໄດ້ເພີ່ມ ສູງຂຶ້ນກ່ອນອື່ນໝົດແມ່ນຢູ່ຕາມບັນດາລັດໃດທີ່ຄາວເມື່ອກ່ອນ-ເຄີຍເປັນລັດທີ່ມີຄວາມທຸກຍາກຫລ້າຫລັງກວ່າໝູ່.

ໂຄງປະກອບທາງດ້ານສັງຄົມຂອງບັນດາສາທາລະນະລັດ ສະຫະພາບ ທັງໜົດໄດ້ມີການຫັນປ່ຽນໂດຍພື້ນຖານແລ້ວ. ຊົນ

ຊັ້ນກຳມະກອນ ແລະ ປັນຍາຊົນໄດ້ປະກົດເກີດຂຶ້ນຢູ່ບ່ອນທີ່ແຕ່ຄາວກ່ອນເພິ່ນບໍ່ເຄີຍໄດ້ຮູ້ໄດ້ເຫັນໃນສິ່ງດັ່ງກ່າວນີ້ມາກ່ອນນັ້ນເລີຍ. ຕາຕະລາງຕໍ່ໄປນີ້ຈະສະແດງໃຫ້ເຫັນລະອຽດ ໃນສິ່ງດັ່ງກ່າວ ໂດຍອີງຕາມບັນດາຕົວເລກ ຂອງການສຳຫລວດປະຊາກອນ.

ຕາຕະລາງ

ໂຄງປະກອບທາງດ້ານສັງຄົມຂອງປະຊາກອນແຂ່ງສາທາລະນະລັດສະຫະພາບຂອງ ສສສຊ (ຄິດໄລ່ເປັນເປີເຊັ້ນ)

ບັນດາສາທາລະນະລັດສະຫະພາບ	ບັນດາກຸ່ມສັງຄົມ	๑๙๓๙	๑๙๕๙	๑๙๗๐	๑๙๗๙
๑	๒	๓	๔	๕	๖
ສະຫະພັນລັດເຊຍ	ກຳມະກອນ	๓๖,๔	๕๖,๑	๖๒,๐	๖๓,๐
	ພະນັກງານ				
	ພະລາກອນ	๑๗,๒	๑๙,๕	๒๓,๖	๒๖,๙
	ຊາວໄຮ່ນາ	๔๓,๙	๒๔,๒	๑๔,๓	๑๐,๐
ອູກຣາອິນ	ກຳມະກອນ	๓๓,๗	๔๒,๖	๕๐,๔	๕๓,๒
	ພະນັກງານ				
	ພະລາກອນ	๑๖,๑	๑๕,๖	๑๙,๑	๒๒,๔
	ຊາວໄຮ່ນາ	๔๒,๗	๔๑,๔	๓๐,๓	๒๓,๐

ສິບຕໍ່ຕາຕະລາງ

๑	๔	๓	๔	๕	๖
๔ขโลธูด ๔ขย	ภำมะภอม	๔๔,๘	๓๖,๓	๕๔,๘	๕๕,๘
	พะมักงาม				
	พะลาภอม	๑๓,๖	๑๔,๕	๑๘,๘	๔๓,๔
	ขาวไธ่มา	๕ภ,๔	๔๘,๕	๔๘,๔	๔๑,๓
ธูขุะ๔ขกิ สะถาม	ภำมะภอม	๑๗,๗	๔๑,๐	๔๕,๘	๕๔,๗
	พะมักงาม				
	พะลาภอม	๑๔,๓	๑๖,๑	๑๗,๖	๔๔,๓
	ขาวไธ่มา	๖๔,๗	๔๔,๖	๓๔,๐	๔๔,ภ
ภาขักสะ ถาม	ภำมะภอม	๓๔,๘	๖๐,๑	๖๘,๘	๖๘,๐
	พะมักงาม				
	พะลาภอม	๑๖,๔	๑๗,๑	๔๔,๘	๔๕,๕
	ขาวไธ่มา	๔ภ,๕	๔๐,ภ	๘,๔	๖,๕
ขอภขี	ภำมะภอม	๔๐,๘	๓๓,๖	๔ภ,๔	๕๕,๖
	พะมักงาม				
	พะลาภอม	๑๕,๗	๔๔,๑	๔๕,๔	๔๖,๕
	ขาวไธ่มา	๕๔,ภ	๕๕,๐	๔๘,๐	๑ภ,๘
๑าแขักใบ ขาม	ภำมะภอม	๔๖,๓	๓๖,๗	๕๔,๕	๕๗,๖
	พะมักงาม				
	พะลาภอม	๑๕,๔	๔๐,๖	๔๔,๘	๔๓,๖
	ขาวไธ่มา	๕๕,๔	๕๔,๔	๔๕,๕	๑๖,ภ

๑	๔	๗	๔	๕	๖
ลิถวา	ภำมะภอม		๔๑,๕	๕๔,๕	๕๖,๙
	พะมัภวาม				
	พะลาภอม		๑๔,๗	๑๙,๛	๔๗,๑
	ฆาวไธมา		๔๗,๗	๔๖,๔	๔๐,๐
โมมถาวิ	ภำมะภอม		๔๔,๔	๗๖,ภ	๕๔,๖
	พะมัภวาม				
	พะลาภอม		๛,๙	๑๗,๕	๑ภ,๕
	ฆาวไธมา		๖ภ,๕	๔๛,๖	๔๛,๙
ลัถวิ	ภำมะภอม		๕๗,๛	๕ภ,๕	๕๙,๖
	พะมัภวาม				
	พะลาภอม		๑๛,๕	๔๔,๖	๔๖,๙
	ฆาวไธมา		๔๖,๑	๑ภ,๖	๑๗,๕
ภยภิสะ	ภำมะภอม	๔๑,๛	๔๑,๗	๕๔,๑	๕ภ,๙
ถาม	พะมัภวาม				
	พะลาภอม	๑๑,๙	๑๖,ภ	๑๛,๔	๔๑,๛
	ฆาวไธมา	๖๔,๔	๔๑,ภ	๔๙,๔	๔๐,๗
ตาถอุภิถ	ภำมะภอม	๑๗,๗	๗๑,๕	๔๐,ภ	๕๗,๐
สะถาม	พะมัภวาม				
	พะลาภอม	๛,๙	๑๔,๙	๑ภ,๛	๔๐,๖
	ฆาวไธมา	ภ๔,๕	๕๗,๕	๔๑,๑	๔๖,๗

สืบต่ตาตะลาง

๑	๘	๓	๔	๕	๖
อากเมนิ	ทำมะกอม	๑๒,๖	๔๑,๔	๕๒,๕	๖๔,๘
	พะนักงาม				
	พะลากอม	๑๓,๖	๘๐,๓	๘๓,๒	๘๖,๑
	อาวไธมา	๖๔,๑	๓๗,๕	๑๗,๑	๓,๗
ตอกเมนิก	ทำมะกอม	๘๖,๘	๓๒,๑	๔๐,๔	๔๔,๘
สะถาม	พะนักงาม				
	พะลากอม	๑๔,๔	๑๓,๓	๘๑,๓	๘๘,๘
	อาวไธมา	๕๖,๓	๔๘,๑	๓๗,๘	๓๓,๔
แอกสะโต	ทำมะกอม		๕๗,๒	๖๐,๒	๖๐,๓
นิ	พะนักงาม				
	พะลากอม		๘๑,๐	๘๕,๓	๘๒,๒
	อาวไธมา		๘๐,๖	๑๓,๑	๑๐,๘

พอกเธ็าเพ็มได้ว่า อยู่ในขันถาสาหาละมะลักสะพะ
พาบพ็วพมิถอว สสสอ มั้นส่อมปะกอบหาวด้าม สัวถิ้ม

ຂອງປະຊາກອນໄດ້ມີອັນເທົ່າທຽມກັນ ລວມທັງຢູ່ບ່ອນທີ່ ຄາວ ກ່ອນໄດ້ມີຊຸດສາທະກຳຂະຫຍາຍຕົວແລ້ວ ກໍຄືຢູ່ບ່ອນທີ່ບໍ່ເຄີຍມີ ຊຸດສາທະກຳມາກ່ອນ.

ໜຶ່ງໃນຈຳນວນຊົນຊາດທີ່ທຸກຍາກຫລ້າຫລັງລົ້ມຕາຍ ໄປ ຂອງປະເທດລັດເຊຍພະເຈົ້າຊານັ້ນ ແມ່ນຊົນຊາດຈູກຊີ ທີ່ພາ ກັນຕັ້ງພູມລຳເນົາຢູ່ພາກເໜືອສຸດຂອງປະເທດ ຊຶ່ງເປັນເຂດ ທີ່ມີລະດູໜາວເກືອບຕະຫລອດປີ. ພະຍາດຕ່າງໆໄດ້ລະບາດ ທຳລາຍຊີວິດຂອງພວກຂະເຈົ້າຢ່າງໜັກໜ່ວງ, ຍິ່ງໄປກວ່ານັ້ນ ບັນດາພໍ່ຄ້າລັດເຊຍກໍຄືອາເມລິກາກໍໄດ້ທຳ ການຂູດເມືອ ເຖືອໜັງພວກຂະເຈົ້າມາອີກ; ແລະ ຢູ່ບ່ອນນັ້ນເອງທີ່ພວກ ຜູ້ ເຖົ້າໄດ້ຈຳໃຈຂ້າຕົວຕາຍ ເພື່ອຈະໄດ້ປະຢັດອາຫານການກິນ ໃຫ້ເຜົ່າຊົນຂອງຕົນ. ຕົກມາໃນສູ່ມື ບັນດາປົ່ມຂຽນຂອງນັກ ຂຽນຄົນຈູກຊີ ຍູຣ໌ ຣົດແຄວ ໄດ້ຖືກແປອອກເປັນຫລາຍ ສິບ ພາສາຕ່າງປະເທດ, ຊາວຈູກຊີ ຍັງໄດ້ເປັນຕົວແທນປະຈຳຢູ່ ສະພາໂຊວຽດສູງສຸດແຫ່ງ ສສສຊ ກໍຄືແຫ່ງສະຫະພັນລັດເຊຍ, ພວກຂະເຈົ້າມີເຂດປົກຄອງ ດ້ວຍຕົນເອງເປັນຂອງຕົນເອງ, ຊາວຈູກຊີ ຍັງໄດ້ເປັນທັງນັກປາດ, ນາຍຝູ, ນາຍໝໍ ແລະ ນັກວິຊາການອື່ນໆອີກເປັນຈຳນວນບໍ່ໜ້ອຍເລີຍ.

ຄຽງຄູ່ກັບການຂະຫຍັບຕົວຕົວຈິງເຂົ້າຫາກັນຂອງ ບັນດາ ຊົນຊາດຊົນເຜົ່າທັງໝົດຂອງ ສສສຊ ອີງຕາມສະພາບ ການ ດຳລົງຊີວິດຂອງພວກຂະເຈົ້າແລ້ວ ກໍເຫັນໄດ້ວ່າ ມິດຕະພາບ ລະຫວ່າງຊົນຊາດຕ່າງໆແມ່ນສຸດທີ່ແໜ້ນແຟ້ນຍິ່ງກວ່າ ເວລາ ໃດໝົດ. ໃນຄາວເມື່ອກ່ອນຢູ່ໃນປະເທດລັດເຊຍສະໄໝພະ

ເຈົ້າອຸ ນັ້ນ ຖ້າຫາກເກີດມີກໍລະນີປະທະກັນໃດໜຶ່ງລະຫວ່າງ ອຸ ນອຸ ຕ່າງໆແລ້ວນັ້ນ ບໍ່ໄດ້ໝາຍຄວາມວ່າ ພວກຂຸ ເຈົ້າມີ ເຫດຜົນຕ້ອງຈຶ່ງເພື່ອທຳການປະຫັດປະຫານກັນແຕ່ຢ່າງໃດ ທັງ ສັ້ນເລີຍ. ແຕ່ຫາກເປັນຍ້ອນວ່າລັດຖະບານພະເຈົ້າຊ, ພວກ ສັກດິ ນ, ແລະ ພວກນາຍທຶ ນໄດ້ພາກັນກໍ່ເຫດການປະທະກັນ ຂຶ ນ ຕ່າງຫາກ ໂດຍປະຕິບັດຕາມຄຳຂວັນທີ່ວ່າ: "ແບ່ງ ແຍກ ແລ້ວປົກຄອງ". ໃນເມື່ອອຸ ນອຸ ຕ່າງໆທຳການປະຫັດ ປະ ຫານກັນແລ້ວ ເມື່ອນັ້ນພວກຮົ່ ມີທັງຫລາຍກໍຈະມີໂອກາດໄດ້ຂໍ ຄໍຂອງພວກຂະເຈົ້າໄດ້ຢ່າງງ່າຍດາຍທີ່ສຸດ...ຈາກການ ສະ ຫລາຍຕ້ອຂອງພວກນັກກໍ່ເລື ອງທັງຫລາຍທີ່ຍຸ ແຍ ໃຫ້ອຸ ນ ອຸ ຕ ໜຶ່ງກັບອີກອຸ ນອຸ ຕ ໜຶ່ງ, ອຸ ນ ເຜົ່າໜຶ່ງ ກັບອີກອຸ ນ ເຜົ່າໜຶ່ງ ຜິ ດ ແ ກັນນັ້ນ ເມື່ອນັ້ນອຸ ນອຸ ຕ ໜຶ່ງກໍຈະມີ ຈ ດ ໃ ຈ ເ ອ ເ ຝ ເພື່ອ ແ ຜ ຊ ວ ຍ ເ ຫ ລ ອ ອີ ກ ອຸ ນ ອຸ ຕ ໜຶ່ ງ , ຮ ອ ງ ຮ ອ ຍ ເ ສ ດ ເ ຫ ລ ອ ຂ ອ ງ ຄ ວ າ ມ ອ າ ຄ າ ດ ແ ລ ນ ກ ນ ທັ ງ ໝ ົ ດ ກ ໍ ຄ ລ ວ ມ ທ ັ ງ ຄ ວ າ ມ ຜ ິ ດ ຂ ອ ງ ໝ ອ ງ ໃ ຈ ກ ັ ນ ຢ ່ າ ງ ທ ຳ ມ ະ ດ າ ນ ັ ້ ນ ກ ໍ ສ ະ ຫ ລ າ ຍ ຕ ໍ ່ ໄ ປ . ມ ິ ດ ຕ ະ ພ າ ບ ອ ັ ນ ແ ທ ້ ຈ ິ ງ ແ ລ ະ ແ ໜ ້ ນ ແ ຟ ້ ນ ລ ະ ຫ ວ ່ າ ງ ອ ຸ ນ ອ ຸ ຕ ່ າ ງ ໆ ດ ້ ວ ຍ ກ ັ ນ ກ ໍ ເ ກ ີ ດ ມ ີ ຂ ຶ ນ . ສ ະ ຖ ິ ຕ ິ ຈ ະ ສ ະ ແ ດ ງ ໃ ຫ ້ ເ ຫ ັ ນ ເ ຖ ິ ງ ສ ິ ່ ງ ດ ັ ່ ງ ກ ່ າ ວ ດ ັ ່ ງ ຕ ໍ ່ ໄ ປ ນ ີ ້ : ອ ັ ດ ຕ າ ສ ່ ວ ນ ຂ ອ ງ ຄ ອ ບ ຄ ົ ວ ທ ີ ່ ຄ ູ ຜ ົ ວ ເ ມ ຍ ຕ ່ າ ງ ກ ໍ ເ ປ ັ ນ ອ ຸ ນ ອ ຸ ຕ ່ າ ງ ກ ັ ນ ນ ັ ້ ນ ກ ໍ ເ ພ ິ ່ ມ ສ ູ ງ ຂ ຶ ນ . ໃ ນ ປ ີ ໑ ໙ ๐ ການ ແ ຕ ່ ງ ງ ານ ກ ັ ນ ລ ะ ຫ ວ ่ າ ງ ອ ຸ ນ ອ ຸ ຕ ໜ ຶ ່ ງ ກ ັ ບ ອ ີ ກ ອ ຸ ນ ອ ຸ ຕ ່ ໄ ດ ້ ປ ະ ກ ອ ບ ມ ີ ๑๓,๕ % ຂ ອ ງ ຈ ຳ ນ ວ ນ ຄ ອ ບ ຄ ົ ວ ທ ັ ງ ໝ ົ ດ ໃ ນ ຂ ອ ບ ເ ຂ ດ ທ ົ ່ ວ ປ ະ ເ ທ ດ , ໃ ນ ຂ ອ ບ ເ ຂ ດ ຂ ອ ງ ຕ ົ ວ ເ ມ ື ອ ງ - ๑ ๗ , ๔ % . ອ ີ ງ ຕ າ ມ ຕ ົ ວ ເ ລ ກ ຂ ອ ງ ການ ສ ຳ ຫ ລ ວ ດ ພ ົ ນ ລ ะ ເ ມ ื ອ ง ເ ท ื ่ อ ส ุ ด ท ้ า ย ป ี ๑ ๙ ๗ ๒

ອັດຕາສ່ວນຂອງຄອບຄົວແບບນີ້ ໄດ້ເພີ່ມຂຶ້ນສູງເຖິງ ໑໔,໙% ໃນຂອບເຂດທົ່ວປະເທດ, ສ່ວນໃນຂອບເຂດຂອງຕົວເມືອງກໍ ໄດ້ເພີ່ມຂຶ້ນຮອດ ໑໒,໑%. ສະຫລຸບໄດ້ວ່າ ຢູ່ໃນຂອບເຂດ ທົ່ວປະເທດເກືອບຖືວ່າທຸກໆຫນຶ່ງໃນທຸກໆຫົກຄອບຄົວໃດ, ສ່ວນ ຢູ່ພາຍໃນຕົວເມືອງ ເກືອບຫນຶ່ງໃນທຸກໆຫ້າຄອບຄົວໃດ ແມ່ນ ເປັນຄອບຄົວທີ່ຄູ່ຜົວເມຍເປັນຄົນຕ່າງຊົນຊາດກັນ. ຕາມຄວາມ ຈິງແລ້ວ ເຫັນວ່າສິ່ງດັ່ງກ່າວນີ້ເກີດມີຂຶ້ນຢູ່ໃນເງື່ອນໄຂ ທີ່ວ່າ ບັນດາຊົນຊາດທັງຫມົດໄດ້ໃຊ້ຊີວິດຢູ່ກົນເປັນກຸ່ມກ້ອນ ທີ່ແຫ້ນ ຫນາຢູ່ໃນຂອບເຂດດິນແດນຂອງຕົນເທົ່ານັ້ນ ເພາະສະນັ້ນກາ ລະໂອກາດທີ່ຈະພົບພໍ້ຄູ່ຮັກຕ່າງຊົນຊາດກັນແມ່ນບໍ່ຫລວງຫລາຍ ພໍປານໃດ ໂດຍສະເພາະຢ່າງຍິ່ງແມ່ນຢູ່ຊົນນະບົດ !

ການຍົກຕົວຂຶ້ນສູ່ຍອດສູງສຸດຂອງວັດທະນະທໍາຂອງບັນດາ ຊົນຊາດທີ່ມີຄວາມຫຸ້ຍຍາກຫລາຍເລິ່ງທີ່ສຸດ, ການຮັດແຫ້ນມິດ ຕະພາບລະຫວ່າງຊົນເຜົ່າທັງຫມົດນັ້ນ ມັນເກີດມີຂຶ້ນໄດ້ຄືແນວ ໃດກັນແທ້ ?

ຜູ້ແຕ່ງປຶ້ມຫົວນີ້ ແມ່ນເປັນຄົນຊົນຊາດ ຕາຕາ. ລາວເກີດ ເຕີບໃຫຍ່ ແລະ ໄດ້ຮັບການສຶກສາຢູ່ລັດ ຕາຕາທີ່ປົກຄອງຕົນ ເອງແລະໄດຫລາຍກວ່າ ๔๐ ປີຜ່ານມາແລ້ວທີ່ລາວໄດ້ຢູ່ແລະ ເຮັດວຽກຢູ່ລັດ ບາສກ ປົກຄອງຕົນເອງທີ່ເປັນລັດໃກ້ຄຽງກັນ ກັບລັດ ຕາຕາ. ເພາະສະນັ້ນ ລາວຈຶ່ງຮູ້ຈັກກັບຊາຕາ ຊົນຊາດ ຂອງສອງຊົນຊາດ ມູຊະລິມ ພົ້ນອງໃກ້ຊິດກັນດ້ານພາສາປາກນ້ ເປັນຢ່າງດີ. ທຸກສິ່ງທຸກຢ່າງໄດ້ຜ່ານພົ້ນມາແລ້ວຄືແນວໃດນັ້ນ ເພິ່ນສາມາດເຫັນໄດ້ໃນຕົວຢ່າງຂອງພວກຂະເຈົ້າເອງ.

ນັບເປັນຫລາຍໆຮ້ອຍປີຜ່ານມາແລ້ວ ທີ່ຊາວຕາຕາ ໄດ້ເປັນຊົນຊາດທີ່ດຳລົງຊີວິດດ້ວຍການທຳມາຫາກິນ ທາງດ້ານການກະສິກຳ. ຊາວ ຕາຕາ ເປັນຊົນຊາດທີ່ມີຈຳນວນປະຊາກອນຫລາຍສົມຄວນ ແຕ່ວ່າທີ່ດິນ ພັດມີໜ້ອຍ, ທີ່ດິນ ເກືອບ ວ່າໄດ້ຮັ້ນເປັນກຳມະສິດຂອງພວກສັກດິນາລັດເຊຍ ແລະ ຕາ ຕາ ໂດຍທົ່ວໜົດ. ພວກຊາວໄຮ່ມາ ຕາຕາ ທີ່ທຸກຍາກ ໄດ້ ພາກັນຍົກຍ້າຍໜີໄປຢູ່ແຫ່ງອື່ນ ຍ້ອນຂາດທີ່ດິນທຳມາຫາກິນ. ໃນທ້າຍສະຕະວັດຜ່ານມານີ້ ຊາວຕາຕາ ນັບເປັນແສນໆ ຄົນ ໄດ້ພາກັນຫລົ່ງໄຫລໜີໄປເປັນຄົນຊຸດບ່ຖ່ານຫີນຢູ່ເຂດ ບ່ຖ່ານ ຫີນ ໂດເນດ, ໄປເຮັດວຽກຢູ່ອາວບ່ນ້ຳມັນຢູ່ເມືອງ ບາກູ , ໄປເປັນຄົນເຝົ້າຍາມ ແລະ ເປັນຄົນຮັບໃຊ້ຢູ່ເມືອງ ເປແຕກ ບວກ ແລະ ເມືອງມົດສະກູ, ພາກັນຍົກຍ້າຍໜີໄປແຈກຢາຍ ກັນຢູ່ຕາມແຫ່ງຫົນຕ່າງໆທົ່ວປະເທດ. ນອກຈາກນີ້ ບັນດາຊົນ ເຜົ່າຕາຕາ ຈຳນວນໜຶ່ງກໍໄດ້ພາກັນຕັ້ງພູມລຳເນົາຢູ່ເຂດ ຊີ ບີຣ, ຢູ່ເຂດທົ່ງພຽງ ໂກກາດພາກເໜືອ ຫລັບາງຜ່ອງກໍຖືກ ພວກກະສັດລັດເຊຍຍົກຍ້າຍໄປຢູ່ເຂດກາງຂອງປະເທດ ລັດ ເຊຍ ຄືຢູ່ແຂວງ ເຣັຍຊານ. ຊາວ ຕາຕາເປັນຈຳນວນຫຼວງ ຫລາຍ ໄດ້ກາຍເປັນກຳມະກອນຊຸດສາຫະກຳຢູ່ເມືອງກາຊານ, ເອລາບູກາ, ຈີສະໂຕໂປລ.

ຊາວຕາຕາ ເປັນຈຳນວນຫລວງຫລາຍໄດ້ເປັນພໍ້ຄ້າພາຍ ຫົນ ແລະ ພ້ອມດຽວກັນນີ້ກໍຍັງໄດ້ເປັນນັກປັນຍາຊົນ ນຳອີກ ເຖິງວ່າຈຳນວນບໍ່ຫລວງຫລາຍພໍເທົ່າໃດກໍດີ ແນ່ນອນ,ປັນຍາ ຊົນກໍມີອັນແຕກຕ່າງກັນ...ໃນເວລານັ້ນ ໄດ້ມີນັກກະວີຕາຕາ

